# ຄຳນຳ

*ບົດລາຍງານກ່ຽວກັບສິດທິມະນຸດໃນພາກປະຕິບັດ 2006*
*ເຜີຍແຜ່ໂດຍຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະແຮງງານ*
*ວັນທີ 6 ມີນາ, 2007.*

ທັງຊາຍ ແລະຍິງໃນທົ່ວໂລກພວມຮຽກຮ້ອງໃຫ້ມີອິດສະລະພາບທາງດ້ານບຸກຄົນແລະທາງດ້ານການເມືອງ ພ້ອມທັງມີການຮຽກຮ້ອງໃຫ້ມີການນຳໃຊ້ລະບົບການປົກຄອງແບບປະຊາທິປະໄຕຫຼາຍຂຶ້ນ. ພວກເຂົາ ພະຍາຍາມຕໍ່ສູ້ຜ່ານພ່າເພື່ອເຮັດໃຫ້ໄດ້ຮັບຜົນສົມກັບຄຳເວົ້າຂອງປະທານາທິບໍດີ ບຸດສ໌ ທີ່ວ່າ “ຂໍ້ຮຽກຮ້ອງ ດ້ານກຽດສັກສີມະນຸດ ທີ່ບໍ່ສາມາດຕໍ່ລອງໄດ້.”

ເຖິງວ່າມັນແມ່ນຄວາມສ່ຽງສ່ວນບຸກຄົນ ແລະຕ້ານກັບແນວຄິດຂອງຄົນສ່ວນໜ້ອຍ, ຍັງມີຫຼາຍບຸກຄົນທີ່ກ້າ ຫານ ແລະ ກຸ່ມອົງກອນທີ່ບໍ່ຂຶ້ນກັບລັດຖະບານໄດ້ເຜີຍແຜ່ການລະເມີດສິດທິມະນຸດ. ພວກເຂົາຊອກຫາ ຊ່ອງທາງປົກປ້ອງສິດຂອງຊົນຊາດຊົນເຜົ່າແລະກຸ່ມສາສະໜາ, ກຳມະກອນ ແລະ ແມ່ຍິງ, ພ້ອມທັງຊອກ ຫາຊ່ອງທາງສະກັດກັ້ນການຄ້າມະນຸດ. ພວກເຂົາທຸ່ມເທເຫື່ອແຮງເພື່ອສ້າງສັງຄົມທີ່ເປັນທຳ, ຮັບປະກັນ ການເລືອກຕັ້ງທີ່ເປັນທຳແລະມີອິດສະລະພາບ, ແລະ ພະຍາຍາມສ້າງປະຊາທິ ປະໄຕທີ່ຖືກຕ້ອງຕາມ ກົດໝາຍແລະເປັນຕົວແທນໃຫ້ແກ່ປະຊາຊົນ.

ບັນດາຜູ້ຮັກຊາດທີ່ມີຄວາມກະຕືລືລົ້ນເຫຼົ່ານັ້ນກຳລັງນິຍາມຄືນໃໝ່ຂອບເຂດຄວາມເປັນໄປໄດ້ທີ່ເຄີຍມີ ມາ. ໃນຕົວຈິງແລ້ວ ພາຍໃນພຽງແຕ່ໄລຍະເວລາ 2-3 ຊົ່ວຄົນ, ຄວາມເປັນອິດສະຫລະພາບໄດ້ຂະຫຍາຍ ໄປສູ່ບັນດາປະເທດພວມພັດທະນາຢ່າງກ້ວາງຂວາງ. ລະບອບຄອມມູນິດຜະເດັດການນັ້ນໄດ້ ຫລົ້ມສະ ຫລາຍ ແລະລະບອບປະຊາທິປະໄຕແບບໃໝ່ກໍຂະຫຍາຍຕົວຂຶ້ນ. ສິດທີ່ກຳນົດໄວ້ໃນ ສະຖາປະນາຈັກກະ ພົບແຫ່ງສິດທິມະນຸດໄດ້ຮັບການປົກປ້ອງຢ່າງຄົບຊຸດຢູ່ໃນຫຼາຍປະເທດ ຫຼາຍກວ່າທີ່ຜ່ານມາ.

ວຽກງານອັນລ້ຳເລີດດັ່ງກ່າວນີ້ ມີການສືບຕໍ່ ແຕ່ຍັງບໍ່ທັນສຳເລັດແລະກໍໄດ້ປະເຊີນໜ້າກັບອຸປະສັກ ຫຼາຍປະການ. ແນ່ນອນວ່າຜູ້ທີ່ຖືກນາບຄູ່ໂດຍການປ່ຽນແປງໄປສູ່ປະຊາທິປະໄຕນັ້ນ ຈະຕໍ່ຕ້ານກຸ່ມ ຄົນທີ່ຮຽກຮ້ອງແລະດຳເນີນການປະຕິຮູບ. ໃນປີທີ່ຜ່ານມາ ພວກເຮົາພົບເຫັນຄວາມພະຍາ ຍາມທີ່ຈະລົບ ກວນກຸ່ມປ້ອງກັນສິດທິມະນຸດແລະອົງກອນສັງຄົມຕ່າງໆ ພ້ອມທັງຈຳກັດຫຼືຢຸດການດຳເນີນງານຂອງເຂົາ ເຈົ້າ. ກົດໝາຍທີ່ບໍ່ເປັນທຳໄດ້ຖືກສ້າງຂຶ້ນເພື່ອເປັນອາວຸດຕໍ່ຕ້ານກັບແນວຄວາມຄິດເອກະລາດ. ພ້ອມ ກັນນັ້ນກໍໄດ້ມີຄວາມພະຍາຍາມປິດບັງເຊື່ອງຊ້ອນກະບອກສຽງຕໍ່ຕ້ານ ໂດຍນຳໃຊ້ມາດຕະການເໜືອ ກົດໝາຍ.

ເວລາໃດກໍ່ຕາມທີ່ມີການບຸກໂຈມຕີກຳລັງປ້ອງກັນສິດທິມະນຸດແລະບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບ ລັດຖະບານນັ້ນ, ອິດສະຫລະພາບ ແລະປະຊາທິປະໄຕ ກໍ່ຖືກລິດຖອຍລົງ. ສິ່ງດັ່ງກ່າວນັ້ນ ແມ່ນໜ້າທີ່ການ ພົວພັນການທູດຂອງພວກເຮົາໃນປະຈຸບັນ ແລະ ພວກເຮົາຫວັງວ່າ *ບົດລາຍງານກ່ຽວກັບສິດທິມະນຸດໃນ ພາກປະຕິບັດ 2006* ຂອງກະຊວງການຕ່າງປະເທດ ຈະຊ່ວຍຜັກດັນໃຫ້ມີຄວາມພະຍາຍາມເພີ່ມຂຶ້ນ. ບົນພື້ນ ຖານແນວຄວາມຄິດເຫຼົ່ານີ້ ຂ້າພະເຈົ້າຈຶ່ງສົ່ງບົດລາຍງານດັ່ງກ່າວນີ້ມາຍັງສະພາຄອນແກຣັສ ຂອງ ສະຫະລັດອາເມລິກາ.

ຄອນໂດເລັດຊາ ຣາຍຊ໌
ລັດຖະມົນຕີຕ່າງປະເທດ

## ສະພາບລວມ ແລະຄຳຂອບໃຈ

*ບົດລາຍງານກ່ຽວກັບສິດທິມະນຸດໃນພາກປະຕິບັດ 2006*
*ເຜີຍແຜ່ໂດຍຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະແຮງງານ*
*ວັນທີ 6 ມີນາ, 2007.*

### ເຫດຜົນຂອງການກຽມ ແລະຂຽນບົດລາຍງານ

ລາຍງານສະບັບນີ້ ຊຶ່ງໄດ້ກະກຽມໂດຍ ກະຊວງການຕ່າງປະເທດ ໄດ້ຂຽນຂຶ້ນມາເພື່ອຍື່ນໃຫ້ ສະພາຄອນແກຣັສ ແມ່ນເພື່ອປະຕິບັດຕາມພາກ116 (d) ແລະ 502B (b) ຂອງ ກົດໝາຍວ່າດ້ວຍການຊ່ວຍເຫຼືອໃຫ້ຕ່າງປະເທດສະບັບດັດແກ້ປີ 1961 (FAA) ໄດ້ກຳນົດໄວ້ວ່າ ລັດຖະມົນຕີຕ່າງປະເທດໂດຍບໍ່ໃຫ້ກາຍ ວັນທີ 25/2 ຈະຕ້ອງຍື່ນໄປຍັງປະທານສະພາຕ່ຳ ແລະຄະນະກຳມະການວ່າດ້ວຍການພົວພັນກັບຕ່າງປະເທດຂອງສະພາສູງ "ລາຍງານຄົບຖ້ວນກ່ຽວກັບສະຖານະພາບ ດ້ານການຮັບຮູ້ສິດທິມະນຸດໃນຂອບເຂດສາກົນ, ພາຍໃຕ້ເນື້ອໃນຄວາມໝາຍຂອງພາກຍ່ອຍຄື (A) ໃນບັນດາປະເທດທີ່ໄດ້ຮັບການຊ່ວຍເຫຼືອໃຕ້ພາກນີ້, ແລະ (B) ໃນບັນດາປະເທດອື່ນໆ ຊຶ່ງເປັນສະມາຊິກອົງການສະຫະປະຊາຊາດ ຊຶ່ງ ຖ້າບໍ່ດັ່ງນັ້ນ ພາຍໃຕ້ກົດໝາຍສະບັບນີ້ ກໍບໍ່ໄດ້ຢູ່ໃນເງື່ອນໄຂ ຈະຕ້ອງຖືກລາຍງານ". ພ້ອມນີ້ພວກເຮົາກໍໄດ້ລວມເອົາທັງບົດລາຍງານບາງປະເທດຕື່ມ ຊຶ່ງບໍ່ໄດ້ຢູ່ໃຕ້ປະເພດຕ່າງໆ ທີ່ກຳນົດໄວ້ໃນກົດໝາຍ, ແລະເມື່ອເປັນຄືແນວນັ້ນ ກໍແມ່ນສິ່ງທີ່ສະພາ ຄອນແກຣສ ບໍ່ໄດ້ຮຽກຮ້ອງ.

ຄວາມຮັບຜິດຊອບຂອງສະຫະລັດອາເມຣິກາ ທີ່ເປັນປາກສຽງກ່ຽວກັບເລື່ອງມາດຕະຖານດ້ານສິດທິມະນຸດໃນຂອບເຂດສາກົນ ແມ່ນໄດ້ຖືກຮັບຮູ້ເປັນທາງການໃນຕົ້ນຊຸມປີ 1970. ໃນປີ 1976, ສະພາ ຄອນແກຣັສໄດ້ຜ່ານກົດໝາຍ ຊຶ່ງເຮັດໃຫ້ມີການສ້າງຕັ້ງຜູ້ປະສານງານໃນວຽກງານສິດທິມະນຸດຢູ່ກະຊວງຕ່າງປະເທດຊຶ່ງຕໍ່ມາກໍໄດ້ຍົກຖານະຕຳແໜ່ງນີ້ຂຶ້ນເປັນຜູ້ຊ່ວຍລັດຖະມົນຕີຕ່າງປະເທດ. ໃນປີ 1994, ສະພາໄດ້ສ້າງຕັ້ງຕຳແໜ່ງທີ່ປຶກສາອາວຸໂສດ້ານສິດທິຂອງແມ່ຍິງຂຶ້ນມາ. ສະພາ ຄອນແກ້ຣສ ເອງກໍໄດ້ຂຽນບາງເນື້ອໃນເຂົ້າໃນກົດໝາຍໂດຍຮຽກຮ້ອງຢ່າງເປັນທາງການ ວ່າການອອກນະໂຍບາຍການຕ່າງປະເທດ ແລະການຄ້ານັ້ນຈະຕ້ອງຄຳນຶງເຖິງບັນຫາສິດທິມະນຸດ ແລະສິດທິກຳມະກອນຂອງປະເທດນັ້ນໆ ແລະລາຍງານດັ່ງກ່າວນັ້ນຈະຕ້ອງສົ່ງໄປຍັງສະພາຄອນແກຣັສ ໃນແຕ່ລະປີ ຊຶ່ງລາຍງານສະບັບທຳອິດໃນປີ 1977 ນັ້ນໄດ້ກວມເອົາ 82 ປະເທດ ຊຶ່ງໄດ້ຮັບການຊ່ວຍເຫຼືອຈາກສະຫະລັດ; ສຳລັບປີນີ້ການລາຍງານໄດ້ກວມເອົາ 196 ປະເທດ.

### ວິທີການກະກຽມສ້າງບົດລາຍງານ

ໃນປີ 1993, ລັດຖະມົນຕີຕ່າງປະເທດໄດ້ເພີ່ມທະວີຄວາມພະຍາຍາມໃນວຽກງານສິດທິມະນຸດຕື່ມອີກຢູ່ນຳບັນດາ ສະຖານທູດພວກເຮົາ. ທຸກໆພະແນກການໃນແຕ່ລະສະຖານທູດໄດ້ຖືກຮຽກຮອ້ງໃຫ້ປະກອບສ່ວນຊອກຫາຂ່າວຄາວທີ່ ຢືນຢັນລາຍງານດ້ານການລະເມີດສິດທິມະນຸດ, ທັງໄດ້ມີຄວາມພະຍາຍາມໃໝ່ເພື່ອເຊື່ອມວຽກແຜນງານເພື່ອຄວາມກ້າວໜ້າທາງສິດທິມະນຸດ ແລະປະຊາທິປະໄຕ. ໃນປີ 1994 ໄດ້ມີການຮັບຮູ້ຫ້ອງການ ເພື່ອສິດທິມະນຸດ ແລະວຽກງານມະນຸດສະທຳ ແລະໄດ້ມີການຈັດຕັ້ງຄືນແລ້ວເອີ້ນຊື່ໃໝ່ຄື ຫ້ອງການປະຊທິປະໄຕ, ສິດທິມະນຸດ ແລະແຮງງານ ຊຶ່ງເປັນການເຄື່ອນໄຫວສະທ້ອນໃຫ້ເຫັນວິທີການເຮັດວຽກທັງທາງກ້ວາງກວ່າ ແລະມີຈຸດສຸມຫຼາຍກວ່າໃນບັນຫາທີ່ພົວພັນເຖິງສິດທິມະນຸດ, ສິດທິກຳມະກອນ ແລະປະຊາທິປະໄຕ. ບົດລາຍງານກ່ຽວກັບສິດທິມະນຸດໃນພາກປະຕິບັດ 2006 ນີ້ເປັນຜົນງານຢ່າງຕັ້ງໜ້າ ຂອງພະນັກງານລັດຖະບານສະຫະລັດຫຼາຍຮ້ອຍຄົນ ທີ່ສັງກັດຢູ່ກະຊວງຕ່າງປະເທດ, ບັນດານັກການທູດ ແລະ ພະນັກງານລັດຖະບານສະຫະລັດຈາກພາກ ສວ່ນຕ່າງໆໃນນຶ່ງປີຜ່ານມາ.

ສະຖານທູດຂອງພວກເຮົາ ຊຶ່ງທຳການກະກຽມຮ່າງລາຍງານຂັ້ນຕົ້ນ ໄດ້ເກັບກຳຂໍ້ມູນຕະຫຼອດທັງປີຈາກແຫຼ່ງຕ່າງໆ ຂອງລະບົບການເມືອງ ລວມທັງໄດ້ມາຈາກພະນັກງານລັດຖະບານ, ນັກກົດໝາຍກໍຄືແຫຼ່ງ ກຳລັງທະຫານ, ນັກຂ່າວ, ຜູ້ຕິດຕາມເລື່ອງສິດທິມະນຸດ, ບັນດາອາຈານສອນ ແລະນັກເຄື່ອນໄຫວກ່ຽວກັບແຮງງານ. ວຽກເກັບກຳຂໍ້ມູນຂ່າວສານນີ້ ສາມາດເປັນວຽກທີ່ມີໄພອັນຕະລາຍ ໃນເວລາທີ່ພະນັກງານສະຖານທູດສະຫະລັດທຳການສືບຫາຂ່າວກ່ຽວກັບການລະເມີດສິດທິມະນຸດ, ຕິດຕາມການເລືອກຕັ້ງ ແລະຊ່ວຍຜູ້ທີ່ຕົກຢູ່ໃນຄວາມສ່ຽງ ເຊັ່ນ ຊ່ວຍຜູ້ບໍ່ເຫັນພ້ອມທາງດ້ານການເມືອງ ແລະຜູ້ປົກປ້ອງສິດທິມະນຸດ ຊຶ່ງສິດທິຂອງພວກເຂົາ ເອງກໍ່ຢູ່ໃນໄພອັນຕະລາຍໂດຍລັດຖະບານຂອງພວກເຂົາເອງ.

ພາຍຫຼັງທີ່ສະຖານທູດໄດ້ສຳເລັດການຮ່າງລາຍງານແລ້ວ, ບົດດັ່ງກ່າວກໍໄດ້ຖືກສົ່ງໄປ ວໍຊິງຕັນ ເພື່ອຈະໄດ້ທົບທວນຄືນຢ່າງລະອຽດ ໂດຍຫ້ອງການປະຊາທິປະໄຕ ສິດທິມະນຸດ ແລະແຮງງານ ໂດຍໄດ້ຮັບການຮ່ວມມືຈາກບັນດາຫ້ອງການຂອງກະຊວງຕ່າງປະເທດ. ພ້ອມໆກັບການຊອກຫາຂໍ້ຢັ້ງຢືນເພື່ອວິເຄາະ ແລະກວດແກ້ລາຍງານທີ່ຖືກສົ່ງມານັ້ນ, ເຈົ້າໜ້າທີ່ກະຊວງການຕ່າງປະເທດ ກໍຍັງມີແຫຼ່ງຂໍ້ມູນຂອງຕົນເອງຕື່ມອີກ. ຂໍ້ມູນຈຳພວກນີ້ ລວມມີບົດລາຍງານມາຈາກສະຫະລັດເອງ ກໍຄືລາຍງານມາຈາກກຸ່ມສິດທິມະນຸດອື່ນໆ; ເຈົ້າໜ້າທີ່ລັດຖະບານຕ່າງປະເທດ, ບັນດາຕາງໜ້າຈາກອົງການ ສປຊ ກໍຄືອົງການ ແລະສະຖາບັນສາກົນ ແລະທ້ອງຖິ່ນຕ່າງໆ, ບັນດາຊ່ຽວຊານຈາກມະຫາວິທະຍາໄລ ແລະສື່ມວນຊົນ.  ເຈົ້າໜ້າທີ່ເຮົາຍັງປຶກສາຫາລືກັບຜູ້ຊ່ຽວຊານກ່ຽວກັບສິດທິຂອງກຳມະກອນ, ປະເດັນບັນຫາກ່ຽວກັບຜູ້ອົບພະຍົບ, ຫົວຂໍ້ກ່ຽວກັບການທະຫານຕຳຫຼວດ, ບັນຫາເພດຍິງ ແລະກົດໝາຍ.  ຫຼັກການຊີ້ນຳໃນການປະຕິບັດງານນີ້ ແມ່ນຮັບປະກັນວ່າໄດ້ມີການປະເມີນຕີລາຄາຂໍ້ມູນກ່ຽວຂ້ອງທັງໝົດ ດ້ວຍວິທີພາວະວິໄສຄົບຖ້ວນ ແລະຍຸດຕິທຳເທົ່າທີ່ເປັນໄປໄດ້.

ລາຍງານຕ່າງໆບັນຈຸໃນເອກະສານຫົວນີ້ ຈະຖືກນຳໃຊ້ເປັນເອກະສານອ້າງອີງເພື່ອສ້າງນະໂຍບາຍ, ດຳເນີນວຽກງານການທູດ, ໃຕ້ການຊ່ວຍເຫຼືອ, ຝຶກອົບຮົມກໍຄືການກຳນົດຊັບພະຍາກອນຕ່າງໆ. ພ້ອມນັ້ນ ມັນກໍຈະຖືກໝູນໃຊ້ເປັນພື້ນຖານໃຫ້ແກ່ການຕັດສິນຮ່ວມມືລະຫວ່າງລັດຖະບານອາເມຣິກາ ແລະກຸ່ມເອກະຊົນເພື່ອສົ່ງເສີມໃຫ້ມີການປະຕິບັດເລື່ອງສິດທິມະນຸດຕາມມາດຕະຖານສາກົນ.

ບົດລາຍງານກ່ຽວກັບສິດທິມະນຸດໃນພາກປະຕິບັດສະບັບນີ້ ກວມເອົາເລື່ອງລາວສິດທິຂອງ ບຸກຄົນ, ສັງຄົມ, ການເມືອງ ແລະຂອງກຳມະກອນ ທີ່ສາກົນຮັບຮູ້ ດັ່ງທີ່ໄດ້ກຳນົດໄວ້ໃນຊຸດທີສີ່ ຂອງ ຖະແຫຼງການສາກົນກ່ຽວກັບສິດທິມະນຸດ. ບັນດາສິດເຫລົ່ານີ້ລວມມີອິດສະຫຼະພາບຈາກການຖືກທໍລະມານ ຫຼືການລົງໂທດແບບລົບລູ່ກຽດສັກສີ, ຈາກການຖືກກັກຂັງແບບຍາວນານ ໂດຍບໍ່ມີການກ່າວໂທດ, ຈາກການຫາຍສາບສູນ ຫຼື ຖືກນຳໄປຂັງຢູ່ສະຖານທີ່ປິດລັບ, ແລະຈາກການລະເມີດທີ່ໂຈ່ງແຈ້ງສິດເພື່ອການມີຊີວິດ, ອິດສະຫລະພາບ ແລະຄວາມປອດໄພຂອງບຸກຄົນ.

ໜ້າວຽກດ້ານສິດທິມະນຸດສາກົນ ແມ່ນຄວາມພະຍາຍາມຢາກນຳເອົາເລື່ອງກຽດສັກສີຂອງມະນຸດເຂົ້າຢູ່ໃນຂະບວນການເຮັດວຽກຂອງລັດຖະບານ ແລະກົດໝາຍ. ມະນຸດທຸກຄົນມີສິດທີ່ປະສະຈາກບໍ່ໄດ້ ເພື່ອໃຫ້ມີການປ່ຽນແປງລັດຖະບານຂອງຕົນ ດ້ວຍວິທີສັນຕິ ແລະເພື່ອມີອິດສະຫລະພາບພື້ນຖານ ເຊັ່ນ ອິດສະຫລະພາບໃນການສະແດງຄວາມຄິດເຫັນ, ການຈັດຕັ້ງສະມາຄົມ, ປະຊຸມ, ເຄື່ອນໄຫວໄປມາ ແລະສາດສະໜາໂດຍປະສະຈາກການຈຳແນກຍ້ອນເຫດຜົນເຊື້ອຊາດ, ສາດສະໜາ, ປະເທດຕົ້ນກຳເນີດ, ຫຼືຍ້ອນເພດ.  ສິດທິໃນການເປັນສະມາຊິກອົງການກຳມະບານ ແມ່ນເງື່ອນໄຂອັນຈຳເປັນສຳລັບສັງຄົມ ແລະເສດຖະກິດອິດສະຫລະເສລີ.  ດັ່ງນັ້ນບົດລາຍງານໄດ້ປະເມີນຕີລາຄາບັນດາສິດຕົ້ນຕໍຂອງກຳມະກອນ ຊຶ່ງເປັນ

ສິ່ງຮັບຮູ້ກັນໃນສາກົນ,  ລວມໃນນັ້ນກໍມີສິດໃນການສ້າງຕັ້ງສະມາຄົມ, ສິດໃນການຈັດຕັ້ງແລະຕໍ່ລອງແບບຮວມໝູ່, ການຫ້າມບໍ່ໃຫ້ໃຊ້ແຮງງານແບບບັງຄັບ ຫຼືແບບເກນ,  ສະພາບການນຳໃຊ້ແຮງງານເດັກ ແລະອາຍຸຕ່ຳສຸດທີ່ເດັກສາມາດເຮັດວຽກໄດ້ ແລະເງື່ອນໄຂການເຮັດວຽກທີ່ຮັບໄດ້.

ພາຍໃນຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະແຮງງານ ກໍມີພະນັກງານບັນນາທິການຂອງທີມງານສ້າງບົດລາຍງານ ຊຶ່ງປະກອບດ້ວຍ: ບັນນາທິການໃຫຍ່ - ຊຕີເຟີນ ໄອເຊິນ ໂບຣນ; ຫົວໜ້າຫອ້ງການ - ບລູສ ຄອນນັກ, ນາເດຍ ທົງກົວ ແລະ ຟຣານຊິສໂກ ພາເມຍຣີ; ບັນນາທິການອາວຸໂສ - ໂຈໂນທັນ ເບມີສ, ເດນຽນ ໂດລານ, ຊຕີເຟີນ ໄອເຊິນ, ເຈໂຣມ ໂຮການຊັນ, ແຊນດຣາ ເມີຟີ, ເອລີຊາເບັທ ແຮມບໍເຈີ, ຈູລີ ເທີນເນີ; ບັນນາທິການທົວໄປ- ຄູລຊຳ ອາລີ, ໂຈເຊັບ ຍາກຸດ, ເຄດ ເບີກລັນດ, ຊາຣາ ບັກເລ, ຣໍຣາ ກາເຣ, ເອລີຊ ຄາວເຊັນ, ຣາຍອັນ ເຈ ແຄສຕີລ, ແຊຣີລ ຄເລຕັນ, ຊາຣອນ ຊີ ໂຄກ, ຊູຊານ ຄໍຣຄ, ສຈູອາທ ຄເລມຕັນ, ທາມາຣາ ຄລູສ, ແຟຣກ ບີ ຄຣັມພ, ໂມລີ ດາວິດ, ດັກລາສ ບີ ເດຍບອນ, ໂຄດນີ ເດວລ, ຣໍເຣນ ດີຊີວວີໂອ, ໂຈອານ ຄານເນີ, ຊາບາ ໂກຣີ, ກາເຣນ ກົວບຣິດ, ອີລີອອດ ກົວເລີແມນ, ລີຊາ ເຮລເລີ, ວີກເຕີ ຮູເຊີ, ສຕານ ອິຟຊີນ, ເດວິດ ທີ ໂຈນສ, ສີມອນ ໂຈເຊັບພ, ຊໍລແມນ ຄານ, ແອນ ໄນ້ທ໌, ແຄດເທີຣີນກັດຈຕາ ໂຮບຣີງ, ຣໍເຣນ ເລສເຊີ, ເຈຊີກາ ລີເບີແມນ, ເກຣັກກໍຣີ ແມັກກີໂອ, ມິດເຊລ ໄມເຊີເນີ້, ເຈນນີ ມູໂນຊ໌, ເດເນຍລ ແອລ ນາເດລ, ແຄັດເທີຣີນ ນີວລີງ, ເອມີລີ ອອດສເວລ, ພີເທີ ຊໍວຈີນ, ເອມີ ຊມິດສຊູຣ, ແພທຣິດເຊຍ ມິກສ ຊເນລ, ໂຊນາມ ຊາ, ເວດດີ ຊີລເວີແມນ, ເມລີຊາ ຊີມສ, ເຈມສ ໂຕດ, ເທີຣີ ເທຣຊີ, ນິກໂຄລ ວີລເລັດທ, ວິດນີ ວີລຊັນ, ຊູຊານເນ ຍູນທຈີ ແລະ ໂຣເບີດ ຊູລເກ້; ບັນນາທິການຂຽນບົດ - ລີນ ເດວິດຊັນ; ຜູ້ຊວ່ຍບັນນາທິການ - ເອລລີຊ ເບີຣ໌ ເອດຽນ ໂບຣີ,  ຄາເຣນ ເຈນ, ແຄຣໍ ໄຟເນີຕີ້, ມິວຣີນ ຄາຟນີ້, ຊີລເວຍ ຣາມມອນ, ໂນເອລ ຣາດລີ, ຣໍຣາ ຈໍແດນ, ເດວິດ ເປເຣຊ, ລີນໄຊ ໂຣບິນຊັນ, ນິກໂຄລ ບິບບີນ ເສດາກ້າ, ຈູລີ ຊອດທ໌, ໂນຣາ ວາກາຣິວ, ແອມີລີ້ ວີເວີ້, ອີວາ ແວໂກດ ແລະ ເມໄລຄ ເຍັດເຄນ; ວິຊາການສະໜັບສະໜູນ - ລິນດາ ຊີ ເຮ້ເຢັດ, ພອລ ສໂກກຊີລາສ ແລະ ຕານີກາ ເອນ ວີລລີສ.

## ບົດນຳ

*ບົດລາຍງານກ່ຽວກັບສິດທິມະນຸດໃນພາກປະຕິບັດ 2006*
*ເຜີຍແຜ່ໂດຍຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະແຮງງານ*
*ວັນທີ 6 ມີນາ, 2007.*

ບົດລາຍງານຕ່າງໆນີ້ ໄດ້ບັນລະຍາຍສະພາບຂອງການປະຕິບັດ ຂອງບັນດາລັດຖະບານ ຕໍ່ຂໍ້ຜູກພັນສາກົນດ້ານສິດທິມະນຸດ. ບັນດາສິດທິພື້ນຖານເຫລົ່ານີ້ ໄດ້ສະທ້ອນໃຫ້ເຫັນໃນຖະແຫຼງການໂລກດ້ານສິດທິມະນຸດຂອງສະຫະປະຊາຊາດ, ປະທານາທິບໍດີ ບູສ ໄດ້ເອີ້ນວ່າ ມັນເປັນ "ຂໍ້ຮຽກຮ້ອງດ້ານກຽດສັກສີມະນຸດທີ່ບໍ່ສາມາດຕໍ່ລອງໄດ້." ກໍ່ເຊັ່ນດຽວກັນກັບ ທ່ານ ລັດທະມົນຕີ ທ່ານ ນາງ ໄຣຊ໌ ໄດ້ກ່າວໄວ້ວ່າ ຖະແຫຼງການ ໂລກດ້ານສິດທິມະນຸດຂອງສະຫະປະຊາຊາດ ແມ່ນບໍ່ສາມາດເຮັດໃຫ້ປະກົດຜົນເປັນຈິງພຽງແຕ່ຂ້າມຄືນໄດ້ ແຕ່ມັນເປັນວຽກງານອັນຮີບດ່ວນທີ່ ບໍ່ສາມາດນິ່ງນອນເສີຍໄດ້.

ຖະແຫຼງການສາກົນນີ້ພຽງແຕ່ຮຽກຮ້ອງໃຫ້ "ພົນລະເມືອງທຸກຄົນ ແລະແຕ່ລະອົງກອນຂອງສັງຄົມ... ໃຫ້ສົ່ງເສີມການນັບຖືບັນດາສິດທິ ແລະອິດສະຫລະພາບ ແລະໂດຍຜ່ານມາດຕະການເປັນຂັ້ນຕອນທັງພາຍໃນແລະສາກົນໃຫ້ມີການຮັບຮູ້ ແລະປະຕິບັດຖະແຫຼງການຢ່າງທົ່ວເຖິງມີປະສິດຕິຜົນໃນຂອບເຂດສາກົນ..."

ສະຫະລັດ ໄດ້ຖືເອົາຄຳໝັ້ນສັນຍາດ້ານສິດທິມະນຸດຂອງຕົນຢ່າງເອົາຈິງເອົາຈັງ. ພວກເຮົາຮັບຮູ້ວ່າ ພວກເຮົາ ກຳລັງຂຽນບົດລາຍງານສະບັບນີ້ໃນເວລາດຽວກັນກັບທີ່ ບັນທຶກລາຍງານ ແລະ ການ ກະທຳຂອງພວກເຮົາທີ່ຕອບໂຕ້ຕໍ່ພວກກໍ່ການຮ້າຍທີ່ໂຈມຕີພວກເຮົານັ້ນໄດ້ຖືກຖາມຂຶ້ນມາ. ສະຫະລັດອາເມຣິກາຈະສືບຕໍ່ຕອບໂຕ້ ເພື່ອຄວາມເປັນທຳ ແລະ ຄວາມເຊື່ອຖືຂອງຜູ້ອື່ນ ລວມທັງຄວາມຕັ້ງໃຈຂອງພວກເຮົາໃນ ການສົ່ງບົດລາຍງານເປັນລະໄລຍະຕາມເພື່ອໃຫ້ສອດຄອງກັບຄວາມຮັບຜິດຊອບພາຍໃຕ້ສົນທິສັນຍາສິດທິມະນຸດຕ່າງໆທີ່ພວກເຮົາມີສ່ວນຮ່ວມ. ພວກເຮົາຍັງໄດ້ໃຫ້ຄຳໝັ້ນສັນຍາວ່າຈະສືບຕໍ່ປັບປຸງໃຫ້ດີຂື້ນ. ຢູ່ສະຫະລັດອາເມລິກາ, ກົດໝາຍ, ນະໂຍບາຍ, ແລະການກະທຳທີ່ພົວພັນກັບການເກືອດຫ້າມ, ການແກ້ໄຂ ແລະການດຳເນີນຄະດີຂອງຜູ້ຖືກສົງໄສໃນຂໍ້ຫາກໍ່ການຮ້າຍ ໄດ້ຮັບການປັບປຸງຢ່າງຕໍ່ເນື່ອງໃນໄລຍະເວລາຫ້າປີທີ່ຜ່ານມາ. ລະບົບປະຊາທິປະໄຕແຫ່ງລັດຖະບານຂອງພວກເຮົາບໍ່ແມ່ນລະບົບສົມບູນຄົບຊຸດແຕ່ເປັນລະບົບທີ່ມີຄວາມ ຮັບຜິດຊອບ, ສັງຄົມທີ່ມີຄວາມໝັ້ນທ່ຽງ, ລະບົບສື່ມວນຊົນເສລີ, ສາຂາເອກະລາດແຫ່ງລັດຖະບານຂອງພວກເຮົາ, ແລະ ການນັບຖືລະບຽບກົດໝາຍ ແມ່ນເຄື່ອງມືທີ່ເຮັດໃຫ້ລະບົບລັດຖະບານຂອງພວກເຮົານັ້ນດຳເນີນຢ່າງຖືກຕ້ອງ.

ບົດລາຍງານ ດ້ານສິດທິມະນຸດຂອງແຕ່ລະປະເທດ ທີ່ມອບຫມາຍໂດຍສະພາຄອນແກຣັດ ຕໍ່ໄປນີ້ນັ້ນແມ່ນອົງປະກອບອັນສຳຄັນໃນຄວາມພະຍາຍາມຂອງສະຫະລັດອາເມລິການໃນການສົ່ງເສີມການນັບຖືສິດທິມະນຸດໃນຂອບເຂດທົ່ວໂລກ. ນັບວ່າເປັນເວລາເກືອບສາມທົດສະວັດແລ້ວ, ລາຍງານປະຈຳປີເຫລົ່ານີ້ໄດ້ຖືກນຳໄຊ້ຢ່າງກວ້າງຂວາງທີ່ສະຫະລັດ ແລະ ຕ່າງປະເທດ ເຊິ່ງເປັນຄືກັບເອກະສານອ້າງອີງເພື່ອໃຫ້ບັນລຸເຖິງການດຳເນີນງານທີ່ຄືບຫນ້າ ແລະ ຄວາມທ້າທາຍທີ່ຍັງຄົງຄ້າງຢູ່. ພວກມັນຍັງເປັນພື້ນຖານໃຫ້ແກ່ປະຕິບັດການຮ່ວມມືລະຫວ່າງບັນດາລັດຖະບານ, ອົງການຈັດຕັ້ງ, ແລະບຸກຄົນທີ່ຕ້ອງການຢາກຍຸດຕິການລະເມີດສິດຕ່າງໆ ແລະຊ່ວຍສ້າງຄວາມເຂັ້ມແຂງໃຫ້ບັນດາປະເທດໃຫ້ສາມາດປົກປ້ອງບັນດາສິດທິພື້ນຖານຂອງທຸກຄົນ.

ລາຍງານຊີ້ໃຫ້ເຫັນເຖິງສະພາບຜົນງານ ຂອງແຕ່ລະປະເທດໃນປີ 2006. ເຖິງຢ່າງໃດກໍຕາມ; ແຕ່ລະບົດລາຍງານສາມາດສະເໜີຕົວເອງ ແຕ່ຂະບວນການລວມແມ່ນຄືກັນຕາມການອະທິບາຍລຸ່ມນີ້ ໂດຍມີ

ການສະໜັບສະໜູນຈາກຕົວຢ່າງຂອງແຕ່ລະປະເທດ. ຕົວຢ່າງທີ່ພວກເຮົາໃຊ້ ແມ່ນເພື່ອເປັນການສະແດງ ເທົ່ານັ້ນ ແຕ່ບໍ່ສາມາດສະແດງໃຫ້ເຫັນທຸກໆເຫດການໄດ້.

**ແນວໂນ້ມທີ່ໃຫ້ຄວາມຫວັງແຕ່ສະພາບຕົວຈິງແມ່ນຍັງຄອນແຄນ**

ດັ່ງທີ່ອະທິບາຍໃນລາຍງານເຫລົ່ານີ້ສະແດງໃຫ້ເຫັນໃນປີ 2006 ທັງຊາຍແລະຍິງໃນທົ່ວໂລກໄດ້ສືບຕໍ່ ຜັກດັນ ເພື່ອໃຫ້ມີການເຄົາລົບສິດທິຂອງພວກເຂົາ, ເພື່ອໃຫ້ລັດຖະບານຂອງພວກເຂົາຕອບສະໜອງ ຮັບຟັງສຽງ ຂອງ ພວກເຂົາ ແລະ ເພື່ອໃຫ້ນັບຄະແນນສຽງເລືອກຕັ້ງຂອງພວກເຂົາ, ແລະ ກໍ່ເພື່ອກົດໝາຍ ແລະ ຄວາມຍຸດຕິທຳ ສຳລັບທຸກຄົນ. ພ້ອມກັນນັ້ນກໍໄດ້ມີການເຊື່ອຖືວ່າປະຊາທິປະໄຕເປັນພຽງແຕ່ ລະບອບການປົກຄອງປະເພດດຽວທີ່ຈະສາມາດຕອບສະໜອງຄວາມຮຽກຮ້ອງ ຕ້ອງການດ້ານມະນຸດ ສະທຳ, ຄວາມມີອິດສະຫລະພາບແລະຄວາມສະເໝີພາບຂອງປະຊາຊົນ. ນັ້ນ ຄືແນວໂນ້ມທີ່ເປັນຄວາມ ຫວັງຢ່າງຍິ່ງ ແຕ່ ສະພາບການຕົວຈິງກໍຍັງຄອນແຄນຢູ່:

**ອັນທີໜຶ່ງ, ຄວາມຄືບໜ້າດ້ານສິດທິມະນຸດແລະປະຊາທິປະໄຕແມ່ນເປັນສິ່ງທີ່ຫາຍາກ ແລະ ຍັງມີ ຫຼາຍສິ່ງທ້າທາຍ. ໃນຂະນະທີ່ຫຼາຍປະເທດມີຄວາມຄືບໜ້າທີ່ດີ ມີບາງປະເທດກໍ່ມີຄວາມຊັກຊ້າ ແລະ ບາງ ປະເທດກໍ່ຖືດຖອຍລົງກວ່າເກົ່າ.**

ຄືດັ່ງຕົວຢ່າງຕ່າງໆລຸ່ມນີ້ໄດ້ສະແດງໃຫ້ເຫັນ ປະເທດຕ່າງໆມີຜົນສຳເລັດທີ່ແຕກຕ່າງກັນຢ່າງຂາດຂັ້ນ, ອີງ ຕາມຄວາມແຕກຕ່າງໃນຫຼາຍປັດໄຈເຊັ່ນ ລະດັບຄວາມຕັດສິນໃຈຂອງລັດຖະບານ, ຄວາມສາມາດດ້ານ ສະຖາບັນ, ຂະໜາດຂອງການສໍ້ລາດບັງຫຼວງ ແລະ ຄວາມເຂັ້ມແຂງຂອງສັງຄົມ.

ລັດຖະບານ ພັກຍູນິທີ ເຊິ່ງເປັນລັດຖະບານທີ່ໄດ້ມາຈາກການເລືອກຕັ້ງແບບປະຊາທິປະໄຕ ໃນເດືອນ ມັງກອນ ປີ 2006 ທີ່**ໄລເບເຣຍ,** ນຳໂດຍທ່ານນາງ ເອເລນ ຈອນຊັນ ເຊີລີຟ ເຊິ່ງເປັນຜູ້ຍິງຄົນທຳອິດ ທີ່ເປັນ ປະມຸກລັດຢູ່ອັບຟຣິກາ, ເຊິ່ງໄດ້ເຂົ້າແທນທີ່ ລັດຖະບານໃນໄລຍະຂ້າມຜ່ານແຫ່ງຊາດໄລເບເຣຍ ທີ່ໄດ້ຮັບ ຜິດຊອບເປັນລັດຖະບານຊົ່ວຄາວ ນັບແຕ່ສົງຄາມກາງເມືອງທີ່ ໂຫດຮ້າຍ ກິນເວລາເຖິງ 14 ປີ ສິ້ນສຸດລົງໃນປີ 2003. ລັດຖະບານໄດ້ຖືເອົາບາດກ້າວອັນສຳຄັນ ເພື່ອປັບປຸງແກ້ໄຂ ບັນຫາສິດທິມະນຸດ ທີ່ຂາດຕົກບົກຜ່ອງໃນ ໄລຍະຜ່ານມາ, ເຊິ່ງລວມທັງການປະຕິບັດ ງານຮ່ວມກັບພາກສ່ວນ ສາກົນເພື່ອ ຟື້ນຟູ ຂະແໜງການຍຸດຕິທຳ ຂອງປະເທດແລະສ້າງຕັ້ງຫ້ອງການເພື່ອປົກປ້ອງ ສາທາລະນະຊົນ ໃນນະຄອນຫລວງ. ຄະນະປະທານໄດ້ປົດ ພະນັກງານລັດທະການທີ່ສໍ້ລາດບັງຫລວງຈຳນວນນຶ່ງອອກ ຈາກໜ້າທີ່ ຫລື ໄດ້ສັ່ງພັກງານຊົ່ວຄາວ. ຄະນະ ກຳມະທິການເພື່ອຄວາມເປັນຈິງ ແລະ ປອງດອງໄດ້ຖືກ ສ້າງຕັ້ງ ຂຶ້ນໃນປີ 2005 ເພື່ອສືບສວນ ຄວາມຮຸນແຮງ ທາງດ້ານສິດທິມະນຸດແລະອາດສະຍາກອນສົງຄາມ ທີ່ເກີດຂຶ້ນ ໃນຊ່ວງ ໄລຍະສົງຄາມກາງເມືອງນັ້ນ ກໍ່ເລີ່ມເກັບກຳ ຄຳໃຫ້ການຂອງພະຍານທີ່ເຫັນເຫດການ. ເຖິງແມ່ນວ່າຈະມີ ການດຳເນີນງານເຊັ່ນນີ້, ລີເບເຣຍກໍ່ຍັງຄົງປະເຊີນ ໜ້າກັບບັນຫາສິດທິມະນຸດທີ່ໜັກ ໜ່ວງ ແລະ ທ້າທາຍ, ລວມທັງຍັງມີລະບົບກົດໝາຍທີ່ອ່ອນແອ, ການສໍ້ລາດບັງຫລວງຂອງລັດ ແລະ ການບໍ່ລົງໂທດຜູ້ກະທຳຜິດ, ຄວາມຮຸນແຮງໂດຍພື້ນຖານທາງເພດແລະຄວາມທຸກຈົນທີ່ພາໃຫ້ເກີດມີ ແຮງງານເດັກ.

ການຄາດຕະກຳໂດຍກອງກຳລັງປະກອບອາວຸດ ແລະ ເຈົ້າໜ້າທີ່ຕຳຫລວດ ຍ້ອນເຫດຜົນທາງການເມືອງ ແມ່ນຍັງຄົງຫລຸດຜ່ອນລົງຫລາຍໃນ **ອິນໂດເນເຊຍ** ໃນປີທີ່ຜ່ານມາ. ມີການດຳເນີນການເລືອກຕັ້ງຢ່າງເສລີ ແລະ ຍຸດຕິທຳ 44 ຄັ້ງຢູ່ທັງລະດັບຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນເທດສະບານ ໂດຍສະເພາະແມ່ນໃນ

ເດືອນທັນວາ ຢູ່ທີ່ອາເຈະ, ເຊິ່ງເປັນເຂດທີ່ອະດີດຜູ້ບັນຊາການເຂດກອງໂຈນໄດ້ໄຊຊະນະໃນການເປັນຜູ້ນໍາ. ເຖິງແມ່ນວ່າ ຄວາມຮຸນແຮງທີ່ເກີດຂຶ້ນນັ້ນແມ່ນຍ້ອນຄວາມແຕກຕ່າງຂອງສາດສະໜາຂອງຫລາຍກຸ່ມຄົນທີ່ຢູ່ລວມກັນຈະ ລຸດລົງ, ແຕ່ມັນກໍ່ຍັງເປັນບັນຫາທີ່ຍືດເຍື້ອຢູ່ບາງຂົງເຂດ. ລັດຖະບານ ແລະ ສານຍຸດຕິທໍາກໍຍັງບໍ່ສາມາດ ປະເຊີນໜ້າກັບການລະເມີດ ແລະ ທໍາຮ້າຍຕໍ່ສິດທິມະນຸດທີ່ຜ່ານມາ ທັງຢູ່ໃນ ອິນໂດເນເຊຍ ແລະ ຕີມໍ ຕາວັນອອກ.

ບັນທຶກລາຍງານດ້ານສິດທິມະນຸດຂອງ **ໂມໂຣໂຄ** ແມ່ນສັງເກດເຫັນວ່າມີຄວາມຄືບໜ້າ, ເຖິງວ່າຈະຍັງ ມີບັນຫາທີ່ຍັງຄົງຄ້າງຢູ່. ລັດຖະບານໄດ້ເລີ່ມຕົ້ນຍົກເອົາບັນຫາສິດທິມະນຸດໃນເມື່ອກ່ອນຂຶ້ນມາດ້ວຍການໃຫ້ ການຊົດເຊີຍໂດຍຜ່ານສະພາທີ່ປຶກສາສິດທິມະນຸດໃນກໍລະນີສະເພາະໃນການຈັບກຸມຄຸມຂັງ, ການຫາຍ ສາບສູນ ແລະຖືກທໍາຮ້າຍ ໃນຊ່ວງລະຫວ່າງປີ 1956 ແລະ 1999. ໃນເດືອນ ເມສາ ລັດຖະບານໄດ້ອອກກົດໝາຍຕໍ່ຕ້ານ ການ ທໍລະມານ, ເຖິງວ່າຍັງຄົງມີລາຍງານການທໍລະມານຈາກໜ່ວຍງານກໍາລັງຮັກສາ ຄວາມປອດໄພຕ່າງໆກໍ່ ຕາມ. ໄດ້ມີການເປີດກວ້າງການໂຕ້ວາທີໃນສະຖານທີ່ສາທາລະນະ ແລະ ເຜີຍແຜ່ອອກທາງສື່ຕ່າງໆ, ເຖິງແມ່ນ ວ່າຍັງຄົງມີຂໍ້ຫ້າມດ້ານອິດສະຫຼະພາບຂອງສື່ມວນຊົນ ແລະການປາກເວົ້າ. ໃນໄລຍະປີຜ່ານມາລັດຖະບານໄດ້ ລົງໂທດສື່ມວນຊົນຈໍານວນໜຶ່ງທີ່ລະເມີດຂໍ້ຈໍາກັດອິດສະຫຼະພາບໃນການປາກເວົ້າ ແລະສື່ມວນຊົນຫລາຍຄົນ ກໍ່ໄດ້ປະຕິບັດການພິດຈາລະນາບົດຂ່າວດ້ວຍຕົນເອງ. ບັນຫາການຄ້າມະນຸດໂດຍສະເພາະແມ່ນການຫາຜົນປະໂຫຍດໂດຍການຄ້າທາງເພດ, ການຄ້າແຮງງານ ເດັກ ກໍ່ຍັງແມ່ນຂໍ້ກັງວົນທີ່ຍັງຄົງຄ້າງຢູ່, ແຕ່ເຖິງຢ່າງໃດ ກໍຕາມ ລັດທະບານ ແລະ ສັງຄົມກໍ່ໄດ້ເພີ່ມທະວີ ການປະຕິບັດໃນການແກ້ໄຂບັນຫາເຫລົ່ານີ້.

ສາທາລະນະລັດ **ປະຊາທິໄຕ ຄົງໂກ້** ໄດ້ຈັດການເລືອກຕັ້ງ ປະທານາທິບໍດີ ແລະ ການອອກກົດໝາຍແບບປະຊາທິປະໄຕ ເປັນຄັ້ງທໍາອິດໃນໄລຍະກວ່າ 45 ປີທີ່ຜ່ານມາ, ເຊິ່ງເຮັດໃຫ້ 3 ປີ ຂອງໄລຍະຂ້າມຜ່ານສົງຄາມກາງເມືອງສິ້ນສຸດລົງ. ລັດຖະທໍາມະນູນໃຫມ່ກໍ່ໄດ້ຖືກບັງຄັບໃຊ້. ເຖິງຢ່າງໃດກໍຕາມ ບັນທຶກລາຍງານດ້ານສິດທິມະນຸດກໍຍັງບໍ່ດີຂຶ້ນ. ນອກຈາກນັ້ນ ຍັງມີສະຖານະການຮຸນແຮງທີ່ເກືອບຈະ ຄວບຄຸມບໍ່ໄດ້ທີ່ພາກຕາເວັນອອກເຊິ່ງເປັນບ່ອນທີ່ການຄວບຄຸມຂອງລັດຖະບານຍັງບໍ່ເຂັ້ມແຂງ ແລະກຸມປະກອບອາວຸດຍັງສືບຕໍ່ລະເມີດສິດທິມະນຸດຢ່າງຮ້າຍແຮງ,ກອງກໍາລັງຮັກສາຄວາມປອດໄພຂອງລັດຖະບານທີ່ຂວ້າມມາຍັງປະເທດອື່ນ ກໍຍັງ ລະເມີດສິດທິມະນຸດຢ່າງຮ້າຍແຮງໂດຍບໍ່ມີຄວາມຜິດ.

ຢູ່ໃນ **ໄຮຕີ**, ປະຊາກອນໄດ້ສະແດງຈຸດຢືນຕໍ່ລະບອບປະຊາທິປະໄຕ ໂດຍຜ່ານການສໍາຫລວດຄະແນນນິຍົມ 3 ຄັ້ງໃນປີ 2006. ປະຊາກອນຫລາຍກວ່າ 3.5 ລ້ານຄົນ ໄດ້ລົງຄະແນນເພື່ອໃຫ້ມີການເລືອກຕັ້ງ ແລະກໍ່ມີ ຕົວເລກທີ່ໜ້າພະຈັບໃຈຕາມມາວ່າ 70 ສ່ວນຮ້ອຍຂອງປະຊາກອນ ທີ່ໄດ້ລົງຄະແນນເພື່ອໃຫ້ມີການເລືອກຕັ້ງ ໄດ້ເຂົ້າຮ່ວມການເລືອກປະທະນາທິບໍດີ ແລະ ສະມາຊິກສະພາຮອບທໍາອິດໃນຊ່ວງເດືອນກຸມພາ. ຫລັງຈາກ ການປະຕິບັດການເລືອກຕັ້ງທີ່ ໝັ້ນຄົງ ແລະ ປະສະຈາກຄວາມຮຸນແຮງ, ຜູ້ລົງຄະແນນສຽງໄດ້ເລືອກເອົາປະທານາທິບໍດີ ເຣເນ ພຣີວໍລ ແລະ 128 ຄະນະຜູ້ແທນຂຶ້ນນັ່ງສະພາ. ໃນຊ່ວງເດືອນທັນວາ ໄຮຕີ ໄດ້ຈັດດໍາເນີນການເລືອກຕັ້ງເຊິ່ງເປັນການເລືອກຕັ້ງຂັ້ນເທດສະບານຄັ້ງທໍາອິດໃນຮອບຫລາຍ ກວ່າ 10 ປີ . ເຖິງຢ່າງໃດກໍຕາມ ກໍ່ຍັງມີຫລາຍສິ່ງຫລາຍຢ່າງທີ່ຈະຕ້ອງໄດ້ເຮັດໃຫ້ສໍາເລັດເພື່ອຟື້ນຟູລະບົບກົດໝາຍ ບັງຄັບໃຊ້ ທັງໝົດຄືນໃຫມ່ . ລວມທັງກວດກາເບິ່ງຈຸດບົກຜ່ອງ ລະບົບກົດໝາຍຂອງໄຮຕີ ຢ່າງລະອຽດ ແລະ ສືບຕໍ່ໃຫ້ການບໍາລຸງ ແລະກວດກາພຶດຕິກໍາຂອງເຈົ້າໜ້າທີ່ຕໍາຫລວດໄຮຕີຄືນຢ່າງຖືກຖວນ.

ໃນ **ຢູເຄຼນ** ສັງເກດເຫັນວ່າມີການສືບຕໍ່ປັບປຸງເລື່ອງສິດທິມະນຸດ ພາຍຫຼັງເລີ່ມມີການປະຕິວັດສີນ້ຳໝາກກ້ຽງ. ຊ່ວງເດືອນມີນາ 2006 ການເລືອກຕັ້ງສະພາແມ່ນການເລືອກຕັ້ງທີ່ເປັນອິດສະຫລະທີ່ສຸດໃນ 15 ປີຂອງ ການເປັນອິດສະຫລະພາບ. ປະເທດ ຍັງຄົງສືບຕໍ່ປັບປຸງໃນເລື່ອງສິດເສລີພາບຂອງສື່ມວນຊົນ, ສິດເສລີພາບ ຂອງສະມາຄົມ ແລະ ການພັດທະນາສັງຄົມ. ເຖິງແມ່ນວ່າຈະມີຜົນເຊັ່ນນີ້ກໍ່ຕາມ, ຍັງມີຫລາຍບັນຫາທີ່ໜັກ ໜ່ວງຄົງຄ້າງຢູ່ເຊິ່ງລວມທັງການສໍ້ລາດບັງຫລວງຢູ່ທຸກສາຂາຂອງໜ່ວຍງານລັດຖະບານ.

ເຖິງວ່າປະເທດ **ກຽກກີສະຖານ** ສາມາດປັບປຸງສິດທິມະນຸດຂື້ນໄດ້ຫຼາຍສົມຄວນ ພາຍຫຼັງມີຜູ້ນຳທີ່ໄດ້ ຮັບການເລືອກຕັ້ງຢ່າງມີປະຊາທິປະໄຕໃນປີ 2005 , ໃນຊ່ວງໄລຍະ 1 ອາທິດໃນປີ 2006 ມີການເດີນປະທ້ວງຄັ້ງໃຫຍ່ເກີດຂື້ນ ທີ່ກົດດັນໃຫ້ມີການດັດແກ້ລັດຖະທຳມະນູນ ຊຶ່ງເຮັດໃຫ້ມີຄວາມເປັນໄປໄດ້ໃນການສ້າງລະບົບກວດກາທີ່ເໝາະສົມ. ໃນເດືອນທັນວາປີດຽວກັນ ສະພາປະຊາຊົນຜ່ານລັດຖະທຳມະນູນທີ່ທັບມ້າງລະບົບການກວດກາ. ລັດຖະບານຍັງໄດ້ຂົ່ມຂູ່ບັນດາອົງກອນທີ່ບໍ່ຂື້ນກັບລັດຖະບານທີ່ໄດ້ຮັບການສະໜັບສະໜູນຈາກຕ່າງ ປະເທດ.

ເຖິງວ່າປະທານາທິບໍດີ ມູຊາຣາພ ໄດ້ປະກາດການຕັດສິນໃຈໄປສູ່ການຫັນປ່ຽນປະຊາທິປະໄຕ ແລະເຂົ້າສູ່ສະພາບ "ສາຍກາງແບບສີວິໄລ" ສະພາບສິດທິມະນຸດຢູ່ **ປາກີດສະຖານ** ຍັງຄົງບໍ່ຄ່ອຍດີ. ການຈຳກັດອິດສະຫຼະພາບໃນການເຄື່ອນຍ້າຍໄປມາ, ໃນການສະແດງຄວາມເຫັນ, ຈັດຕັ້ງສະມາຄົມ ແລະຈຳກັດທາງດ້ານສາດສະໜາ. ການຫາຍສາບສູນຂອງນັກເຄື່ອນໄຫວ ແລະຕໍ່ຕ້ານທາງການເມືອງຢູ່ຕ່າງແຂວງກໍ່ຍັງຄົງມີຢູ່ ໂດຍສະເພາະ ແມ່ນຢູ່ແຂວງທີ່ເຄີຍມີຄວາມວຸ້ນວາຍ ແລະ ມີການກໍ່ກະບົດ. ກອງກຳລັງຮັກສາຄວາມ ປອດໄພຍັງສືບຕໍ່ດຳເນີນ ການສາມັນຄາດຕະກຳ. ການຈັບກູມ ແລະ ທໍລະມານຕາມລຳພັງໃຈຍັງຄົງແມ່ນ ເລື່ອງທຳມະດາ. ການສໍ້ລາດ ບັງຫລວງແມ່ນເລື່ອງທຳມະດາທົ່ວໄປແລະມີຢູ່ນັບແຕ່ລັດຖະບານໄປເຖິງ ຕຳຫລວດ. ໃນເບື້ອງບວກ ສະພາ ແຫ່ງຊາດ ແລະ ປະທານາທິບໍດີ ມູຊາຣາພ ໄດ້ອອກກົດໝາຍເພື່ອ ປົກປ້ອງແມ່ຍິງໃນເດືອນທັນວາເຊິ່ງເຮັດໃຫ້ ເປັນຄັ້ງທຳອິດໃນຮອບ 3 ປີ ທີ່ລັດຖະບານປາກີດສະຖານ ກັບມາການອອກກົດໝາຍປົກປ້ອງສິດທິຂອງແມ່ຍິງ ຈາກໄພອັນຕະລາຍໄດ້ສຳເລັດ. ກົດໝາຍດັດແກ້ວ່າດ້ວຍ ກົດຮຸດດູດ ຂໍ້ 1979 ການຂົ່ມຂືນທຳຮ້າຍ ແລະ ຄົບຊູ້ ຜິດປະເພນີ ນັ້ນ, ດັດແກ້ໂດຍການຍົກຍ້າຍ ຈາກການທຳຮ້າຍຈິດໃຈດວ້ຍການຂົ່ມຂືນທຳຮ້າຍຈາກກົດ ໝາຍ ຊາເຣຍ ຂອງ ປາກີດສະຖານມາເປັນກົດໝາຍອາດຍາຂອງປາກີດສະຖານ. ກົດໝາຍດັ່ງກ່າວຍັງ ໄດ້ລົບລ້າງການຮຽກຮ້ອງໃຫ້ຜູ່ຕົກເປັນເຫຍື່ອ ການຂົ່ມຂືນທຳຮ້າຍນັ້ນໃຫ້ສະແດງຜູ້ຊາຍທີ່ເຫັນເຫດການ 4 ຄົນເພື່ອນເນັ້ນໃສ່ການຕັ້ງຂໍ້ຫາ.

ເຖິງວ່າ **ອີຢິບ** ຈະຈັດການເລືອກຕັ້ງແບບຫລາຍພັກໃນປີ 2005 ເຊິ່ງເປັນຄັ້ງທຳອິດທີເຄີຍມີມາ, ແຕ່ສາທາລະນະຊົນກໍ່ຮຽກຮ້ອງໃຫ້ມີລະບອບປະຊາທິປະໄຕທີ່ມີເຂັ້ມແຂງ ແລະຮັບຜິດຊອບຫລາຍກວ່າ ແຕ່ບາງຄັ້ງກໍ່ຖືກລັດຖະບານໂຕ້ຕອບແບບຮຸນແຮງ. ການສືບຕໍ່ຈັບກຸມ ອະດີດຜູ້ສະໝັກຕຳແໜ່ງ ປະທານາທິບໍດີອາຍມານນູ ເຮັດໃຫ້ມີຄວາມກັງວົນເພີ່ມຂື້ນກ່ຽວກັບແນວທາງການປະຕິຮູບການເມືອງ ແລະ ລະບອບປະຊາທິປະໄຕພາຍ ໃນປະເທດ. ແນວໂນ້ມດັ່ງກ່າວນີ້ເລີ່ມຕົ້ນໃນປີ 2005 ເຊິ່ງລັດຖະບານໄດ້ຈັບກຸມຄຸມຂັງນັກເຄື່ອນໄຫວຫລາຍຮ້ອຍຄົນທີ່ເຂົ້າຮ່ວມພັກພີ່ນ້ອງມຸດສລິມ ທີ່ຖືກຫ້າມໃຫ້ເຄື່ອນໄຫວແຕ່ໃຫ້ນະໂຍບາຍຜ່ອນຜັນໃຫ້ມີພັກ, ແຕ່ໂດຍທົ່ວໄປຈະຖືກຂັງຫລາຍອາທິດ. ຜູພິພາກສາ ອາວຸໂສ ສອງທ່ານໄດ້ຖືກສອບສວນ ໃນຂໍ້ຫາຮຽກຮ້ອງ ເສລີພາບທາງກົດໝາຍ. ເຈົ້າໜ້າທີ່ຕຳຫລວດໄດ້ຈັບກຸມນັກເຄື່ອນໄຫວ 500 ກວ່າຄົນເພາະເຂົ້າຮ່ວມໃນການປະທ້ວງເພື່ອສະນັບສະໜູນເສລີພາບທາງດ້ານ ກົດໝາຍ. ນອກນັ້ນ ການລົງໂທດໂດຍການທໍລະມານຢ່າງຮຸນແຮງ ໂດຍເຈົ້າໜ້າທີ່ກໍ່ຖືກບັນທຶກໄວ້ໃນເອກະສານ. ລັດຖະບານຍັງໄດ້ຈັບກຸມ ແລະ ທຳຮ້າຍພວກເຈາະຂໍ້ມູນທາງ ອິນເຕີເນັດຈຳນວນໜຶ່ງ.

ໃນ **ກາຊັກສຖານ**, ລັດຖະບານໄດ້ຈຳກັດການປະຕິບັດວຽກງານຂອງພັກການເມືອງຝ່າຍຄ້ານ ດ້ວຍການບັງຄັບໃຊ້ຂໍ້ຮຽກຮ້ອງທີ່ ມີຄວາມຫຍຸ້ງຫຍາກລຳບາກແກ່ການລົງທະບຽນ ແລະຄັດຂວາງ ຫລື ປະຕິເສດການລົງທະບຽນເປັນພັກການເມືອງ. ການລວບລວມພັກການເມືອງກໍ່ເທົ່າກັບເປັນການສ້າງຄວາມເປັນຜູ້ນຳທີ່ເຂັ້ມແຂງ ຂອງ ປະທານາທິບໍດີ ນາຊາເບເຢບ ທີ່ມາຈາກພັກ ໂອຕານ ແລະກໍເຮັດໃຫ້ມີພື້ນທີ່ ສຳລັບມູມມອງທາງເລືອກ ທາງການເມືອງໃຫມ່ ແລະ ຜູ້ສະໜັບສະໜູນການປະຕິຮູບໜ້ອຍລົງ. ລັດຖະບານສ້າງເລື່ອງກໍ່ກວນພັກການ ເມືອງຝ່າຍຄ້ານ ໂດຍການກະຕຸ້ນໃຫ້ມີຂໍ້ກ່າວຫາທາງການເມືອງ ແລະ ຈຳກັດເສລີພາບຂອງສະພາ, ອອກກົດ ຫມາຍຈຳກັດສິດເສລີພາບສື່ມວນຊົນ ແລະ ກໍ່ກວນລັງຄວາມອົງການທີ່ບໍ່ຂຶ້ນກັບລັດຖະບານ.

**ລັດເຊຍ** ຍັງຄົງສືບຕໍ່ການຜູກຂາດອຳນາດໃນສາຂາອົງການການນຳ ລວມທັງການດັດແກ້ກົດໝາຍວ່າດ້ວຍການເລືອກຕັ້ງແລະກົດລະບຽບສຳລັບພັກການເມືອງຕ່າງໆ ທີ່ໃຫ້ອຳນາດອັນກ້ວາງຂວາງແກ່ລັດຖະບານໃນການຄຸ້ມຄອງ, ກວດກາ, ຈຳກັດ ແລະ ຍຸບພັກ. ໂດຍສົມທົບກັບກົດລະບຽບດູມາແຫ່ງລັດ, ການສໍ້ລາດບັງຫຼວງແລະການເລືອກຈັດຕັ້ງປະຕິບັດຂອງລະບຽບກົດໝາຍ, ຄວາມກົດດັນການເມືອງ ຕໍ່ອົງການໄອຍະການ ແລະ ຂໍ້ຈຳກັດຕໍ່ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ສື່ມວນຊົນ, ການປ່ຽນແປງດັ່ງກ່າວເຫຼົ່ານີ້ ໄດ້ສົ່ງຜົນສະທ້ອນໃຫ້ຄູນນະພາບຂອງລັດຖະບານເຊື່ອມລົງເລື້ອຍໆ. ຢູ່ເຈັກຈເນຍ ແລະ ເຂດອື່ນໆຂອງປະເທດໂຄກາຊັດເໜືອ, ຍັງຄົງມີການລະເມີດສິດທິມະນຸດຂະໜາດໃຫຍ່ ລວມທັງການຂ້າຄົນຢ່າງຜິດກົດໝາຍ ແລະ ການລະເມີດສິດຂອງປະຊາຊົນໂດຍກຳລັງ ຮັກສາຄວາມສະຫງົບສາທາລະນະລັດເຈັກຈເນຍ ແລະ ລັດຖະບານກາງ. ພວກຕໍ່ຕ້ານລັດຖະບານກໍສືບຕໍ່ວາງລະເບີດກໍ່ການຮ້າຍ ແລະການຫາຍ ສາບສູນຂອງຜູ້ຄົນຍ້ອນບັນຫາການເມືອງ ຍັງມີຢູ່ໃນຂົງເຂດ. ມີຫຼາຍກໍລະນີທີ່ເພີ່ມຂຶ້ນ, ສານເອີຣົບເພື່ອສິດທິມະນຸດຮຽກຮ້ອງໃຫ້ລັດເຊຍຮັບຜິດຊອບການລະເມີດຕ່າງໆ.

ຢູ່ໃນ **ເວເນຊູເອລາ** ລັດຖະບານຊາເວດຊ໌ ຍັງຄົງໃຫ້ອຳນາດທີ່ຫມັ້ນຄົງເຂັ້ມແຂງແກ່ສາຂາຫນ່ວຍງານຂັ້ນສູງ. ລັດຖະບານຍັງຄົງກໍ່ກວນຝ່າຍຄ້ານ ແລະ ອົງກອນທີ່ບໍ່ຂຶ້ນກັບລັດຖະບານ ແລະ ຍັງເຮັດໃຫ້ເສລີພາບ ດ້ານກົດຫມາຍອ່ອນເພຍລົງ. ບັນດານັກສັງເກດການນານາຊາດໄດ້ໃຫ້ວິຈານວ່າການເລືອກຕັ້ງປະທານາ ທິບໍດີ ໃນຊ່ວງເດືອນທັນວານັ້ນແມ່ນເປັນໄປແບບປະຊາທິປະໄຕ ແລະ ຍຸດຕິທຳ, ເຊິ່ງແມ່ນປະທານາທິບໍດີ ຊາເວດຊ໌ ໄດ້ຮັບໄຊຊະນະອີກເທື່ອນຶ່ງດ້ວຍຄະແນນສຽງ 63 ສ່ວນຮ້ອຍ. ໃນພິທີຮັບຕຳແຫນ່ງໃຫມ່, ປະທານາທິບໍດີ ຊາເວດຊ໌ ໄດ້ຮຽກຮ້ອງໃຫ້ລັດທະສະພາ ເຊິ່ງພັກຂອງເຂົາໄດ້ທີນັ່ງຮ້ອຍເປີເຊັນນັ້ນ ມອບອຳນາດໃຫ້ເຂົາໂດຍ ການປົກຄອງດ້ວຍອຳນາດສັ່ງການ.

ຢູ່ **ຟີຈີ** ແລະ **ໄທ**, ທະຫານໄດ້ໂຄ່ນລົ້ມລັດຖະບານປະຊາທິປະໄຕ ທີ່ໄດ້ມາຈາກການເລືອກຕັ້ງ.

**ອັນທີ່ສອງ, ຄວາມບໍ່ສະຫງົບທີ່ເກີດຈາກຄວາມຂັດແຍ່ງພາຍໃນ ແລະ ລະຫວ່າງປະເທດ ສາມາດກົດດັນ ຫຼື ທ່ວງດຶງຄວາມຄືບໜ້າຂອງສິດທິມະນຸດ ແລະ ລັດຖະບານປະຊາທິປະໄຕ.**

ເຖິງວ່າລັດຖະບານ **ອີຣັກ** ມີຄວາມຕັດສິນໃຈຢ່າງຕໍ່ເນື່ອງໃນການສ້າງຄວາມຖືກຕ້ອງປອງດອງ ແລະການກໍ່ສ້າງປະເທດຊາດ, ສືບຕໍ່ການເລືອກຕັ້ງ ແລະ ສ້າງສາຄວາມສັກສິດດ້ານກົດໝາຍ, ຊຶ່ງຂຶ້ນກັບຄວາມຮຸນແຮງລະຫວ່າງກຸ່ມ ແລະພຶດຕິກຳອັນບໍ່ດີຂອງກຸ່ມກໍ່ການຮ້າຍໄດ້ເປັນສາເຫດຕົ້ນຕໍທີ່ເຮັດໃຫ້ສິດທິມະນຸດມີການເຊື່ອມໂຊມ ແລະຄວາມຄືບໜ້າດ້ານການສ້າງປະຊາທິປະໄຕຢຸດສະງັກໃນປີ 2006. ເຖິງວ່າກົດໝາຍ ແລະລັດຖະທຳ ມະນູນອີຣັກສະໜອງໂຄງສ້າງທີ່ເຂັ້ມແຂງສຳລັບປົກປ້ອງສິດທິມະນຸດ, ກຸ່ມປະກອບອາວຸດສືບຕໍ່ບຸກໂຈມຕີ ສິດທິມະນຸດຈາກສອງດ້ານເຊັ່ນ ພວກຕໍ່ຕ້ານລັດຖະບານ ກຸ່ມກໍ່ການຮ້າຍອາວກາຍດາ ຊຶ່ງ

ເປັນກຸ່ມຄົນທີ່ເສດເຫຼືອຈາກລະບອບການປົກຄອງບາອາທິດສ, ແລະກຸ່ມກໍ່ຄວາມວຸ້ນວາຍທີ່ສະໜັບສະໜູນ ສົງຄາມ; ແລະ ສະມາຊິກກອງທັບ ແລະກຳລັງຮັກສາຄວາມສະຫງົບຂອງບັບດາກະຊວງ ໂດຍທົ່ວໄປຈະ ເຂົ້າຂ້າງລັດທະບານ--ເປັນຜູ້ທີ່ດຳເນີນການທາລຸນແລະ ການລະເມີດຕ່າງໆ.

ເຖິງວ່າ **ອາຟການີສຖານ**ໄດ້ຖືເອົາຄວາມຄືບໜ້າໃນດ້ານສິດທິມະນຸດເປັນວຽກງານທີ່ສຳຄັນນັບຕັ້ງແຕ່ ການ ຫລົ້ມສະຫລາຍຂອງພວກຕາລີບັນ ໃນປີ 2001, ແຕ່ບັນທຶກຜົນງານດ້ານສິດທິແມ່ນຍັງຄົງບໍ່ດີຂຶ້ນ. ມັນເປັນ ເຊັ່ນນີ້ກໍ່ເພາະຄວາມອ່ອນແອຂອງລັດທະທຳມະນູນຈາກສູນກາງ ແລະການກໍ່ກະບົດແບບ ນອງເລືອດ ຈາກພວກ: ພວກຕາລີບັນ, ພວກ ອາວກາຍດາ ແລະ ກຸ່ມພວກກໍ່ຄວາມຮູນແຮງໄດ້ເພີ່ມທະວີ ການບຸກໂຈມຕີ ເຈົ້າໜ້າທີ່ລັດຖະບານ, ກອງກຳລັງຮັກສາຄວາມສະຫງົບ, ອົງກອນອິດສະຫລະ, ບຸກຄົນທີ່ ເປັນເປົ້າໝາຍອື່ນໆ ແລະພົນລະເມືອງທີ່ບໍ່ມີອາວຸດ; ແລະ ພາຍໃນປີການເຮັດລາຍງານຕົວເລກຂອງ ການວາງລະເບີດແບບຂ້າໂຕຕາຍກໍ່ເພີ່ມຂຶ້ນຢ່າງ ຫລວງຫລາຍ ເຊັ່ນໄດ້ໂຈມຕີໂຮງຮຽນ ແລະ ຄູອາຈານ. ຍັງມີລາຍງານອອກມາ ຢ່າງຕໍ່ເນື່ອງກ່ຽວກັບການຈັບກຸມ ຄຸມຂັງແບບອຳເພີໃຈ, ການຕັດສິນຊີວິດເກີນກົດ ໝາຍ, ການທໍລະມານ ແລະ ສະພາບການທີ່ໂຫດຮ້າຍໃນຄຸກ. ໃນຊ່ວງເດືອນ ທັນວາ ປະທານາທິບໍດີ ກາໄຊ ໄດ້ດຳເນີນການປະຕິບັດແຜນການກົດໝາຍການປ່ຽນແປງພະວະເພື່ອແກ້ໄຂບັນຫາຄວາມ ຮູນແຮງ ຕໍ່ສິດທິມະນຸດໃນ ເມື່ອກ່ອນ ແລະ ສົ່ງເສີມຄວາມສາມາດຂອງລັດທະທຳມະນູນ ແລະ ລະບົບກົດໝາຍ.

ຄວາມຄືບໜ້າໃນການປະຕິຮູບທີ່ສຳຄັນຂອງ **ລີບັງ** ທີ່ຕາມມາຫລັງຈາກການລອບສັງຫານອະດີດ ປະທາ ນາທິບໍດີ ຮາຟິກ ຮາຣີຣີ ແລະ ການຖອນກຳລັງບາງຄັ້ງຄາວຂອງກອງທະຫານຊີຣີ ຫລັງຈາກເຂົ້າຄວບຄຸມ ເກືອບ 30 ປີ ແລະ ຖືກຂັດຂວາງນັບແຕ່ ການປະທະກັນລະຫວ່າງ ຮິດບາລະ ແລະ ອິດສະລາແອນໃນຊວງ ເດືອນ ກໍລະກົດ - ສິງຫາ 2006. ກ່ອນມີການປະທະກັນ ລັດຖະບານລີບັງໄດ້ເລີ່ມຕົ້ນກຳຈັດອັນທີ່ເປັນການ ກີດຂວາງ ການຮ່ວມມືທາງການເມືອງ ແລະ ພັກການເມືອງຕ່າງໆ. ຫລັງຈາກພວກຮິດບາລະບຸກເຂົ້າໄປໃນ ປະເທດ ອິດສະລະແອນ ໂດຍຜ່ານດິນແດນ ລີບັງພ້ອມທັງ ລັກພາຕົວ ແລະ ສັງຫານ ທະຫານ ອິດສະລະ ແອນ ຫລາຍຄົນ. ກອງກຳລັງທະຫານ ອິດສະລະແອນ ຈິ່ງຕອບໂຕ້ ດ້ວຍການເຂົ້າໄປດິນແດນ ລີບັງ. ການ ປະທະໄດ້ສິ້ນສຸດລົງ ຫລັງຈາກສະຫະປະຊາຊາດໄດ້ສະໜັບສະໜູນ ໃຫ້ມີການຢຸດຍິງ. ເຖິງແມ່ນວ່າຈະ ມີ ການຍຸດຍິງ ແລະການ ເຄື່ອນກອງກຳລັງທະຫານລີບັງ ແລະ ກອງກຳລັງທະຫານຊົ່ວຄາວ ຂອງສະຫະ ປະຊາ ຊາດເຂົ້າສູ່ພາກໃຕ້, ທະຫານອາສາສະໝັກ ແລະ ທະຫານຮິດບາລະ ຍັງຄົງກຳກັບ ແລະ ຄອບງຳ ໃນສ່ວນ ຕ່າງໆຂອງລີບັງ.

ຢູ່ **ຕີມໍຕາເວັນອອກ**, ການປະທະກັນຢ່າງໜັກ ແລະຕໍ່ເນື່ອງລະຫວ່າງກອງກຳລັງປ້ອງກັນຊາດ ແລະກອງ ທະ ຫານທີ່ຕໍ່ຕ້ານລັດຖະບານຫລາຍກຸ່ມ, ຕຳຫລວດ ແລະພົນລະເຮືອນໄດ້ກໍ່ໃຫ້ເກີດມີການແຜ່ລາມ ຂອງ ກຸ່ມຈໍ ລະຈົນ ແລະການກໍ່ຄວາມຮຸນແຮງຂອງພວກນັກເລງອັນທະພານຢູ່ໃນນະຄອນຫລວງ. ລັດຖະບານ ໄດ້ຂໍກຳລັງເສີມທະຫານຈາກ ອິດສະຕາລີ, ນີວຊີແລນ, ມາເລເຊຍ ແລະ ປໍຕຸເກດ ເຊິ່ງຄາດວ່າຈະຮັບ ຜິດຊອບໃນການຮັກສາຄວາມປອດໄພ ໃນນະຄອນຫລວງໄດ້. ວັນທີ 25 ສິງຫາ, ໜ້າທີ່ຮ່ວມຂອງສະຫະ ປະຊາຊາດ ເພື່ອຕີມໍຕາເວັນອອກໄດ້ເຂົ້າແທນທີ່ໜ້າທີ່ຮັບຜິດຊອບຂອງຕຳຫລວດ. ຄວາມຂັດແຍ່ງ ພາຍໃນຢູ່ ຕີມໍຕາເວັນອອກ ເປັນຜົນໃຫ້ມີການຍົກຍ້າຍໜີອອກຈາກ ຕີມໍ ປະມານ 150,000 ຄົນ ເຊິ່ງ ຫລາຍກວ່າ 15 ສ່ວນຮ້ອຍຂອງ ພົນລະເມືອງ.

**ອັນທີສາມ, ເຖິງແມ່ນວ່າພົນໄດ້ຮັບຈາກສິດທິມະນຸດແລະບັນດາຫຼັກການປະຊາທິປະໄຕໃນແຕ່ລະຂົງເຂດໃນທົ່ວໂລກ, ສ່ວນໃຫຍ່ຂອງມະນຸດສະທຳຍັງມີຊີວິດໃນທ່າມກາງການຢ້ານກົວແຕ່ຍັງເພີ້ຝັນຫາອິດສະຫລະພາບ.**

ບັນດາປະເທດມີອຳນາດຍັງມາໂຮມກັນຢູ່ໃນກຳມືຂອງຜູ້ປົກຄອງທີ່ບໍ່ມີຄວາມຮັບຜິດຊອບ --ບໍ່ວ່າ ຈະເປັນລະບອບທີ່ໃຫ້ອຳນາດສຸມຢູ່ໃນມືຂອງຜູ້ດຽວ ຫຼື ລະບອບພະເດັດການ-- ຍັງສືບຕໍ່ເປັນຜູ້ລະເມີດສິດທິມະນຸດທີ່ເປັນລະບົບທີ່ສຸດໃນໂລກ.

ໃນປີ 2006 **ເກົາຫລີເຫນືອ** ຍັງຄົງເປັນນຶ່ງ ຂອງປະເທດທີ່ໂດດດ່ຽວ ແລະ ໂຫດຮ້າຍປ່າເຖື່ອນທີ່ສຸດໃນໂລກ. ລະບອບດັ່ງກ່າວໄດ້ຄວບຄຸມທິດທາງການດຳເນີນຊີວິດຂອງປະຊາຊົນທັງຫມົດ ທັງປະຕິເສດສິດເສລີພາບ ໃນການປາກເວົ້າ, ສື່ມວນຊົນ, ຊຸມນຸມ, ອົງການຈັດຕັ້ງສະມະຄົມ ແລະ ສິດເສລີພາບໃນການເຄື່ອນຍ້າຍ ແລະສິດທິຊາວຜູ້ອອກແຮງງານ. ລັດທະທຳມະນູນຈັດໃຫ້ມີເສລີພາບດ້ານສາດສະໜາ, ແຕ່ໃນຕົວຈິງສິດ ເສລີພາບ ດ້ານສາດສະໜາແມ່ນບໍ່ປະກົດມີໃຫ້ເຫັນ. ມີຜູ້ຄົນປະມານ 150, 000 - 200,000 ຄົນ ລວມທັງຜູ້ທີ່ຖືກຄຸກ ຍ້ອນບັນຫາທາງການເມືອງ ຍັງຄົງຖືກກັກຂັງຢູ່ສູນດັດສ້າງ ແລະ ກໍ່ມີຜູ້ທີ່ຖືກຄຸກຍອັນບັນຫາ ທາງການເມືອງ ນັ້ນຕາຍຍອັນຖືກທໍລະມານ, ອຶດຫິວ, ຍ້ອນພະຍາດ ແລະ ປະປ່ອຍໃຫ້ຕາຍ.

ລັດຖະບານທະຫານຂອງ **ພະມ້າ** ໄດ້ເພີ່ມທະວີການນຳໃຊ້ໂທດປະຫານຊີວິດ, ການທາລຸນ, ການລະເມີດທາງເພດ, ການສະກັດກັ້ນໂດຍເຈດຕະນາ, ແລະການເຄື່ອນຍ້າຍປະຊາຊົນໂດຍການນາບຂູ່, ໂດຍສະເພາະແມ່ນຊົນເຜົ່າສ່ວນຫນ້ອຍ ເພື່ອຮັກສາອຳນາດຂອງຕົນ. ນັກໂທດແລະຜູ້ຖືກກັກຂັງໄດ້ຮັບການລະເມີດສິດຕະຫຼອດເວລາແລະຖືກກັກຂັງໄວ້ໃນເງື່ອນໄຂທີ່ເປັນພົນຮ້າຍຕໍ່ຊີວິດ. ການຄວບຄຸມ, ການລະເມີດ ແລະການຈັບກຸມພວກເຄື່ອນໄຫວທາງການເມືອງຍັງສືບຕໍ່. ນາງ ອອງ ຊານ ຊູ ຈີ, ຜູ້ທີ່ໄດ້ຮັບລາງວັນ ໂນແວວລ ແລະ ທັງເປັນ ຜູ້ນຳພັກຝ່າຍຄ້ານ ຍັງຄົງຖືກຕັດອອກຈາກໂລກພາຍນອກດ້ວຍການກັກບໍລິເວນພາຍໃນບ້ານ ແລະກໍ່ມີນັກໂທດຫຼາຍກ່ວາ 1,100 ຄົນເສຍຊີວິດຢູ່ໃນຄຸກ. ການນຳໃຊ້ແຮງງານບັງຄັບ, ການຄ້າມະນຸດແລະການເກນທະຫານໃນໝູ່ເດັກ ແລະ ການຈຳແນກ ທາງດ້ານສາສະໜາກໍຍັງມີຫຼາຍ. ລັດຖະບານປະຊຸມກັນ ຄືນໃຫມ່ ໃນກອງປະຊູມແຫ່ງຊາດ ຊາມ, ຄັດເລືອກຜູ້ເຂົ້າຮ່ວມ ແລະ ຫ້າມບໍ່ໃຫ້ມີການໂຕ້ວາທີ. ການ ຊັກຈູງວ່າເປັນສ່ວນໜຶ່ງຂອງ ແຜນການສ້າງປະຊາທິປະໄຕ, ກອງປະຊຸມແຫ່ງຊາດໄດ້ຈັດຂື້ນເພື່ອລົບລ້າງພົນຂອງການເລືອກຕັ້ງໃນປີ 1990 ແລະ ນຳໃຊ້ລັດຖະທຳມະນູນໃໝ່ເຊິ່ງເປັນລັດທະທຳມະນຸນທີ່ ເປັນລະບອບເພື່ອນມິດ. ລະບອບການເມືອງດັ່ງກ່າວມີຄວາມໂຫດຮ້າຍ ແລະ ລະບຽບການທີ່ບໍ່ຖືກຕ້ອງ ຊຶ່ງສິ່ງພົນສະທ້ອນໃຫ້ມີການເຕັ້ນໂຕນໜີຂະໜາດໃຫຍ່, ການແຜ່ລະບາດຂອງພະຍາດອັນຕະລາຍແລະ ການຄ້າຢາເສບຕິດ ແລະມະນຸດໄປ ຍັງ ປະເທດອ້ອມຂ້າງ.

ລັດຖະບານ **ອີລານ** ຈົງໃຈກະທຳຄວາມຮຸນແຮງຕໍ່ສິດເສລີພາຍດ້ານການປາກເວົ້າ ແລະ ການຊຸມນຸມ, ການເຂັ້ມງວດຢ່າງເອົາຈິງເອົາຈັງກັບພວກຕໍ່ຕ້ານ, ສື່ມວນຊົນ ແລະ ພວກນັກປະຕິຮູບ. ການເຂັ້ມງວດດັ່ງກ່າວນັ້ນປະກອບ ມີ ການຈັບກຸມ ແລະ ຄຸມຂັງຕາມລຳພັງໃຈ, ການທໍລະມານ, ການຫາຍສາບສູນ, ການໃຊ້ກຳລັງທີ່ ໂຫດຮ້າຍ, ການປະຕິເສດຄວາມເປັນທຳຂອງມະຫາຊົນ. ລັດຖະບານຍັງຄົງສືບຕໍ່ຄຸມຂັງ ແລະ ທຳຮ້າຍ ສາດສະໜາ ບາຮາອິສ ແລະ ສາດສະໜ້ານອັຍໆ ແລະ ຍັງຮັບເປັນເຈົ້າພາບຈັດປະຊຸມເພື່ອປະຕິເສດບໍ່ຮັບຮູ້ວ່າມີການ ທຳລາຍ ຊີວິດມະນຸດຄັ້ງໃຫຍ່ ເຊິ່ງກໍ່ມີການປະນາມຢ່າງກ້ວາງຂວາງ. ກ່ອນຈະເຖິງການເລືອກຕັ້ງສະພາຜູ້ຊຳນານງານ ໃນວັນທີ 15 ທັນວາ ຢູ່ອີລານ, ມີຜູ້ສະມັກຫລາຍກວ່າສອງສ່ວນສາມຂອງຜູ້ລົງສະຫມັກເຊິ່ງລວມທັງຜູ້ສະມັກເພດຍິງທັງຫມົດນັ້ນແມ່ນບໍ່ມີຄຸນນະສົມບັດພຽງພໍ

ຈຶ່ງເຮັດໃຫ້ບໍ່ມີການຊີງບ່ອນນັ່ງຕຳແໜ່ງຫລາຍໆບ່ອນ. ລັດຖະບານຍັງຄົງບໍ່ເຄົາລົບການຮຽກຮ້ອງຈາກພາຍໃນ ແລະຕ່າງປະເທດ ໃນປີ 2006 ເພື່ອໃຫ້ ຮັບຜິດຊອບໃນ ການສະໜັບສະໜູນພວກກໍ່ການຮ້າຍຢູ່ໃນຊີເຣຍ ແລະລີບັງຂອງ ລັດຖະບານເຊັ່ນດຽວກັບການປອງຮ້າຍ ລັດທີ່ເປັນສະມາຊິກສະຫະປະຊາຊາດ.

ຢູ່ປະເທດ **ຊິມບາໍເວ** ພາຍໃຕ້ລັດຖະບານຂອງມັງກາເບີສືບຕໍ່ການລະເມີດສິດທິມະນຸດ. ການສໍ້ລາດບັງຫຼວງ ທາງການເກີດຂື້ນຢ່າງກ້ວາງຂວາງ. ກົດລະບຽບຄວາມລັບ ແລະ ກົດລະບຽບຮັກສາຄວາມສະຫງົບ 2002 ຍັງມີຜົນສັກສິດ ແລະ ມີບາງຂໍ້ຍັງບໍ່ຖືກຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ໃນປີ 2006 ສະພາທີ່ໄດ້ຮັບການເລືອກ ແລະ ການເລືອກຕັ້ງສະພາຂັ້ນເມືອງ, ການດັດແປງຂະບວນການເລືອກຕັ້ງຂອງລັດຖະບານສ້າງຄວາມແຕກແຍກໃນກຸ່ມຜູ້ອອກສຽງ ແລະ ເຮັດໃຫ້ການເລືອກຕັ້ງເປັນເຄື່ອງ ມືຮັບໃຊ້ຂອງນັກການເມືອງທີ່ຢູ່ໃນພັກການນໍາ. ການຄອບງໍາຂອງພັກກໍາອໍານາດສ້າງໃຫ້ມີການປ່ຽນແປງທາງດ້ານລັດຖະທໍາມະນູນໂດຍບໍ່ມີການປຶກ ສາຫາລືຢ່າງກ້ວາງຂວາງ. ກໍາລັງຮັກສາຄວາມສະຫງົບລະເມີດ, ທໍາຮ້າຍ ແລະຈັບກຸມນັກວິຈານ ແລະສະມາຊິກຜູ້ສະໜັບ ສະໜູນຝ່າຍຄ້ານ. ຍັງມີການລົບກວນຢູ່ເຂດທີ່ດິນທໍາມາຫາກິນ ແລະ ການຍຶດຊັບຍັງສືບ ຕໍ່ແລະ ບາງຄັ້ງກໍເກີດມີຄວາມຮຸນແຮງ. ໃນປະຕິບັດການໃຊ້ກໍາລັງເພື່ອຂັບໄລ່ປະຊາຊົນອອກຈາກ ທີ່ດິນ ເຮັດໃຫ້ມີ 700,000 ຄົນຂາດທີ່ຢູ່ອາໄສ ໃນໄລຍະການປະຕິບັດຄໍາສັ່ງ ປີ 2005 ໃນປະຕິບັດການ ເພື່ອ ຄວາມເປັນລະບຽບຄືນໃໝ່ ແລະຍັງ ຄົງສືບຕໍ່ຢູ່ໃນຂະໜາດນ້ອຍ. ລັດຖະບານໄດ້ເຂົ້າແຊກແຊງຄວາມພະຍາຍາມໃຫ້ການຊ່ວຍເຫຼືອຂອງອົງກອນ ເພື່ອມະນຸດສະທໍາ. ໃນເດືອນທັນວາ ມູກາເບ ແລະຜູ້ສະໜັບ ສະໜູນໄດ້ສະເໜີໃຫ້ມີການຕໍ່ເວລາດໍາລົງຕໍາແໜ່ງ ຂອງເຂົາອີກຕື່ມສອງປີໂດຍການເລື່ອນ ເວລາການເລືອກຕັ້ງປະທານປະເທດໄປເປັນປີ 2010.

ໃນ **ກູບາ**, ລັດຖະບານ ນໍາພາຊົ່ວຄາວໂດຍ ຣາອູ ຄາດສໂຕຣ ເຊິ່ງເປັນເພາະການເຈັບປ່ວຍຂອງ ພີເດວລ ຄາດສໂຕຣ ນັ້ນຍັງຄົງທໍາຮ້າຍສິດທິຂອງພົນລະເມືອງໃນເກືອບທຸກດ້ານ, ລວມທັງ ສິດທິພື້ນຖານທີ່ ສໍາຄັນໃນການປ່ຽນແປງລັດຖະບານຂອງພວດເຂົາຢ່າງສັນຕິວິທີ ຫລືຕໍານິການປະຕິວັດ ຫລື ຜູ້ນໍາຂອງພວກເຂົາ. ໃນປີ 2006 ລັດຖະບານໄດ້ເພີ່ມທະວີການຂົ່ມຂູ່ພວກຕໍ່ຕ້ານ ແລະ ພົນລະເມືອງຜູ້ທີ່ມີມູມມອງທີ່ເປັນໄພ ຕໍ່ລັດຖະບານ, ຫລາຍຄັ້ງແມ່ນການຂົ່ມຂູໂດຍການປະຕິບັດການປາບປາບກຸ່ມຝຸງຊົນທີ່ເອີ້ນວ່າ “ການປະພຶດທີ່ບໍ່ຍອມຮັບ” ເຊິ່ງກຽ່ວຂ້ອງກັບການທໍາຮ້າຍທົ່ວໄປ, ແລະການທໍາຮ້າຍຮ່າງກາຍ. ການຕົບຕີ ແລະ ທໍາຮ້າຍຜູ້ຖືກຄຸມຂັງ ແລະ ຄົນໂທດ ນັ້ນຍັງກະທໍາໂດຍບໍ່ມີຄວາມຜິດ. ເຖິງວ່າຈະມີການປ່ອຍຕົວນັກໂທດໃນໄລຍະປີທີ່ເກັບກໍາລາຍງານ, ແຕ່ຢ່າງໜ້ອຍຍັງມີ 283 ຄົນທີ່ເປັນນັກໂທດການເມືອງ ແລະ ນັກໂທດທົ່ວໄປຍັງຖືກຂັງຢູ່ໃນຊ່ວງທ້າຍປີ, ເຊິ່ງລວມທັງ ຜູ້ຄົນຈໍານວນ 59 ຂອງນັກໂທດທັງໝົດ 75 ຄົນທີ່ ເຄື່ອນໄຫວເພື່ອລິເລີ້ມປະຊາທິປະໄຕ ແລະ ຜູ້ເຄື່ອນໄຫວດ້ານສິດທິມະນຸດທີ່ໄດ້ຕິດຄຸກໃນຊ່ວງການ ປະທະກັນໃນເດືອນມີນາ 2003.

ບັນທຶກລາຍງານສິດທິມະນຸດຂອງ **ຈີນ** ແມ່ນເສື່ອມໂຊມລົງໃນບາງຂົງເຂດໃນປີ 2006. ຕົວເລກຂອງກໍລະນີທີ່ຮັບຮູ້ກັນດີ ເຊິ່ງລວມມີ ການຕິດຕາມ, ການຂົ່ມຂູ, ຈັບກຸມ ແລະ ການຈັບນັກເຄືອນໄຫວທາງການເມືອງ ແລະ ສາດສະໜາ, ສື່ມວນຊົນ, ແລະ ນັກຂຽນເຂົ້າຄຸກ ແລະ ກໍ່ເຊັ່ນດຽວກັບນັກກົດໝາຍຕໍ່ສູ້ຄະດີທີ່ພະຍາຍາມໃຊ້ສິດທິຂອງເຂົາພາຍໃຕ້ກົດໝາຍ. ຄອບຄົວຂອງພວກເຂົາເຈົ້າຈໍານວນນີ້ງຍັງຖືກຂົ່ມຂູ່ ແລະ ຈັບກຸມ. ການໂຮມຊຸມນຸມປະທ້ວງຂອງຜູ້ຄົນເປັນຈໍານວນຫລວງຫລາຍທີ່ຮຽກຮ້ອງໃຫ້ແກ້ໄຂຄວາມເດືອນດຮ້ອນຍັງຄົງ ດໍາເນີນຢູ່ ແລະ ບາງກໍລະນີກໍ່ຖືກຢັບຢັ້ງດວ້ຍຄວາມຮູນແຮງ. ລັດຖະບານໃໝ່ ຄວບຄຸມເອົາປຽບ ອົງກອນອິດສະຫລະ, ສື່ມວນຊົນ, ລວມທັງອິນເທີເນັດ ແລະ ຄວບຄຸມສານ ແລະ

ຂະບວນການຍຸດຕິທຳ. ການຄວບຄຸມ ກຸ່ມສາດສະໜາ ທີ່ບໍ່ໄດ້ລົງທະບຽນ ແລະ ກຸ່ມຊົນເຜົ່ານ້ອຍ ໂດຍສະເພາະແມ່ນ ພວກ ອູອີງເຮີ ແລະ  ທິເບດ ຍັງຄົງເປັນບັນຫາທີ່ຍັງກັງວົນຢ່າງໃຫຍ່ຫລວງ.

ໃນ **ເບລາຣຸສ** ລັດຖະບານ ລູກາເຊັງໂກ ຍັງຄົງດຳເນີນກິດລະບຽບການຄວບຄຸມດຢ່າງຈິງຈັງ. ການເລືອກຕັ້ງ ປະທານາທິບໍດີໃນເດືອນເມສາແມ່ນມີຈຸດບົກຜ່ອງທີ່ສຸດ. ມີຜູ້ຄົນນັບ 1,000 ຖືກຈັບຫລັງຈາກເຫດການ ຄວາມຮຸນແຮງຕໍ່ມວນຊົນທີ່ປະທ້ວງບໍ່ພໍໃຈຕໍ່ຜົນເລືອກຕັ້ງ ແລະຫລາຍຄົນຖືກຕັດສິນຈຳຄຸກໄລຍະສັ້ນ. ມີນັກເຄື່ອນໄຫວ ແລະຝ່າຍຄ້ານຫລາຍຄົນເຊັ່ນລວມທັງ ອາເລັກຊານເດີ ໂກຊລິນ ຜູ້ທີ່ລົງສະໝັກຊິງຕຳແໜ່ງປະທານາທິບໍດີ ສູ້ກັບລູກາເຊັງໂກ ໄດ້ຖືກຕັດສິນຈຳຄຸກເປັນເວລາລະຫວ່າງ 2 ເຖິງ  5 ປີເຄິ່ງ.

ລັດຖະບານປະເທດ **ອີຣີເຕຣຍ** ສືບຕໍ່ເປັນລັດຖະບານທີ່ມີຄວາມທິດຖອຍຫຼາຍທີ່ສຸດໃນເຂດ ຊະຫະລາ ອາຟຣິກາ ແລະ ວຽກງານສິດທິມະນຸດກໍ່ຍິ່ງເຊື່ອມໂຊມລົງໃນປີ 2006. ກຳລັງປ້ອງກັນຄວາມສະຫງົບຂອງລັດຖະບານດຳເນີນການຂ້າລ້າງຜານຢ່າງຮຸນແຮງ; ມີລາຍງານຢ່າງຫລວງຫລາຍຈົນບໍ່ໜ້າເຊື່ອວ່າມີການບຸກໂຈມຕີບຸກຄົນທີ່ພະຍາຍາມຂ້າມຊາຍແດນອີທິໂອປີ. ລັດຖະບານໄດ້ເພີ່ມການປະຕິບັດການການຈັບກຸມຜູ້ຫລົກລ້ຽງ ບໍ່ຍອມເປັນທະຫານພັນທະ ແລະຍາດຕິພີ່ນ້ອງຂອງເຂົາເຈົ້າ, ແລະ ກໍມີຫຼາຍການລາຍງານທີ່ຊີ້ບອກວ່າພວກ ທີ່ຖືກຈັບກຸມນັ້ນໄດ້ຖືກທໍລະມານຄົນໂທດ. ໃນປີ 2005 ລັດຖະບານສັ່ງການຫລາຍອົງກອນທີ່ບໍ່ຂື້ນກັບລັດຖະບານເພື່ອມະນຸດສະທຳສາກົນໃຫ້ອອກຈາກປະເທດ ເຖິງວ່າມີໄພແຫ້ງແລ້ງຢູ່ອາຟຣິກາ. ການຈຳກັດສິດອິດສະຫລະພາບທາງດ້ານສາດສະໜາກໍຍັງສືບຕໍ່ຢ່າງຢູ່.

**ຄວາມເປັນຈິງທີ່ຍັງຄອນແຄນອັນທີສີ່ແມ່ນມີຢູ່ວ່າ ໃນຂະນະທີ່ ທົ່ວໂລກ ກົດດັນໃຫ້ມີສິດເສລີພາບສ່ວນບຸກຄົນຫລາຍຂື້ນ ແລະ ເສລີພາບທາງການເມືອງເຂັ້ມແຂງຂື້ນນັ້ນ ມັນກໍ່ກຳລັງພົບກັບການຕໍ່ຕ້ານທີ່ເພີ່ມຂື້ນຢ່າງຕໍ່ເນື່ອງຈາກກຸ່ມຄົນທີ່ຮູ້ສຶກວ່າຕົນເອງກຳລັງ ຂົ່ມຂູ່ຈາກການປ່ຽນແປງທາງດ້ານການເມືອງແລະສັງຄົມ.**

ຜູ້ປົກປ້ອງສິດທິມະນຸດແລະອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານແມ່ນຫົວໃຈອັນສຳຄັນຕໍ່ຜົນສຳເລັດຂອງປະຊາຊາດ. ຢູ່ໃນໂລກປະຈຸບັນ, ບັນຫາທີ່ລັດຕ່າງໆປະເຊີນໜ້າຢູ່ມີຄວາມສັບສົນຫຼາຍຂື້ນ ທີ່ບໍ່ອາດແກ້ໄຂໄດ້ໂດຍລັດທີ່ມີອຳນາດໃດໜຶ່ງພຽງຜູ້ດຽວ. ຄວາມພະຍາຍາມຂອງສັງຄົມ ແລະ ການໄຫຼວຽນຢ່າງເສລີຂອງແນວຄວາມຄິດ ແລະ ຂໍ້ມູນຂ່າວສານມີຄວາມສຳຄັນສຳລັບແກ້ໄຂສິ່ງທ້າທາຍຕ່າງໆທີ່ມີຢູ່ພາຍໃນປະເທດແລະຢູ່ໃນໂລກ. ການຈຳກັດຂອບເຂດທາງການເມືອງຕໍ່ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ ແລະ ຈຳກັດການໂຕ້ວາທີຂອງສັງຄົມ ຈະເປັນພຽງແຕ່ການຈຳກັດການເຕີບໂຕຂອງສັງຄົມ.

ຢູ່ໃນທຸກໆຂົງເຂດທົ່ວໂລກໃນປີ 2006 ມີບັນດາລັດຖະບານ ທີ່ຕອບໂຕ້ຄວາມຕ້ອງການອິດສະຫລະພາບທາງສ່ວນຕົວ ແລະ ທາງການເມືອງທີ່ນັບມື້ນັບເພີ່ມຂື້ນ ຊຶ່ງບໍ່ພຽງແຕ່ຮັບເອົາໜ້າທີ່ຮັບຜິດຊອບຕໍ່ປະຊາຊົນຂອງເຂົາເຈົ້າ ແຕ່ຍັງກົດໜ່ວງບຸກຄົນທີ່ຕໍ່ສູ້ເພື່ອສິດທິມະນຸດ ແລະຜູ້ທີ່ຕໍ່ຕ້ານການລະເມີດສິດທິມະນຸດເຊັ່ນ ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ ແລະສື່ມວນຊົນເອກະລາດ ລວມທັງອິນເທີເນັດ. ມີຫຼາຍປະເທດນຳໃຊ້ກົດ ໝາຍ ແລະກົດລະບຽບຢ່າງເລືອກເຟັ້ນເພື່ອລົບກວນ ຕໍ່ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ ແລະ ນັກຂ່າວ. ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ ແລະ ນັກຂ່າວມັກຈະຖືກຕັດສິນໂດຍກົດໝາຍນອກລະບົບ ແລະຫລາຍ ຄັ້ງກໍ່ບໍ່ຮູ້ຜູ້ກະທຳ. ຕົວຢ່າງ:

ຢູ່ປະເທດ **ລັດເຊຍ** ໃນປີ 2006, ມີກົດໝາຍວ່າດ້ວຍອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານອອກມານຳໃຊ້ໃນເດືອນເມສາຊຶ່ງມີຄວາມຕ້ອງການຈົດທະບຽນການສ້າງຕັ້ງຂອງອົງການຈັດຕັ້ງທີ່ບໍ່ຂື້ນ ກັບລັດຖະບານ,

ມີການຕິດຕາມປະເມີນຜົນອົງການຈັດຕັ້ງດັ່ງກ່າວເພີ່ມຂື້ນ, ມີຄວາມຮຽກຮ້ອງຕ້ອງ ການໃນການລາຍງານກ່ຽວກັບໂຄງການແລະກິດຈະກຳຕ່າງໆ ແລະ ເພີ່ມອຳນາດຫ້ອງການບໍລິການຈົດທະບຽນແຫ່ງລັດ ໃນການປະຕິເສດການຂໍຈົດທະບຽນຫຼືສັ່ງປິດອົງການຈັດຕັ້ງໂດຍບໍ່ມີເງື່ອນໄຂພຽງພໍ. ອິດສະຫລະພາບໃນການອອກສຽງ ແລະ ຄວາມເປັນເອກະລາດຂອງສື່ມວນຊົນຫລຸດລົງເນື່ອງຈາກຄວາມກົດດັນແລະຂໍ້ຈຳກັດຈາກລັດຖະບານ. ໃນເດືອນຕຸລາ ມີຜູ້ປົກປ້ອງສິດທິມະນຸດຊື່ ແອນນາ ໂປລິດໂກບສະກາຢາ ທັງເປັນນັກຂ່າວທີ່ລືຊື່ໃນການຂຽນກ່ຽວກັບການລະເມີດສິດທິມະນຸດ ໄດ້ຖືກຄາດຕະກຳຢູ່ເມືອງເຈັກເນຍ. ລັດຖະບານໄດ້ນຳໃຊ້ຄວາມເປັນເຈົ້າຂອງຄວບຄຸມຂອງຕົນ ຕໍ່ໂທລະພາບແຫ່ງຊາດ ແລະ ສະຖານີວິທະຍຸ, ລວມທັງສ່ວນໃຫຍ່ຂອງສະຖານີທີ່ໜ້າເຊື່ອຖື ເພື່ອຈຳ ກັດການເຂົ້າເຖິງຂໍ້ມູນຂ່າວສານທີ່ລະອຽດອ່ອນ.

ໃນ**ເບລາຣູສ** ການກວດສອບອາກອນທີ່ຫຍຸ້ງຍາກລຳບາກ ແລະ ຂໍ້ຮຽກຮ້ອງໃນການຂຶ້ນທະບຽນຂອງອົງກອນອິດສະຫລະ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການດຳເນີນງານຂອງອົງການຈັດຕັ້ງມະຫາຊົນ ແລະ ການຈູໂຈມ ທຳຮ້າຍຕໍ່ສະມາຊິກສື່ມວນຊົນອິດສະຫລະກໍ່ຍັງຄົງສືບຕໍ່. ໃນຊວງເດືອນ ພະຈິກ ນັກເຄືອນໄຫວ ດ້ານປະຊາທິປະໄຕ ມິດຕຣີ ດາສເກວິຈ ໄດ້ຖືກຕັດສິນຈຳຄຸກ 16 ເດືອນໃນຂໍ້ຫາດຳເນີນວຽກງານອົງກອນ ອິດສະຫລະ ໂດຍ ບໍ່ໄດ້ຂຶ້ນທະບຽນ.

ລັດຖະບານ **ກາຊັກສະຖານ** ໄດ້ຈັບຕາພັກຝ່າຍຄ້ານຕູອັກໂຊ ພາຍຫຼັງທີ່ປະທານຮ່ວມ ຊາເຊັນບາຍອູລີ ຖືກຄາດຕະກຳ ແລະ ໄດ້ຕີຄວາມຫມາຍ ມາດຕາ 5 ຂອງລັດຖະທຳມະນູນຢ່າງຕື້ນໆເພື່ອຢຸດກິດຈະກຳການຝຶກອົບຮົມພັກການເມືອງທີ່ໄດ້ຮັບທຶນສະໜັບສະໜູນຈາກຕ່າງປະເທດ, ໂດຍໃຫ້ຄວາມຫມາຍວ່າ ການສະໜອງຂໍ້ມູນຂ່າວສານແມ່ນມີຄວາມໝາຍຄືກັບການສະໜັບສະໜູນດ້ານການເງິນຕໍ່ບັນດາພັກການເມືອງ. ໃນເດືອນກໍລະກົດ ປະທານາທິບໍດີ ນາຊາບາເຢັບລົງລາຍເຊັນຮັບຮອງເອົາການປ່ຽນແປງກົດໝາຍທີ່ກຳຈັດສື່ມວນຊົນເຊິ່ງ ອົງກອນເພື່ອຄວາມສະຫງົບ ແລະ ການຮ່ວມມືໃນອິດສະຫລະພາບແຫ່ງທະວີບເອີຣົບຂອງຜູ້ຕາງໜ້າສື່ມວນຊົນໄດ້ພິຈາລະນາວ່າເປັນບາດກ້າວຖອຍຫຼັງ. ລັດຖະບານສືບຕໍ່ນຳໃຊ້ກົດໝາຍທີ່ມີລັກສະນະຈຳກັດເພື່ອປັບໄໝ, ປາບປາມແລະຢຸດຢັ້ງການກະຈາຍຂ່າວຂອງສື່ມວນຊົນ, ນັກຂ່າວ, ແລະ ນັກວິໄຈ. ໃນເດືອນເມສາ ສະມາຊິກ ຂອງສື່ມວນຊົນຂະແໜງໜຶ່ງທີ່ຍຶດເຍື້ອສືບຕໍ່ກະຈາຍຂ່າວນັ້ນຖືກທຸບຕີຢ່າງຮ້າຍແຮງ.

ອິດສະຫລະພາບໃນການປາກເວົ້າ, ການຈັດຕັ້ງສະມາຄົມ ແລະ ການເຕົ້າໂຮມແມ່ນຖືກຈຳກັດຮັດແໜ້ນຢູ່ **ຕວກເມນິດສະຕັງ** ແລະ ລັດຖະບານກໍ່ຊອກຫາຊ່ອງທາງເພື່ອຄວບຄຸມກິດຈະກຳຂອງອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ. ໂທລະພາບຜ່ານດາວທຽມຈາກຕ່າງປະເທດສາມາດເບິ່ງໄດ້ໃນທົ່ວປະເທດ, ແຕ່ລັດຖະບານຄວບຄຸມສື່ມວນຊົນພາຍໃນທັງໝົດ, ແລະ ນັກຂ່າວພາຍໃນກໍ່ຖືກຫ້າມບໍ່ໃຫ້ຕິດຕໍ່ກັບຄົນຕ່າງປະເທດໂດຍບໍ່ໄດ້ຮັບອານຸຍາດ. ການເຂົ້າເຖິງອິນເຕີເນັດກໍຕ້ອງຜ່ານບໍລິສັດໂທລະຄົມ ຕວກເມັນ ທີ່ເປັນ ກິດຈະການຂອງລັດຖະບານນັ້ນ. ນັບແຕ່ເດືອນກັນຍາປີ 2002 ກໍບໍ່ມີການເປີດບັນຊີນຳໃຊ້ໃໝ່ຢູ່ໃນນະຄອນຫຼວງ. ໃນເດືອນສິງຫາ ລັດຖະບານຈັບກຸມນັກຂ່າວ ໂອກູລສະປາປ່າໄມລາໂດວາ, ແອນນາເກີບານ ອາແມນກູີເຊັບ ແລະ ຊາປາເດີດີ ຮາຈີເຢັບ ແລະ ຕັດສິນຈຳຄຸກພວກເຂົາເປັນເວລາ 6 ຫາ 7 ປີ ໃນຂໍ້ຫາມີອາວຸດໃນກຳມື ແລະ ການຕັດສິນແມ່ນດຳເນີນຢ່າງກະທັດຮັດແລະ ບໍ່ເປີດເຜີຍ. ໃນເດືອນກັນຍາໄມຣາໂດວາ, ນັກຂ່າວວິທະຍຸກະຈາຍສຽງເອີຣົບ ແລະ ນັກຂ່າວວິທະຍຸອິດສະຫລະ ເສຍຊີວິດໃນຄຸກພາຍໃຕ້ສະພາບການທີ່ຫນ້າສົງໃສ. ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານລາຍງານວ່າ ນັກຂ່າວຍິງຄົນດັ່ງກ່າວ ແລະ ເພື່ອນຂອງເຂົາອີກສອງຄົນຖືກທາລຸນໃນໄລຍະທີ່ຖືກກັກຂັງໃນລະດູຮ້ອນ ເພື່ອໃຫ້ມີຄວາມຍິນຍອມວ່າມີອາວຸດຢູ່ໃນກຳມື. ວັນທີ 21 ເດືອນທັນວາ ປະທາ ນາທິບໍດີ ຊາປາມູລັດ ນີຢາຊົບ ໄດ້ເສຍຊີວິດ.

ລັດຖະບານ **ອຸເບກິດສະຖານ** ໄດ້ພະຍາຍາມຄວບຄຸມທຸກໆການເຄື່ອນໄຫວຂອງອົງກອນອິດສະຫລະ ແລະ ໄດ້ປິດ ອົງການມະຫາຊົນຫລາຍກວ່າ 200 ແຫ່ງ, ເຊິ່ງລວມທັງ ອົງກອນອິດສະຫລະສາກົນ ທີ່ດຳເນີນງານ ຢູໃນປະເທດໂດຍກ່າວຫາວ່າລະເມີດກົດຫມາຍ. ສື່ມວນຊົນອິດສະຫລະ ແລະ ນັກ ເຄື່ອນໄຫວດ້ານ ສິດທິ ມະນຸດ ຍັງຄົງຖືກດຳເນີນຄະດີຢູ່.

ລັດຖະບານ **ຊີເຣຍ** ໄດ້ຄວບຄຸມຂໍ້ມູນຂ່າວສານຢ່າງຫນຽວແຫນ້ນ, ແລະ ຫ້າມບໍ່ໃຫ້ມີການວິຈານ ລັດຖະ ບານ ແລະ ສົນທະນາກ່ຽວກັບການແບ່ງແຍກນິກາຍສາດສະຫນາ, ລວມທັງສິດທາງສາດສະຫນາ ແລະ ຊົນເຜົ່າກຸ່ມນ້ອຍ. ໄດ້ມີການຄຸມຂັງ ແລະ ທຸບຕີຜູ້ຄົນທີ່ອອກຄວາມເຫັນທີ່ລະເມີດການຈຳກັດດັ່ງກ່າວນີ້, ເຊັ່ນ ຕົວຢ່າງ ການຈັບກຸມສື່ມວນຊົນໃນເດືອນກຸມພາຊື່ ອາເດລ ມາພຟູສ ຫລັງຈາກລາວໄດ້ຮຽກຮ້ອງໃຫ້ມີ ການສົນ ທະນາໃນເລື່ອງຄວາມຫລາກຫລາຍການເຊື່ອຖື ຫລັງຈາກທີ່ມີສະພາບຖົກຖຽງກັນກ່ຽວກັບ ຮູບ ພາບກະຕູນ ຮຽນແບບ ໂພຣເພັດ ມູຮາມັດ. ລັດຖະບານໄດ້ອາໃສກົດຫມາຍ ສື່ ແລະ ສິ່ງພິມຂອງພວກ ເຂົາ, ກົດຫມາຍອາຍາ, ແລະ ກົດຫມາຍສຸກເສີນກວດສອບການເຂົ້າເຖິງອິນເທີເນັດ ແລະ ຈຳກັດສື່ ຂ່າວສານທາງອີເລັກໂທນິກ. ພວກນັກເຄືອ່ນໄຫວດ້ານການຂົ່ມຂູ່ສິດທິມະນຸດພາຍໃນປະເທດ ກໍ່ຍັງປະ ເຊີນກັບບັນຫາດັ່ງກ່າວ ລວມທັງຖືກຕິດຕາມ ສອດສອ່ງຢ່າງໃກ້ຊິດ ແລະການລົງໂທດຢ່າງບໍ່ເປັນທຳ ຕໍ່ການເດີນທາງຂອງ ພວກເຂົາ ເມື່ອພວກເຂົາພະຍາຍາມ ເດີນທາງໄປຮວ່ມກອງປະຊຸມສຳມະນາ ຢູ່ຕ່າງປະເທດ.

ສິດເສລີພາບຂອງສື່ ໃນ **ອີລານ**ແມ່ນຍັງຕຳ່ຢູ່ຕະຫລອດ, ລັດຖະບານໄດ້ປິດສຳນັກຫນັງສືພິມອິດສະຫລະ *ຊາກ* ແລະ *ອີຣານ,* ສະກັດກັ້ນ ບໍ່ໃຫ້ເຂົ້າເຖິງອິນເຕີເນັດ ເວັບໄຊ້ ໃຫມ່ໆ--ລວມທັງຫນັງສືພິມ ນີວຢ໋ອກ ທາມສ໌ ແລະ ບີບີຊີ ຟເຊີ--ແລະຈັບສື່ມວນຊົນ ແລະ ພວກເຈາະຂໍ້ມູນທາງອິນເທີເນັດເຂົ້າຄຸກ. ເຈົ້າຫນ້າທີ ໄດ້ໃຊ້ຄຳສັ່ງ ຫ້າມຕໍ່ສື່ມວນຊົນໂດຍການໃຫ້ພວກເຂົາອອກນອກປະເທດນັ້ນ ເປັນຄືອາວຸດປອ້ງກັນຕໍ່ນັກ ຂ່າວ.

ຢູ່ **ບູຣຸນດີ** ການຈັບກຸມ, ການກັກຂັງແລະການລົບກວນນັກຂ່າວ ແລະ ກິດຈະກຳສິດທິມະນຸດຂອງລັດຖະ ບານໄດ້ເພີ່ມຂື້ນ; ນອກຈາກຈັບກຸມບຸກຄົນທົ່ວໄປຫຼາຍຄົນ, ຕຳຫຼວດຍັງຈັບ ແລະ ກັກຂັງປະທານ ອົງການ ຈັດຕັ້ງ ທີ່ບໍ່ຂື້ນກັບລັດຖະບານທີ່ເຮັດວຽກຕ້ານການສໍ້ລາດບັງຫຼວງເປັນເວລາຫຼາຍເດືອນ. ເຈົ້າແຂວງຜູ້ໜຶ່ງ ເອີ້ນອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານເພື່ອສົ່ງເສີມສິດທິມະນຸດ ລີກ ອີເຕກາ ວ່າເປັນສັດຕູຂອງ ສັນຕິພາບ, ແລະ ໃນເດືອນພະຈິກ ໜຶ່ງພະນັກງານລັດຖະບານປະກາດວ່າ 32 ອົງການຈັດຕັ້ງທີ່ບໍ່ຂື້ນກັບ ລັດຖະບານສາກົນຢູ່ໃນປະເທດອາດຈະ ປະເຊີນໜ້າກັບການຂັບໄລ່ຍ້ອນບໍ່ສາມາດສົ່ງບົດລາຍງານປະຈຳ ປີທີ່ກຳນົດໃຫ້ແກ່ລັດຖະບານ.

ໃນ **ຣວນດາ** ໄດ້ມີການຈຳກັດບັນຍາກາດທົ່ວໄປໃນການປະຕິບັດງານຂອງອົງການຈັດຕັ້ງສັງຄົມ. ອົງກອນ ອິດສະຫລະທັງຢູ່ພາຍໃນ ແລະຈາກຕ່າງປະເທດແມ່ນຖືກຮຽກຮ້ອງໂດຍກົດຫມາຍໃຫ້ລົງທະບຽນໃນ ແຕ່ລະປີ ແລະ ໃຫ້ລາຍງານການເຄື່ອນໄຫວຂອງເຂົາເຈົ້າໃຫ້ລັດຖະບານ. ມີລາຍງານວ່າເຈົ້າຫນ້າທີ່ໄດ້ ຮຽກຮອ້ງ ໃຫ້ ບາງອົງກອນອິດສະຫລະຈະຕ້ອງໄດ້ຮັບອະນຸຍາດຈາກລັດຖະບານເສຍກອນຈຶ່ງສາມາດ ເຂົ້າຫາແຫລ່ງ ຜູ້ໃຫ້ທຶນຈາກນານາຊາດເພື່ອດຳເນີນບາງໂຄງການ. ນອກນັ້ນ ອົງກອນອິດສະຫລະທັງ ຫມົດນັ້ນໄດ້ຄາດຫວັງເພື່ອຈະຮວ່ມມື.

ລັດຖະບານ **ເວເນຊູເອລາ** ຍັງຄົງຄຸກຄາມ ແລະ ຂົ່ມຂູ່ກຸ່ມອົງການຈັດຕັ້ງສັງຄົມ ເຊິ່ງສັງເກດໄດ້ຫລາຍທີ່ສຸດ ກໍ່ຄືກຸ່ມອົງການຕິດຕາມການເລືອກຕັ້ງ ທີ່ບໍ່ຂຶ້ນກັບລັດຖະບານ ຊູແມັດ ທີ່ມີຂະດີ ສວມຮູ້ຮ່ວມຄິດ ແລະ ສົມ ຄົບກັນທຳລະຍົດປະເທດຊາດ ດ້ວຍການຮັບທຶນຕ່າງຊາດ ແລະຖືກຕັ້ງສິນແຂວນຄໍ ເຖິງວ່າການປະຫານ ຈະຖືກເລື່ອນບໍ່ມີກຳນົດແຕ່ກໍ່ຮູ້ວ່າຈະເກີດຂຶ້ນຢ່າງແນ່ນອນ. ໃນຊ່ວງທ້າຍປີ, ຮ່າງກົດໝາຍທີ່ຍັງຢູ່ພາຍໃຕ້ ການພິຈະລະນາຈາກສະພານັ້ນຖ້າຖືກຮອງຮັບແລ້ວມັນຈະເພີ່ມການຄວບຄຸມການເງິນ ຂອງບັນດາ ອົງກອນອິດສະຫລະ ຕ່າງໆໂດຍລັດຖະບານເຂົ້າ ແລະ ຈຳກັດການປະຕິບັດງານຂອງອົງກອນອິດສະຫລະໃນ ຂົງເຂດສິດທິມະນຸດ ແລະການສົ່ງເສີມປະຊາທິປະໄຕ. ການດັດແກ້ກົດໝາຍອາຍາທີ່ກຳນົດການ ຕັດສິນຈຳຄຸກສຳລັບກໍລະນີ ມີນປະໝາດ ແລະ ທຍາບຄາຍຕໍ່ພະນັກງານລັດຖະບານ ແລະການກະທຳ ຮູນແຮງຕໍ່ສິ່ມວນຊົນທີ່ຄື່ອນໄຫວແບບຈຳກັດຕົນເອງ. ລັດຖະບານໄດ້ເພີ່ມທະວີການຄຸກຄາມການອອກຂ່າວຢ່າງເສລີ ແລະຂ່າວທີ່ເປັນທາງລົບຕໍ່ຕົນເອງ. ໃນເດືອນທັນວາ ປະທານາທິບໍດີ ຊາເວດ ໄດ້ປະກາດ ວ່າ ລັດຖະບານຈະບໍ່ຕໍ່ໃບອະນຸຍາດຖ່າຍທອດ ອອກອາກາດ ໃຫ້ແກ່ສະຖານີ ໂທລະພາບ ວິທະຍຸ ກາຣາກາສ ເຊິ່ງເປັນເຄືອຄ່າຍໂທລະພາບໃນທາງພານິດທີ່ ເກົ່າແກ່ທີ່ສຸດໃນ ປະເທດ. ລັດດທະບານ ກ່າວຫາເຈົ້າຂອງເຄືອຄາຍວ່າ ເປັນພວກ ກໍ່ລັດທະປະຫານ ແລະ ເປັນໄພຕໍ່ຄວາມເຊື່ອຖືສັງຄົມ.

ໃນປະເທດ **ຈີນ,** ບັນດາອົງກອນທີ່ບໍ່ຂຶ້ນກັບລັດຖະບານທັງຢູ່ພາຍໃນ ແລະ ຈາກຕ່າງປະເທດ ຍັງຄົງສືບຕໍ່ປະເຊີນໜ້າກັບການກວດສອບ ແລະ ຈຳກັດຫລາຍຂຶ້ນ. ກ່ອນທ້າຍປີ 2006, ບັນດານັກຂ່າວທີ່ບໍ່ມີພົມ ແດນໄດ້ລາຍງານວ່າມີນັກຂ່າວ 31 ຄົນ ແລະ ນັກຂຽນທາງ ອິນເທີເນັດ 52 ຄົນ ໄດ້ຖືກຄຸກ. ລັດຖະບານໄດ້ ສະໜັບສະໜູນໃນການໃຊ້ ອິນເທີເນັດໃນຂະນະດຽວກັນກໍ່ຍັງປະຕິບັດການຕິດຕາມການໄຊ້, ຄວບຄຸມຫົວຂໍ້ບົດຂຽນ, ຈຳກັດຂໍ້ມູນ ແລະປັບໄໝຜູ້ລະເມີດກົດລະບຽບ. ລັດຖະບານໄດ້ກຳນົດຂໍ້ຮຽກຮ້ອງ ການ ລົງທະບຽນ ເວັບໄຊ້ ຢ່າງເຂັ້ມງວດ, ປັບປຸງພະນັກງານຄວບຄຸມສາລະທີ່ສົ່ງອອກ (ອອນລາຍ), ຂະຫຍາຍຄວາມໝາຍຂອງ ສາລະທີ່ຜິດກົດໝາຍທີ່ສົ່ງອອກ. ລັດຖະບານຍັງຄົງສະກັດກັ້ນການເຂົ້າເຖິງທີ່ຢູ່ໃນອິນເທີເນັດ (ໄຊ້) ທີ່ມີຄວາມ ຄິດເຫັນບໍ່ລົງຮອຍກັນ ແລະ ມີລາຍງານຈາກທາງການວ່າໄດ້ເລີ່ມຕົ້ນນຳໃຊ້ ເທັກໂນໂລຊີ ທີ່ທັນສະໄໝເພື່ອ ເຮັດໃຫ້ສາມາດສະກັດກັ້ນສາລະຂໍ້ມູນສະເພາະ ບໍ່ໃຫ້ເຂົ້າເຖິງສະຖານທີ່ (ເວັບໄຊ້)ໄດ້.

**ຫວຽດນາມ** ຍັງຄົງສືບຕໍ່ ຕິດຕາມ ແລະ ຈຳກັດ ອິນເທີເນັດ, ສະກັດກັ້ນ ບັນດາເວັບໄຊ້ ທີ່ບັນຈຸຂ່າວຄາວ ແລະ ຂໍ້ມູນກ່ຽວກັບສິທິມະນຸດນານາຊາດ. ກົດໝາຍອະນຸຍາດໃຫ້ປະຊາຊົນສາດມາດຕຳນິລັດຖະບານທີ່ບໍ່ມີ ປະສິດທິຜົນ ແລະ ການສໍ້ລາດບັງຫລວງ ແຕ່ລັດຖະບານກໍ່ຍັງສືບຕໍ່ຫ້າມສື່ບໍ່ໃຫ້ຂຽນຂ່າວທີ່ເປັນຄຳຖາມຕໍ່ບົດບາດຂອງພັກຄອມມຸນິດ, ສົ່ງເສີມປະຊາທິປະໄຕ ທີ່ຫລາກຫລາຍ ຫລື ຫລາຍພັກການເມືອງ, ຫລື ຄຳຖາມກ່ຽວ ກັບນະໂຍບາຍສິດທິມະນຸດ. ລັດຖະບານສັ່ງຫ້າມການເຊື່ອມຕໍ່ອິນເທີເນັດກັບຜູ້ໃຫ້ບໍລິການ ອິດສະຫລະ ແລະ ຮຽກຮ້ອງໃຫ້ເຈົ້າຂອງຫ້າງຮ້ານບໍລິການອິນເທີເນັດ ລົງທະບຽນ ຂໍ້ມູນສ່ວນຕົວຂອງລູກຄ້າ ແລະ ເວັບໄຊ້ ທີ່ເຂົາ ເຂົ້າເບິ່ງ. ລັດຖະບານໄດ້ປ່ອຍຕົວບັນດາຜູ້ຄົນທີ່ມີຊື່ສຽງດ້ານການບໍ່ລົງຮອຍນຳ ລັດຖະບານ ໃນດ້ານການເມືອງ ແລະສາດສະໜາ ເຊິ່ງລວມທັງ ດຣ. ພາມ ຮອງ ສອນທີ່ຖືກຄຸກເພາະໄດ້ແປບົດ ຂ່າວກ່ຽວກັບປະຊາທິປະໄຕ ແລ້ວນຳເຜີຍແຜ່ທາງອິນເທີເນັດ.

**ການຂ້າລ້າງເຜົ່າພັນແມ່ນສະພາບຕົວຈິງທີ່ຍັງຄອນແຄນທີ່ສຸດທຸກໆຄົນ**

ເກືອບ 60 ປີ ພາຍຫຼັງໄດ້ນຳໃຊ້ ຖະແຫຼງການໂລກດ້ານສິດທິມະນຸດຂອງສະຫະປະຊາຊາດ --ການສະແດງເຖິງຄວາມຮູ້ສຶກໂມໂຫຂອງມະນຸດແມ່ນນຳໄປສູ່ຄວາມຮ້າຍກາດຂອງການທຳລາຍລ້າງ ແລະການຈູດ

ສາຍສະນວນຂອງສົງຄາມໂລກຄັ້ງທີສອງ-- ການຂ້າລ້າງຜານມະນຸດຍັງສືບຕໍ່ຢູ່ເຂດ ດາເຟີ ຂອງຊູດານ. ເຖິງວ່າມີຂໍ້ຕົກລົງສັນຕິພາບຢ່າງຄົບຖ້ວນໃນເດືອນມັງກອນປີ 2005 ເຮັດໃຫ້ສົງຄາມກາງເມືອງລະຫວ່າງເໜືອແລະໃຕ້ທີ່ຢືດເຍື້ອມາເປັນເວລາ 22 ປີຢຸດຕິລົງ ແລະ ການສ້າງຕັ້ງລັດຖະບານທີ່ເປັນເອກະພາບໃນປີນັ້ນ, ການຕໍ່ສູ້ລະຫວ່າງເຜົ່າຊົນຍັງສືບຕໍ່ຢູ່ຊູດານ, ຄວາມຫາຍຍະນະເກືອບທັງຫມົດນັ້ນແມ່ນຢູ່ ດາເຟີ. ລັດຖະບານ ແລະ ທະຫານທີ່ບໍ່ຂຶ້ນກັບລັດຖະ ບານເປັນຜູ້ຮັບຜິດຊອບຕໍ່ການຂ້າລ້າງເຜົ່າພັນ ຢູ່ດາເຟີ ແລະ ທຸກໆ ພາກສ່ວນທີ່ມີສ່ວນກ່ຽວຂ້ອງກໍມີການລະເມີດສິດທິມະນຸດທີ່ຮ້າຍແຮງ ລວມທັງການຂ້າລ້າງຜານປະຊາຊົນ, ການກຸມຂົ່ມຂືນທີ່ເປັນຄືເຄື່ອງມືຂອງສົງຄາມ, ການທາລຸນຢ່າງເປັນລະບົບ, ການລັກລອບ, ແລະການເກນເດັກນ້ອຍເຂົ້າທະຫານ. ຮອດທ້າຍປີ 2006 ຄວາມຂັດແຍ່ງດາເຟີສົ່ງຜົນສະທ້ອນເຖິງການຕາຍຂອງປະຊາຊົນເຖິງ 200,000 ຄົນ ແລະ ມີການເຄື່ອນຍ້າຍຖິ່ນຖານເຖິງສອງລ້ານຄົນເນື່ອງຈາກສົງຄາມ. ຫຼາຍກ່ວາ 234000 ຄົນອົບພະຍົບໄປປະເທດ ເຈດທີ່ຢູ່ໃກ້ຄຽງ ແລະ ອາຟຣິກາກາງມີບັນຫາຄວາມຂັດແຍ່ງລະຫວ່າງຊົນເຜົ່າສ່ວນນ້ອຍຢູ່ຕາມຊາຍແດນຊູດານ. ເຖິງວ່າມີການສະໜັບສະໜູນໃນດ້ານຂອບເຂດວຽກງານຈາກ ອາດິຊ໌ ອາບາບາ ລັດຖະ ບານຊູດານຍັງປະຕິເສດກຳລັງສາ ກົນທີ່ມີໃຫ້ແກ່ດາເຟີ ແລະ ປັບປຸງກຳລັງປະກອບອາວຸດຢູ່ໃນຕອນທ້າຍຂອງປີ 2006. ສະພາບຄວາມ ສະຫງົບທີ່ເສື່ອມໂຊມລົງບັງຄັບໃຫ້ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ອົງການຈັດຕັ້ງເພື່ອສິດທິມະນຸດໃຫ້ເລື່ອນ ຫລືຢຸດເຊົາການດຳເນີນງານ.

**ການປົກປ້ອງຜູ້ທີ່ປົກປ້ອງສິດທິ**

ຖ້າຫາກຄຳຫມັ້ນສັນຍາຂອງຖະແຫຼງການໂລກດ້ານສິດທິມະນຸດຂອງສະຫະປະຊາຊາດໄດ້ຮັບການ ປະຕິບັດຢ່າງເຕັມປ່ຽມແລ້ວ--ປະຊາຄົມໂລກ--ໂດຍສະເພາະແມ່ນໂລກແຫ່ງປະຊາທິປະໄຕ--ບໍ່ສາມາດຍອມຮັບໄດ້ ວ່າສະພາບທີ່ຍັງຄອນແຄນໃນປະຈຸບັນບໍ່ສາມາດປ່ຽນແປງໄດ້ງ່າຍ. ໃນຕົວຈິງ ພວກເຂົາກົດດັນໃຫ້ພວກເຮົາໃຫ້ ຮ່ວມມືກັບ ບັນດາຜູ້ຄົນທີ່ເຮັດວຽກເພື່ອມະນຸດສະທຳ ແລະການປັບປຸງການເມືອງ.

ໃນປີ 2006 ກຳລັງປົກປ້ອງສິດທິມະນຸດໄດ້ຮັບການເອົາໃຈໃສ່ຈາກລັດຖະບານປະຊາທິປະໄຕ: ຂໍ້ຕົກລົງຂອງປະເທດທີ່ອອກໂດຍ ສະພາທົ່ວໄປສະຫະປະຊາຊາດໃນປີ 2006 ນັ້ນໄດ້ເນັ້ນຄວາມຕ້ອງການການປົກປ້ອງຜູ້ປົກປ້ອງສິດທິມະນຸດຢູ່ອີຣານ, ເບລາຣາຊ໌, ເກົາຫຼີເໜືອ, ແລະ ພະມ້າ.

ກອງທຶນເພື່ອປະຊາທິປະໄຕ ສະຫະປະຊາຊາດ, ໄດ້ຂະຫຍາຍອອກມາຈາກແນວຄິດທີ່ສະເໜີໃນກອງປະຊຸມໃຫຍ່ ໂດຍປະທານປະເທດບຸຊ໌ ໃນປີ2004 ແລະ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2005, ສຳເລັດປີທຳອິດຂອງຕົນເປັນຢ່າງດີ. ຄະນະບໍລິຫານຕົກລົງເຫັນດີຮັບຮອງເອົາ 125 ໂຄງການຈາກ 1,300 ບົດສະເໜີທີ່ຫຼາຍກ່ວາ 100 ປະເທດສົ່ງເຂົ້າມາ-- ມີການອະນຸມັດທຶນເຖິງ 35 ລ້ານໂດລາສະຫະລັດໃຫ້ແກ່ອົງການຈັດຕັ້ງສັງຄົມ ເພື່ອປະຊາທິປະໄຕ.

ຢູ່ໃນຂັ້ນຂົງເຂດ, ໃນເດືອນມິຖຸນາປີ 2006 ກອງປະຊຸມໃຫຍ່ຂອງອົງການເພື່ອລັດຢູ່ທະວີບອາເມລິກາ ນຳໃຊ້ຄຳຖະແຫລງການປະກາດແຊນໂຕໂດມິງໂກ, ຄວາມຕັດສິນໃຈຮ່ວມຫຼາຍຝ່າຍຄັ້ງປະຫວັດສາດໂດຍບັນດາປະເທດຢູ່ໃນໂຊງເຂດດຽວເພື່ອ "ຮັບປະກັນ" ອິດສະຫລະພາບຂອງໝົດທຸກຄົນ ແລະ ເຮັດໃຫ້ເຂົາເຈົ້າສາມາດມີອິດສະຫລະພາບໃນການສະແດງອອກ, ລວມທັງການເຂົ້າເຖິງການໂຕ້ວາທີທາງການເມືອງ ແລະ ການແລກປ່ຽນຂໍ້ມູນຂ່າວສານ ແລະ ຄວາມຄິດຜ່ານສື່ມວນຊົນລວມທັງອິນເຕີເນັດ. ລັດຖະມົນຕີການຕ່າງປະເທດຂອງບັນດາປະເທດກໍປະກາດຂໍ້ຕົກລົງໃນການພັດທະນາ ແລະ ຊຸກຍູ້ຍຸດທະສາດ ແລະການຈັດຕັ້ງປະຕິບັດທີ່ດີທີ່ສຸດ.

ອົງການໂອເອເອດຊ໌ ອິນເຕີອາເມລິກັນຄອມມິສ໌ຊັນ ກ່ຽວກັບສິດທິມະນຸດໃນການເຕົ້າໂຮມຜູ້ປົກປ້ອງສິດທິມະນຸດ ອອກບົດລາຍງານກ່ຽວກັບບັນຫາຮ້າຍແຮງທີ່ພວກເຂົາພົບເຫັນຢູ່ຫຼາຍປະເທດ ເນັ້ນໃສ່ຄວາມຕ້ອງການ ການສະໜັບສະໜູນຈາກລັດຖະບານຕໍ່ວຽກງານຂອງເຂົາເຈົ້າ.

ກ່ອນໜ້າເດືອນກໍລະກົດກອງປະຊຸມສະຫະພັນອາຟຼີກາລະຫວ່າງປະມຸກລັດ, ອົງການຈັດຕັ້ງສັງຄົມຈາກ 19 ປະເທດອາຟຼີກາ ພົບກັນຢູ່ ບັນເຈົາ, ປະເທດກຳເບຍ ເພື່ອພັດທະນາຂໍ້ແນະນຳເພື່ອສົ່ງໃຫ້ການນຳກ່ຽວກັບບົດບາດຂອງສັງຄົມ ໃນກົນໄກການການທົບທວນ ຂອງອາຟຣິກາ ກ່ຽວກັບການປະຕິບັດໜ້າທີ່ສົນທິ ສັນຍາ ຂອງຕົນ, ທິດທາງການປັບປຸງການເຂົ້າເຖິງຂໍ້ມູນຂ່າວສານຂອງສັງຄົມ, ແລະ ກົດໝາຍວ່າດ້ວຍປະຊາກອນທີ່ກໍ່ໃຫ້ເກີດມີການແບ່ງແຍກຊົ້ນວັນນະ. ຂໍ້ຄິດເຫັນດັ່ງກ່າວໄດ້ຖືກນຳໃຊ້ຢູ່ໃນກອງປະຊຸມ.

ໃນກອງປະຊຸມເພື່ອອານາຄົດ ຢູ່ໃນຂົງເຂດ ຕາເວັນອອກກາງ ແລະ ອາຟຼີກາເໜືອ  ນຳເອົາພະນັກງານ ແລະຜູ້ຕາງໜ້າຈາກພາກສ່ວນຕ່າງໆໃນຂົງເຂດ, ລວມທັງຄູ່ຮ່ວມມື ຈີ-8 ຢູ່ ເດດຊີຂອງ ຈໍແດນ. ຫົວໜ້າສັງຄົມ ພົນລະເຮືອນເກືອບ 50 ຄົນເຂົ້າເປັນຕົວແທນໃຫ້ແກ່ຫຼາຍຮ້ອຍອົງກອນຈາກ 16ປະເທດໃນໂຊງເຂດເຂົ້າຮ່ວມ ການປຶກສາຫາລືກ່ຽວກັບລະບຽບ ກົດໝາຍ, ຄວາມໂປ່ງໃສ, ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງແລະເດັກນ້ອຍ, ລະບຽບກົດໝາຍສຳລັບອົງກອນສັງຄົມ. ພ້ອມກັນນັ້ນ ພວກເຂົາຍັງສົນທະນາກ່ຽວກັບການສ້າງຄວາມເຂັ້ມແຂງໃນການປະຕິຮູບໂດຍການສ້າງກົນໄກເພື່ອຕິດຕາມຂໍ້ສະເໜີ. ເຖິງແມ່ນວ່າຈະປະເຊີນກັບຄວາມຫຍຸ້ງຍາກທີ່ສຸດໃນອະນາຄົດ--ໃນເວລາໝູນໃຊ້ແລະຈັດຕັ້ງປະຕິບັດຄຳແນະນຳໂດຍສັງ ຄົມພົນລະ ເຮືອນ--ກອງປະຊຸມຊ່ວຍເປີດກ້ວາງຂອບເຂດການເມືອງທີ່ບໍ່ເຄີຍມີມາກ່ອນສຳລັບອົງກອນສັງຄົມເພື່ອກໍ່ຕັ້ງແລະ ປຶກສາຫາລືກັບລັດຖະບານໃນຂົງເຂດ.

ເພື່ອເປັນນິມິດໝາຍໃຫ້ແກ່ ວັນສິດທິມະນຸດສາກົນໃນເດືອນທັນວາປີ 2006, ລັດທະມົນຕີ ໄຣຊ໌ໄດ້ຖະແຫຼງການວ່າ ສອງແນວຄວາມຄິດຂອງສະຫະລັດໃນການສົ່ງເສີມສິດທິມະນຸດແລະປະຊາທິປະໄຕ: ທ່ານໄດ້ກ່າວເຖິງການສ້າງຕັ້ງກອງທຶນປົກປ້ອງຜູ້ປົກປ້ອງສິດທິມະນຸດ ເຊິ່ງບໍລິຫານ
ໂດຍກະຊວງການຕ່າງປະເທດ ສະຫະລັດ ທີ່ຈະແຈກຢາຍທຶນຂະໜາດນ້ອຍໂດຍໄວ ເພື່ອຊ່ວຍຜູ້ປົກປ້ອງສິດທິມະນຸດທີ່ພວມຕ້ອງການເນື່ອງຈາກມີການກົດຂີ່ຈາກລັດຖະບານ. ທຶນດັ່ງກ່າວອາດຈະຖືກນຳໃຊ້ເຂົ້າໃນສຳລັບຄ່ານັກກົດໝາຍ, ຄ່າຢາ ຫຼືຕາມຄວາມຕ້ອງການຈາກຄອບຄົວຂອງນັກເຄື່ອນໄຫວ.
ລັດທະມົນຕີ ໄຣຊ໌ ຍັງຈັດພິມໜັງສືຫລັກການຊີ້ນຳ 10 ຫຼັກການຂອງອົງກອນອິດສະຫລະ ກ່ຽວກັບການປະຕິບັດ ຂອງລັດຖະບານ ຕໍ່ອົງກອນອິດສະຫລະຂອງຕົນ. ຫຼັກການເຫຼົ່ານີ້ ຈະແນະນຳການປະພຶດຕໍ່ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານຂອງສະຫະລັດອາເມຣິກາ, ແລະພວກເຮົາກໍຈະໃຊ້ເພື່ອປະເມີນພຶດຕິກຳຂອງລັດຖະບານອື່ນໆ. ບັນດາຫຼັກການມີໜ້າທີ່ເປັນສ່ວນປະກອບເຂົ້າກັບເອກະສານອົງການສະຫະປະຊາຊາດ ແລະ ຂອງສາກົນເພື່ອໃຫ້ມີເນື້ອໃນເບົາກວ່າ ແລະ ຫລາຍກວ່າ ເພື່ອໃຊ້ເຂົ້າໃນການປົກປ້ອງຜູ້ປົກປ້ອງສິດທິມະນຸດ ແລະ ອາດຈະນຳໃຊ້ເຂົ້າເປັນເອກະສານສະໜັບສະໜູນສຳລັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານໂດຍການເປັນແຫລ່ງຂໍ້ມູນທີ່ສຳຄັນໃຫ້ແກ່ລັດຖະບານ, ອົງການຈັດຕັ້ງສາກົນ, ກຸ່ມສັງຄົມ ແລະ ນັກຂ່າວ.

ໃນເວລາທີ່ປະຊາທິປະໄຕໃຫ້ການສະໜັບສະໜູນວຽກງານພັດທະນາສິດທິມະນຸດ ແລະ ອົງການຈັດຕັ້ງສັງຄົມ, ພວກເຮົາກໍສາມາດຊ່ວຍປະຊາຊົນຢູ່ຫຼາຍປະເທດທົ່ວໂລກໃນການສ້າງເປົ້າໝາຍອິດສະຫລະພາບຂອງເຂົາເຈົ້າ. ແລະເຮັດໄດ້ເຊັ່ນນັ້ນ ກໍຈະໝາຍຄວາມວ່າພວກເຮົາຊ່ວຍກໍ່ສ້າງໂລກທີ່ປອດໄພ ແລະ ດີກວ່າສຳລັບໝົດທຸກຄົນ.

ພວກເຮົາຕ້ອງປົກປ້ອງຜູ້ປົກປ້ອງຍ້ອນວ່າເຂົາເຈົ້າຄືຕົວແທນແຫ່ງສັນຕິພາບແລະການປ່ຽນແປງແບບປະຊາທິປະໄຕ.

## ປະເທດລາວ

*ບົດລາຍງານກ່ຽວກັບສິດທິມະນຸດໃນພາກປະຕິບັດ 2006*
*ເຜີຍແຜ່ໂດຍຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະແຮງງານ*
*ວັນທີ 6 ມີນາ, 2007.*

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນລັດໃຊ້ອຳນາດຄອມມູນິດ, ມີພັກດຽວຄອງອຳນາດຄືພັກປະຊາຊົນປະຕິວັດລາວ ( ພປປລ ). ອີງຕາມການສຳຫລວດພົນລະເມືອງຂອງປີ 2005, ພົນລະເມືອງຂອງປະເທດມີປະມານ 5.6 ລ້ານຄົນ. ເຖິງແມ່ນວ່າລັດຖະທຳມະນູນ 1991 ໄດ້ກຳນົດລະບອບອັນປະກອບດ້ວຍຂະແໜງບໍລິຫານ, ນິຕິບັນຍັດ ແລະຕຸລາການ; ແຕ່ ໃນຕົວຈິງ, ພປປລ ຍັງສືບຕໍ່ຄວບຄຸມການປົກຄອງ ແລະເລືອກການນຳໃນທຸກໆລະດັບໂດຍໃຊ້ການກຳນົດລັດທະທຳມະນູນທີ່ເອີ້ນວ່າ "ບົດບາດການນຳພາ". ການເລືອກຕັ້ງສະມາຊິກສະພາແຫ່ງຊາດເທື່ອລ່າສຸດແມ່ນ ໄດ້ຈັດຂຶ້ນໃນເດືອນເມສາ. ໃນຊ່ວງເດືອນ ມິຖຸນາ ສະພາແຫ່ງຊາດກໍໄດ້ເລືອກເອົາປະທານແລະ ຮອງປະທານຄືນໃໝ່ ແລະຮັບຮອງເອົາການເລືອກນາຍົກ ແລະຄະນະລັດຖະບານ. ພປປລ ໂດຍທົ່ວໄປແມ່ນຄວບຄຸມກຳລັງຮັກສາຄວາມສະຫງົບຢ່າງໄດ້ຜົນແຕ່ກໍມີບາງພາກສ່ວນຂອງກຳລັງປ້ອງກັນຄວາມສະຫງົບທີ່ໃນບາງໂອກາດໄດ້ດຳເນີນການນອກຂອບເຂດອຳນາດຂອງ ພປປລ.

ໃນໄລຍະນີ້ງປີ ຖືວ່າຜົນງານທົ່ວໄປດ້ານສິດທິມະນຸດຂອງລັດຖະບານແມ່ນຖົດຖອຍລົງ. ພົນລະເມືອງຍັງຄົງຖືກປະຕິເສດສິດທິທີ່ຈະປ່ຽນແປງລັດຖະບານ. ຕົວແທນລັດຖະບານຍັງໄດ້ກະທຳການຄາດຕະກຳແບບຜິດກົດຫມາຍ. ສະພາບໃນຄຸກທີ່ໂຫດຮ້າຍແລະກໍ່ເປັນຊ່ວງເວລາທີ່ເປັນໄພເຖິງຊີວິດ. ການສໍ້ລາດບັງຫລວງໃນບັນດາເຈົ້າໜ້າທີ່ຮັກສາຄວາມສະຫງົບ ແລະ ຄະນະຜູ້ພິພາກສາແມ່ນຊໍ້າເຮື້ອ. ລັດຖະບານຈຳກັດສິດທິຂອງພົນລະເມືອງ ຈົນເຖິງສິດທິສ່ວນບຸກຄົນ ແລະບໍ່ນັບຖືສິດເສລີພາບໃນການປາກເວົ້າ, ສື່ມວນຊົນ, ການປະຊຸມ ແລະສ້າງຕັ້ງສະມາຄົມ. ເຈົ້າໜ້າທີ່ທ້ອງຖິ່ນຍັງໄດ້ແຊກແຊງເສລີພາບທາງສາດສະໜາ ແລະຈຳກັດອິດສະຫຼະພາບໃນການເຄື່ອນຍ້າຍໄປມາຂອງປະຊາຊົນ. ບໍ່ມີອົງການສິດທິມະນຸດທີ່ບໍ່ຂຶ້ນກັບລັດຖະບານພາຍໃນ. ບັນຫາການຄ້າມະນຸດ ໂດຍສະເພາະແມ່ນຜູ້ຍິງ ແລະ ເດັກຍິງແມ່ນຍັງເປັນບັນຫາຫລັກ ກໍ່ເຊັ່ນດຽວກັບບັນຫາການຈຳແນກຕໍ່ຊົນເຜົ່າກຸ່ມນ້ອຍ ເຊັ່ນ ຊົນເຜົ່າມົ້ງ. ຈຳກັດສິດທິກຳມະກອນ. ລັດຖະບານຍັງສືບຕໍ່ປະຕິເສດວ່າບໍ່ໄດ້ກັກໂຕກຸມຊາວມົ້ງຈຳນວນ 27 ຄົນທີ່ຖືກຜັກດັນໃຫ້ອອກຈາກປະເທດໄທ ໃນຊ່ວງເດືອນ ທັນວາ ປີ 2005.

**ການເຄົາລົບສິດທິມະນຸດ**
**ພາກ 1. ເຄົາລົບຄວາມສົມບູນຂອງບຸກຄົນ, ລວມໃນນັ້ນ ມີທັງອິດສະຫຼະພາບຈາກ:**

**ກ. ການຕັດຊີວິດແບບຕາມໃຈ ແລະຜິດກົດໝາຍ**

ບໍ່ມີການຢືນຢັນວ່າມີການຄາດຕະກຳໂດຍເຫດຜົນທາງການເມືອງໂດຍ ລັດຖະບານຫລື ຕົວແທນ, ແຕ່ເຖິງຢ່າງ ໃດກໍ່ຕາມ ອົງການສິດທິມະນຸດ ທີ່ບໍ່ຂຶ້ນກັບລັດຖະບານໄດ້ລາຍງານວ່າ ລັດຖະບານ ຫລື ຕົວແທນ ໄດ້ກະທຳ ການຕັດສິນຊີວິດແບບຜິດກົດໝາຍຫລາຍຄັ້ງ.

ອົງການນານາຊາດ ເອມແນສຕີ ແລະ ຄະນະກຳມະທິການຊອກຫາຄວາມຈິງ ທີ່ມີສຳນັກງານຢູ່ສະຫະລັດ ໄດ້ກ່າວຫາວ່າ ກອງທັບປະຊາຊົນລາວ (ກປລ) ໄດ້ຄາດຕະກຳຊາວມົ້ງທີ່ບໍ່ມີອາວຸດ ໃນວັນທີ 6 ເມສາ ທີ່ແຂວງ ວຽງຈັນ, ເຊິ່ງໃນນັ້ນແມ່ນ ຜູ້ຍິງ 25 ຄົນແລະເດັກນຶ່ງຄົນ ທີ່ກຳລັງຊອກຫາກິນຢູ່. ເຖິງແມ່ນວ່າຈະ ມີຫລັກຖານ ໃນການຄາດຕະກຳ, ແຕ່ລັດຖະບານລະເລີຍຕໍ່ເຫດການວ່າ ເປັນເລື່ອງເສສັນປັ້ນແຕ່ງຂຶ້ນມາ ແລະ ກໍປະຕິເສດ ທີ່ຈະດຳເນີນການສືບສວນ.

ໃນ ວັນທີ 8 ເດືອນມີຖຸນາ ເຈົ້າຫນ້າທີ່ສອງຄົນຖືກກ່າວຫາວ່າໄດ້ຄາດຕະກຳຊາວນາເຜົ່າມົ້ງ ເຊິ່ງເປັນ ພີ່ນ້ອງ ກັບຫົວຫນ້າກຸ່ມຕໍ່ຕ້ານຊາວມົ້ງ. ລູກຊາຍອາຍຸ ຫົກປີຂອງລາວກໍຖືກຍິງບາດເຈັບສາຫັດ, ແຕ່ກໍ່ຍັງ ຖືກ ປະຕິເສດບໍ່ໃຫ້ປິ່ນປົວຢູ່ໂຮງຫມໍທ້ອງຖິ່ນ. ລັດຖະບານໄດ້ລາຍງານວ່າຍັງບໍ່ຮູ້ໂຕຜູ້ກໍ່ເຫດການດັ່ງກ່າວ ແລະ ສະຫລຸບວ່າເປັນຍ້ອນການຄັດແຍ່ງທາງທຸລະກິດ. ອຳນາດການປົກຄອງກໍ່ບໍ່ໄດ້ສືບສວນການຄາດ ຕະກຳນີ້ເລີຍ.

ໄດ້ມີການຄາດຕະກຳຊາວຕ່າງຊາດສີ່ຄົນ ແລະຄົນໄທອີກສອງຄົນ ທາງພາກຕາເວັນອອກສຽງເຫນືອຂອງ ປະເທດໄທ, ເຊິ່ງຊາວລາວທັງຫມົດເປັນຊົນເຜົ່າ ແລະມີສາຍສຳພັນກັບລາວລະບອບເກົ່າ. ໃນ ວັນທີ 18 ມັງກອນ ໄດ້ມີການຄາດຕະກຳຜົວເມຍຄູ່ຫນຶ່ງທີ່ແຂວງຫນອງຄາຍເຊິ່ງ ຜົວເມຍຄູ່ນັ້ນອ້າງວ່າ ເປັນເຊື້ອ ສາຍ ຂອງພະລາດສະວົງລາວໃນສະໄຫມເກົ່ານັ້ນ. ໃນວັນທີ 11 ພຶດສະພາ, ອະດີດທະຫານ ລາວສະ ໄຫມເກົ່າ ແລະ ພັນລະຍາໄດ້ຖືກຄາດຕະກຳທີແຂວງອຸບົນ ຣາຊະທານີ. ໃນວັນທີ 13 ເດືອນທັນວາ ຍັງມີຊາຍສອງຄົນ ຖືກຄາດຕະກຳຢູ່ແຂວງອຸບົນລາດສະທານີ ເຊິ່ງຜູ້ນຶ່ງແມ່ນອະດີດທະຫານ ແລະ ອີກ ຄົນຫນຶ່ງແມ່ນອະດີດ ຕຳຫລວດລາວສະໄຫມເກົ່າ. ເຈົ້າຫນ້າທີໄທໄດ້ກຳລັງສືບສວນຫາສາເຫດໃນຊ່ວງ ຕອນທ້າຍປີ. ສື່ ແລະ ອົງການທີບໍ່ຂຶ້ນກັບລັດຖະບານອ້າງວ່າ ລັດຖະບານລາວມີສ່ວນຮວ່ມໃນການ ຄາດຕະກຳດັ່ງກ່າວ, ຢ່າງໃດ ກໍ່ຕາມລັດຖະບານລາວໄດ້ປະຕິເສດທຸກໆການມີສ່ວນຮວ່ມ ແລະບໍ່ໄດ້ ສືບສວນເຫດການເຫລົ່ານີ້.

ບໍ່ມີຂ່າວຄາວຄືບຫນ້າໃນກໍລະນີທີ່ຜູ້ຄົນທີຖືກກ່າວຫາວ່າຖືກຄາດຕະກຳໂດຍເຈົ້າຫນ້າທີ່ຕຳຫລວດໃນຊຸມ ປີທີ່ ຜ່ານມາ ລວມທັງການຕາຍຂອງທ້າວອາລຸນ ວໍຣະພົມ, ນັກບວດໃນສາດສະໜາ ໂປຣແຕສຕັງ ທີ່ຖືກ ຄາດ ຕະກຳຢູ່ເມືອງປາກກະດິງ, ການຄາດຕະກຳເດັກນອ້ຍຊາວມົ້ງໃນປີ 2004 ທີ່ ສະມາຊິກ ກປລ ຖືກ ກ່າວຫາ ວ່າເປັນຜູ້ກະທຳ ຢູ່ທີ່ອະດີດ ເຂດພິເສດ ໄຊສົມບູນ ແລະ ການຕາຍຂອງຊາວເຜົ່າມົ້ງ ຊື່ ກົວລີເຮີ ໃນປີ 2004 ທີ່ມີລາຍງານວ່າ ເຂົາເສຍຊີວິດໃນໄລຍະຖືກຄຸມຂັງ ທີ່ ແຂວງຫົວພັນ.

ການປະທະກັນລະຫວ່າງກຳລັງກະບົດ ແລະທະຫານໄດ້ເຮັດໃຫ້ຄົນຈຳນວນບໍ່ມີໃຜຮູ້ໄດ້ຖືກລົ້ມຕາຍ, ລວມທັງປະຊາຊົນທຳມະດາ, ພວກກະບົດ ແລະທະຫານ. ຕະຫຼອດປີ, ຝ່າຍກະບົດໄດ້ລາຍງານວ່າໄດ້ມີ ຄວາມກົດດັນເພີ່ມຂຶ້ນຈາກກອງທັບປະຊາຊົນລາວ (ກປລ) ຕາມຖານທີ່ຕັ້ງຂອງກຸ່ມກະບົດໃນແຂວງບໍລິຄຳ ໄຊ, ຊຽງຂວາງ, ຫຼວງພະບາງ, ແຂວງ ວຽງຈັນ ແລະກໍ່ເຊັ່ນດຽວກັບຢູ່ທີ່ອະດີດເຂດພິເສດໄຊສົມບູນ. ການກົດດັນຢ່າງ ຫນັກຂອງ ກປລ ແມ່ນມີຈຸດປະສົງເຮັດໃຫ້ຄອບຄົວພວກກະບົດທີ່ຍັງເຫລືອຢູ່ໃນປ່ານັ້ນ ອຶດຕາຍ. ຕາມລາຍງານຂອງຝ່າຍກະບົດ, ການໂຈມຕີ ແລະປະຕິບັດການປິດລ້ອມໃຫ້ອຶດຫິວນັ້ນ ເປັນ ເຫດໃຫ້ຫຼາຍສິບຄົນຕ້ອງຕາຍ ແລະບາດເຈັບ, ເຊິ່ງທັງຫມົດນັ້ນກໍ່ແມ່ນແມ່ຍິງ ແລະເດັກນ້ອຍ (ເບິ່ງພາກ 1.ຄ).

**ຂ. ການຫາຍສາບສູນ**

ລັດຖະບານຍັງຄົງປະຕິເສດວ່າບໍ່ໄດ້ກັກຕົວເດັກນ້ອຍຊາວມົ້ງຈຳນວນ 26 ຄົນທີ່ຖືກຜັກດັນໃຫ້ອອກຈາກປະເທດໄທໃນຊ່ວງເດືອນ ທັນວາ ປີ 2005. ຫລັງຈາກເຈົ້າໜ້າທີ່ໄທ ໄດ້ໃຫ້ຫລັກຖານຂອງການເນລະເທດ ດັ່ງກ່າວເຂົ້າສູ່ແຂວງບໍລິຄຳໄຊ, ເຈົ້າໜ້າທີ່ລັດຖະບານໂດຍສ່ວນຕົວແລ້ວຮັບຮູ້ວ່າລັດຖະບານໄດ້ກັກຕົວ ເດັກກຸ່ມນີ້ໄວ້ ແຕ່ໄດ້ປະຕິເສດພາຍຫລັງວ່າບໍ່ເຄີຍກັກຕົວເດັກກຸ່ມນີ້ ແລະ ກໍ່ບໍ່ຮູ້ວ່າເດັກເຫລົ່ານີ້ຢູ່ໃສ (ເບິ່ງ 1.ງ., 2.ຄ., ແລະ 2.ງ).

ບໍ່ມີຂ່າວຄາວເພີ່ມເຕີມຂອງການຫາຍສາບສູນຂອງ ເຈີ ວາ ຢ່າງ ໃນປີ 2004 ເຊິ່ງເຂົາເປັນຄູ່ສອນທີ່ໂຮງຮຽນ ເຜົ່າມົ້ງຢູ່ອະດີດເຂດພິເສດໄຊສົມບູນ.

## ຄ. ການທໍລະມານ ແລະການກະທຳທາລຸນໄຮ້ມະນຸດສະທຳ, ຫຼືແບບເຊື້ອມເສຍຕໍ່າຕ້ອຍ ຫຼືການລົງໂທດ

ກົດໝາຍຫ້າມການທຸບຕີ ຫຼືທໍລະມານບຸກຄົນທີ່ຖືກຈັບຕົວ. ໃນຕົວຈິງຕຳຫຼວດ ແລະກຳລັງຮັກສາຄວາມປອດໄພ ມີບາງຄັ້ງ ກໍໄດ້ກະທຳທາລຸນຕໍ່ນັກໂທດ, ສະເພາະຢ່າງຍິ່ງຜູ້ທີ່ຖືກສົງໃສວ່າມີສ່ວນພົວພັນກັບການຂະບວນການກະບົດ; ເຖິງຢ່າງໃດກໍ່ດີ, ມີການບອກເລົ່າວ່າ ການກະທຳທາລຸນນີ້ ໄດ້ຫລຸດນ້ອຍລົງ, ແລະໃນໄລຍະປີຜ່ານມາ ບໍ່ມີຂໍ້ມູນທີ່ໜ້າເຊື່ອຖືໄດ້ວ່າມີກະການທຳທາລຸນຕໍ່ນັກໂທດ. ບາງຄັ້ງຜູ້ຖືກຄຸມຂັງກໍຖືກທຸບຕີ ແລະຖືກຂັງໃຫ້ຢູ່ຜູ້ດຽວເປັນເວລາດົນນານໃນຫ້ອງມືດສະໜິດ, ແລະມີຫຼາຍກໍລະນີທີ່ຖືກລ່າມໂສ້ທີ່ຂາ ຫຼືຖືກລ໊ອກໄວ້ດ້ວຍຢ່ວງໄມ້ເປັນເວລາດົນນານ. ອະດີດນັກໂທດໄດ້ລາຍງານກ່ຽວກັບຮູບແບບກັກຂັງທີ່ຢຽບຢໍ່າກຽດສັກສີ ເຊັ່ນຖືກລ່າມໂສ້ ແລະກັບມື, ແລະການຂັງດ່ຽວໃນຫ້ອງນ້ອຍບໍ່ມີແສງຖືວ່າເປັນເລື່ອງປົກກະຕິສຳລັບຄຸກໃຫຍ່, ແລະສຳລັບຄຸກນ້ອຍກວ່າລະດັບແຂວງ ຫຼືເມືອງກໍມີການໃສ່ກັບມືຫຼືລ່າມໂສ້ເພື່ອບໍ່ໃຫ້ນັກໂທດໂຕນໜີ. ໃນຊ່ວງເດືອນ ເມສາ ທີ່ແຂວງສາລະວັນໄດ້ມີຊາວຄຣິສຕຽນຖືກກັກຂັງພາຍໃນ ບ້ານ, ມີລາຍງານວ່າເປັນເພາະລາວປະຕິເສດຄຳສັ່ງຈາກນາຍບ້ານເພື່ອໃຫ້ປະລະຄວາມເຊື່ອຖືຂອງລາວ. ລາວຖືກມັນທີ່ຄໍ່ມື ແລະ ຄໍ່ຕີນໄວເປັນເວລາ 10 ວັນ. (ເບິ່ງພາກ 1.ງ ແລະ 2.ຄ).

ໄລຍະປີທີ່ເກັບກຳລາຍງານ, ລັດຖະບານໄດ້ເພີ້ມກຳລັງທະຫານເພື່ອກົດດັນຖານທີ່ໝັ້ນຂອງກຸ່ມກະບົດໃນແຂວງບໍລິຄຳໄຊ, ຊຽງຂວາງ, ຫຼວງພະບາງ, ແຂວງ ວຽງຈັນ ແລະກໍ່ເຊັ່ນດຽວກັບຢູ່ທີ່ອະດີດເຂດພິເສດໄຊສົມບູນ. ກຸ່ມກະບົດໄດ້ລາຍງານວ່າ ການປະຕິບັດການເຫລົ່ານີ້ ເປັນເຫດໃຫ້ຫຼາຍສິບຄົນຕ້ອງຕາຍ ແລະບາດເຈັບ, ເຊິ່ງທັງຫມົດນັ້ນກໍ່ແມ່ນແມ່ຍິງ ແລະເດັກນ້ອຍ (ເບິ່ງພາກ 1.ກ)

### ສະພາບຢູ່ໃນຄຸກ ແລະສູນກັກຂັງ

ສະພາບໃນຄຸກມີອັນແຕກຕ່າງກັນຫຼາຍ ແຕ່ໂດຍທົ່ວໄປແມ່ນໂຫດຫ້ຽມຮ້າຍກາດ. ມີບາງຄັ້ງ ຖືວ່າເປັນໄພຕໍ່ຊີວິດ. ນັກໂທດຢູ່ຄຸກຂອງລັດທີ່ໃຫຍ່ກວ່າໃນວຽງຈັນແມ່ນມີສະພາບໄຄກວ່າຢູ່ຄຸກຕ່າງແຂວງ. ອັດຕາອາຫານການກິນແມ່ນມີໜ້ອຍ, ນັກໂທດສ່ວນຫຼວງຫຼາຍແມ່ນຕ້ອງເພິ່ງອາຫານຈາກຄອບຄົວ. ຄຸກຂະໜາດໃຫຍ່ ສ່ວນຫຼວງຫຼາຍໄດ້ອະນຸຍາດໃຫ້ຄົນໂທດໄດ້ເຮັດສວນຂະໜາດນ້ອຍ ເພື່ອຄົວກິນ. ຜູ້ຄຸມຄົນໂທດເປັນຜູ້ກຳນົດນະໂຍບາຍກ່ຽວກັບການມາຢ້ຽມຢາມ. ດັ່ງນັ້ນມີບາງບ່ອນທີ່ຄອບຄົວສາມາດເຂົ້າໄປຢ້ຽມຢາມໄດ້ເລື້ອຍໆ, ແຕ່ຢູ່ຄຸກບາງແຫ່ງ ການຢ້ຽມຢາມຖືວ່າຈຳກັດຫຼາຍ.

ຈາກການລາຍງານທີ່ໜ້າເຊື່ອຖືໄດ້ ຊີ້ໃຫ້ເຫັນວ່ານັກໂທດທີ່ເປັນຊົນເຜົ່າສ່ວນໜ້ອຍ ແລະນັກໂທດຄົນຕ່າງປະເທດຈຳນວນນຶ່ງໄດ້ຖືກທາລຸນຫຼາຍສົມຄວນ. ອະດີດນັກໂທດໄດ້ລາຍງານວ່າການຄຸມຂັງໂດຍບໍ່ໃຫ້ຕິດຕໍ່ພົວພັນພາຍນອກ ໄດ້ຖືກນຳໃຊ້ໃຫ້ເປັນເຄື່ອງມືສືບສວນສອບສວນວິທີນຶ່ງ ແລະຖືກນຳໃຊ້ຖ້າທາງການ

ຄາດວ່ານັກໂທດເລົ່ານັ້ນຈະສ້າງບັນຫາ; ເຖິງຢ່າງໃດກໍຕາມໃນຫຼາຍປີຜ່ານມານີ້ ລາຍງານກ່ຽວກັບເຫດການປະເພດນີ້ແມ່ນໜ້ອຍລົງ. ເຖິງແມ່ນວ່າຄຸກສ່ວນຫຼວງຫຼາຍໄດ້ມີສະຖານທີ່ປິ່ນປົວໃນຮູບໃດຮູບນຶ່ງ, ໂດຍທົ່ວໄປມັກມີທ່ານໝໍ ຫຼືພະຍາບານ, ແຕ່ສິ່ງ ອຳນວຍຄວາມສະດວກໃນການປິ່ນປົວແມ່ນຂາດເຂີນທີ່ສຸດ ແລະ ການປິ່ນປົວໃນກໍລະນີເຈັບເປັນຮ້າຍແຮງແມ່ນບໍ່ມີ. ມີບາງບ່ອນ ນັກໂທດສາມາດອອກໄປປິ່ນປົວຂ້າງນອກໄດ້ ຖ້າຫາກເຂົາສາມາດຈ່າຍຄ່າປິ່ນປົວ ແລະຄ່າໃຊ້ຈ່າຍຂອງຕຳຫຼວດທີ່ຕິດຕາມ.

ຄຸກບັນຈຸທັງນັກໂທດຊາຍ ແລະຍິງ, ແຕ່ຫາກຂັງຢູ່ຄົນລະຫ້ອງ. ໃນຄຸກບາງບ່ອນນັກໂທດເດັກນ້ອຍ ແລະຜູ້ໃຫຍ່ຢູູ່ຂັງຢູ່ນຳກັນ. ອົງການຈັດຕັ້ງສາກົນສະເໜີຄັດຄ້ານແຜນຂອງລັດຖະບານທີ່ຈະສ້າງບ່ອນຄຸມຂັງສະເພາະສຳລັບຜູ້ຖືກຄຸມຂັງໜຸ່ມນ້ອຍ ໂດຍໄດ້ຊີ້ແຈງວ່າຄົນໜຸ່ມນ້ອຍນັ້ນ ຖ້າໃຫ້ດີທີ່ສຸດ ແມ່ນແຍກເຂົາອອກຢູ່ຕ່າງຫາກໃນສະຖານທີ່ຄຸມຂັງບ່ອນດຽວກັບຜູ້ໃຫຍ່ ຊຶ່ງຢູ່ໃກ້ກັບເຮືອນຊານ ແລະຄອບຄົວຂອງເຂົາເຈົ້າ. ນັກໂທດໜຸ່ມນ້ອຍ ສ່ວນຫຼວງຫຼາຍແມ່ນໄດ້ກະທຳຜິດຍ້ອນຢາເສບຕິດ ແລະອາດສະຍາກຳເບົາບາງ. ແທນທີ່ຈະສົ່ງຊາວໜຸ່ມທີ່ກະທຳຜິດໄປຂັງຄຸກ, ທາງການໄດ້ໝູນໃຊ້ສະຖານທີ່ປິ່ນປົວຢາເສບຕິດ ເປັນສູນລວມຂອງຜູ້ກະທຳຜິດໜຸ່ມນ້ອຍ. ເຖິງແມ່ນວ່າເງື່ອນໄຂໃນສະຖານທີ່ປິ່ນປົວຢູ່ທີ່ນີ້ ຈະດີກວ່າຢູ່ໃນຄຸກກໍຕາມ, ເງື່ອນໄຂປິ່ນປົວແມ່ນແຫ້ງແລ້ງ ແລະໄລຍະເວລາຂອງການກັກຂັງຈະບໍ່ແນ່ນອນ.

ໄລຍະປີທີ່ເກັບກຳລາຍງານ, ກອງທຶນການເງິນສະຫະປະຊາຊາດເພື່ອເດັກ (ຢູນິເຊັບ) ໄດ້ເລີ່ມເກັບກຳຈຳນວນນັກໂທດເດັກນ້ອຍ ແຕ່ລັດຖະບານກໍ່ໄດ້ຢຸດຢັ້ງກິດຈະກຳດັ່ງກ່າວຂອງອົງການຫລັງຈາກໂຄງການເລີ້ມຕົ້ນໄດ້ບໍ່ດົນ. ໃນເວລາທີ່ໂຄງການຖືກຢຸດໄວ້ນັ້ນ, ຢູນິເຊັບ ໄດ້ເກັບກຳຈຳນວນນັກໂທດເດັກໄດ້ຫລາຍກວ່າ 600 ຄົນໃນຄຸກຕ່າງໆຢູ່ຕ່າງແຂວງ.

ລັດຖະບານບໍ່ໄດ້ອະນຸຍາດໃຫ້ຕິດຕາມເບິ່ງສະພາບຄຸກແບບເອກະລາດ. ຄະນະກຳມະການກາແດງສາກົນໄດ້ສືບຕໍ່ຄວາມພະຍາຍາມທີ່ໄດ້ດຳເນີນມາເຫິງນານ ເພື່ອໃຫ້ມີຕາງໜ້າທາງການໃນປະເທດ ເພື່ອເຮັດພາລະໜ້າທີ່ຕິດຕາມສະພາບໃນຄຸກ. ແຕ່ຕົກມາຮອດທ້າຍປີ, ລັດຖະບານຍັງຄົງບໍ່ໄດ້ອະນຸຍາດຕາມຄຳຂໍຮ້ອງຂອງຄະນະກຳມະການກາແດງສາກົນດັ່ງກ່າວນັ້ນ. ໃນເວລານັ້ນ ລັດຖະບານໄດ້ອະນຸຍາດໃຫ້ພະນັກງານ ອົງການ ສປຊ ແລະອົງການບໍ່ສັງກັດລັດເຂົ້າຢ້ຽມເບິ່ງສະຖານທີ່ກັກຂັງ ນັກໂທດເດັກທີ່ຈັດໄວ້ແຕ່ການເຂົ້າ ຢ້ຽມນັ້ນແມ່ນຈຳກັດທີ່ສຸດ.

**ງ. ການຈັບກຸມ ຫຼືຄຸມຂັງແບບຕາມລຳພັງໃຈ.**

ກົດໝາຍຫ້າມບໍ່ໃຫ້ທຳການຈັບກຸມ ແລະຄຸມຂັງຕາມລຳພັງໃຈ; ແຕ່ໃນຕົວຈິງລັດຖະບານບໍ່ໄດ້ນັບຖືເງື່ອນໄຂຂອງກົດໜາຍເຫລົ່ານັ້ນ, ແລະ ຍັງຄົງສືບຕໍ່ຈັບກຸມ ແລະຄຸມຂັງຕາມລຳພັງໃຈຢູ່.

**ບົດບາດຂອງຕຳຫຼວດ ແລະເຄື່ອງມືເພື່ອຮັກສາຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ຍັງຮັກສາບົດບາດຄວາມສະຫງົບພາຍໃນ, ແຕ່ຫາກແບ່ງຄວາມຮັບຜິດຊອບການຄວບຄຸມວຽກງານຂອງລັດນີ້ກັບ ກຳລັງຄວາມປອດໄພຂອງກະຊວງປ້ອງກັນຊາດ ແລະແນວໂຮມຂອງພັກ ແລະປະຊາຊົນ ( ອົງການຈັດຕັ້ງມະຫາຊົນຄວບຄຸມໂດຍພັກປະຊາຊົນປະຕິວັດລາວ).

ກະຊວງການຕ່າງປະເທດໂດຍໄດ້ຮັບການສະໜັບສະໜູນຈາກກະຊວງປ້ອງການຄວາມສະຫງົບ ແມ່ນຮັບຜິດຊອບໃນການຄຸ້ມຄອງຄົນຕ່າງປະເທດ, ລວມທັງການຕິດຕາມເພື່ອບໍ່ໃຫ້ເຂົ້າໄປໃນເຂດຫວງຫາມ ຫລືບໍ່ໃຫ້ມີຄວາມ ສຳພັນທາງເພດກັບພົນລະເມືອງຂອງຕົນ.

ກະຊວງປ້ອງກັນຄວາມສະຫງົບລວມມີຕຳຫຼວດທ້ອງຖິ່ນ, ຕຳຫຼວດຈາລະຈອນ, ຕຳຫຼວດກວດຄົນເຂົ້າເມືອງ, ຕຳຫຼວດຄວາມປອດໄພ (ລວມທັງຕຳຫຼວດຊາຍແດນ) ແລະຫົວໜ່ວຍຕຳຫຼວດປະກອບອາວຸດອື່ນໆ. ຕຳຫຼວດສື່ສານມີຄວາມຮັບຜິດຊອບການສື່ສານຕິດຕໍ່ທາງດ້ານໂທລະສັບ ແລະເອເລັກໂຕນິກ. ກຳລັງປະກອບອາວຸດແມ່ນຮັບຜິດຊອບກັບຄວາມປອດໄພພາຍໃນເຊັ່ນດຽວ ຊຶ່ງໃນນັ້ນລວມມີການຕ້ານການກໍ່ການຮ້າຍການກະບົດ ແລະຄວບຄຸມລະບົບກອງຫຼອນທີ່ກ້ວາງຂວາງໃນໝູ່ບ້ານຕ່າງໆ. ການສໍ້ລາດບັງຫຼວງໃນໝູ່ຕຳຫຼວດຖືວ່າເປັນບັນຫານຶ່ງ. ເຈົ້າໜ້າທີ່ຕຳຫຼວດບາງຄົນໄດ້ໃຊ້ອຳນາດຂອງຕົນບີບຄັ້ນເອົາສິນບົນຈາກປະຊາຊົນ. ຕາມໄດ້ຮັບລາຍງານ ໜ້ອຍໜັກໜ້ອຍໜາທີ່ລັດຖະບານຈະອະນຸຍາດໃຫ້ລົງໂທດເຈົ້າໜ້າທີ່ຜູ້ກະທຳຜິດຍ້ອນ ການສໍ້ລາດບັງຫຼວງ. ຍັງບໍ່ມີກົນໄກທາງການເພື່ອສືບສວນການກະທຳຜິດຂອງເຈົ້າໜ້າທີ່ຕຳຫຼວດເທື່ອ. ໃນທິດສະດີ ຄະນະກຳມະການກວດສອບແຫ່ງຊາດຂອງລັດຖະບານມີຄວາມຮັບຜິດຊອບຖອດຖອນການສໍ້ລາດບັງຫຼວງໃນບັນດາກະຊວງຂອງລັດຖະບານທັງໝົດ, ລວມທັງກະຊວງປ້ອງກັນຄວາມສະຫງົບ. ແຕ່ໃນຕົວຈິງ, ກິດຈະກຳສືບສວນຂອງຄະນະດັ່ງກ່າວເຫັນວ່າມີໜ້ອຍທີ່ສຸດ. ມີບາງຄັ້ງຄາວ ເຈົ້າໜ້າທີ່ລະດັບຕ່ຳໄດ້ຖືກຈັບກຸມ ແລະລົງໂທດຍ້ອນ ການສໍ້ລາດບັງຫຼວງ. ໄລຍະປີທີ່ເກັບກຳລາຍງານໄດ້ມີເຈົ້າຫນ້າທີ ພາສີຫລາຍຄົນຖືກໄລອອກລາດສະການຍອນສໍ້ລາດບັງຫລວງ.

ຕຳຫຼວດໄດ້ຮັບການອົບຮົມຢູ່ວິທະຍາຄານຕຳຫຼວດແຫ່ງຊາດ, ແຕ່ບໍ່ຮູ້ໄດ້ວ່າໃນຫຼັກສູດຂອງສະຖາບັນດັ່ງກ່າວ ມີການສົນທະນາເລື່ອງສໍ້ລາດບັງຫຼວງຫຼາຍໜ້ອຍຊ່ຳໃດ. ໂດຍໄດ້ຮັບການຊີ້ນຳຂອງ ພປປລ, ສື່ ທີ່ຖືກລັດຖະບານຄວບຄຸມນັ້ນ ແມ່ນໜ້ອຍໜັກໜ້ອຍໜາຈະລາຍງານຂ່າວເຈົ້າໜ້າທີ່ສໍ້ລາດບັງຫຼວງ.

**ການຈັບກຸມ ແລະຄຸມຂັງ**

ທັງຕຳຫຼວດ ແລະກຳລັງທະຫານມີອຳນາດຈັບກຸມ, ເຖິງແມ່ນວ່າປົກກະຕິແລ້ວ ມີແຕ່ຕຳຫຼວດໄດ້ເຮັດໜ້າທີ່ນີ້. ຕຳຫຼວດໄດ້ໝູນໃຊ້ໂອກາດທີ່ກວ້າງຂວາງຂອງຕົນເພື່ອທຳການຈັບກຸມໂດຍບໍ່ຕ້ອງໃຊ້ໃບອະນຸຍາດສັ່ງຈັບ ຍ້ອນອ້າງວ່າເປັນກໍລະນີ "ຮີບດ່ວນ". ມີບາງຄັ້ງ ມີລາຍງານວ່າຕຳຫຼວດໄດ້ໃຊ້ການຈັບກຸມ ເພື່ອເປັນວິທີການຂົ່ມຂູ່ ຫຼືເພື່ອບີບຄັ້ນເອົາສິນບົນ. ໄດ້ເຄີຍມີລາຍງານວ່າກຳລັງທະຫານໃນບາງຄັ້ງຄາວໄດ້ຈັບກຸມ ຫຼືກັກຕົວບຸກຄົນທີ່ສົງໃສວ່າມີພຶດຕິກຳກະບົດ.

ກຳນົດເວລາອະນຸຍາດໃຫ້ກັກຂັງໂດຍບໍ່ສົ່ງຂຶ້ນສານ ແມ່ນບໍ່ໃຫ້ກາຍນຶ່ງປີ. ໄລຍະເວລາກັກຂັງໂດຍບໍ່ມີການຮັບຟັງຄະດີ ກ່ອນຂຶ້ນສານ ຫຼືການຕັ້ງຂໍ້ຫາເປັນທາງການ ດ້ວຍກົດໝາຍແມ່ນມີກຳນົດນຶ່ງປີເຊັ່ນດຽວ, ແຕ່ກຳນົດເວລາດັ່ງກ່າວນີ້ ບາງຄັ້ງກໍບໍ່ໄດ້ປະຕິບັດ. ມີລາຍງານວ່າ ຫ້ອງການອະທິໄອຍະການ ມີຄວາມພະຍາຍາມເພື່ອໃຫ້ ນຳນັກໂທດທັງຫມົດຂຶ້ນສານເພື່ອຕັດສິນພາບໃນກຳນົດນຶ່ງປີ, ແຕ່ການກຳນົດດັ່ງກ່າວບາງຄັ້ງກໍ່ຖືກເມີນເສີຍ. ຫ້ອງການອະທິໄອຍະການຕ້ອງອະນຸຍາດໃຫ້ຕຳຫຼວດຄວບຄຸມຕົວຜູ້ສົງໃສໄວ້ເພື່ອລໍຖ້າການສືບສວນ. ໄດ້ມີການອະນຸຍາດເພີ່ມສາມເດືອນ, ແລະໃຕ້ກົດໝາຍນັ້ນ ຜູ້ຕ້ອງສົງໃສຈະຖືກປ່ອຍໂຕພາຍໃນເວລາສູງສຸດບໍ່ໃຫ້ເກີນນຶ່ງປີ ຖ້າຫາກຕຳຫຼວດບໍ່ມີຫຼັກຖານ ເພື່ອຈະກ່າວຫາຜູ້ກ່ຽວ. ມີລະບົບປະກັນໂຕ, ແຕ່ຫາກວ່າ ໃນພາກປະຕິບັດແລ້ວ, ການປະກັນໂຕນີ້ໄດ້ເອົາໄປນຳໃຊ້ ແບບຂາດຫຼັກການຕາມອຳເພີໃຈ ແລະໃນພາກປະຕິບັດມັກຈະໄປຮອດບ່ອນຕ້ອງຊື້ຈ້າງເຈົ້າໜ້າທີ່ຄຸກ ເພື່ອປ່ອຍໂຕນັກໂທດ. ການຕິດຕໍ່ຫາສະມາຊິກຄອບຄົວ ແລະທະນາຍຄວາມແມ່ນບໍ່ຮັບປະກັນ. ດັ່ງນັ້ນການກັກຂັງໂດຍບໍ່ໃຫ້ຕິດຕໍ່ກັບພາຍນອກ ຍັງຄົງເປັນບັນຫາ; ເຖິງຢ່າງໃດກໍຕາມ ຮູບການນີ້ບໍ່ໄດ້ຖືກນຳມາໃຊ້ເລື້ອຍປານໃດຫຼັງໆມານີ້ (ເບິ່ງພາກນຶ່ງ. 1 ຄ) ຂໍ້ບັງຄັບກຳນົດອາຍຸຄວາມຖືກນຳໃຊ້ເກືອບວ່າ ທຸກໆກໍລະນີອາດສະຍາກຳ. ການຖືກກ່າວຫາລ່ວງລະເມີດກົດໝາຍອາດຍາມັກຈະນຳໄປສູ່ການກັກຂັງເປັນເວລາດົນນານກ່ອນຖືກນຳສົ່ງຄະດີ

ໄປສານ. ໂດຍບໍ່ມີການກ່າວຫາໃດໆ ແລະບໍ່ໄດ້ອະນຸຍາດໃຫ້ຜູ້ຖືກຄຸມຂັງໄດ້ຮັບການປົກປ້ອງດ້ວຍກົດໝາຍໃນລະດັບຕໍ່າສຸດ. ມີບາງຄັ້ງເຈົ້າໜ້າທີ່ໄດ້ສືບຕໍ່ກັກຂັງຄົນໂທດ ເຖິງແມ່ນວ່າໄລຍະຈຳຄຸກທີ່ສານສັ່ງໄດ້ໝົດໄປແລ້ວ. ສະເພາະຢ່າງຍິ່ງໃນກໍລະນີທີ່ຄົນໂທດບໍ່ສາມາດຈ່າຍຄ່າປັບໃໝຂອງສານ. ອີກກໍລະນີນຶ່ງແມ່ນ ຄົນໂທດຈະຖືກ ປ່ອຍຕົວກໍ່ຂຶ້ນຢູ່ກັບວ່າເຂົາຈະຈ່າຍຄ່າປັບໄຫມໃນເວລາ ຕໍ່ມາ.

ໃນວັນທີ 1 ເມສາ, ຊາຍຄຣິດສະຕຽນຄົນນຶ່ງຢູບ້ານທາແບງ, ແຂວງສາລະວັນໄດ້ຖືກກັກໂຕຢູ່ເຮືອນຂອງເຂົາເອງເປັນເວລາຫລາຍເດືອນ ໂດຍມີລາຍງານວ່າບໍ່ມີການຕັ້ງຂໍ້ຫາໄດໆ ແຕ່ເພາະລາວປະຕິເສດທີ່ຈະປະລະ ຄວາມເຊື່ອຖືຂອງລາວ. ມີລາຍງານວາໃນໄລຍະ 10 ວັນທຳອິດທີ່ເຂົາຖືກກັກຂັງຢູ່ທີ່ເຮືອນ ຂອງລາວນັ້ນ ລາວຖືກມັດທີ່ມື ແລະ ຄໍ່ຕີນ, ມີລາຍງານຕື່ມອີກວ່າລາວໄດ້ຖືກປ່ອຍຕົວໃນເດືອນຕຸລາ (ເບິ່ງພາກ 1. ຄ ແລະ 2.ຄ). ໃນວັນທີ 11 ສິງຫາ, ມີຊາວຄຣິດສະຕຽນເຊິ່ງເປັນຊົນເຜົ່າສອງຄົນໄດ້ຖືກກັກຕົວທີ່ເມືອງເຊໂປນ ແຂວງສະຫວັນນະເຂດ, ມີລາຍງານວ່າການຈັບກູມຄັ້ງນີ້ແມ່ນຍ້ອນພວກເຂົ້າໃດ້ເວົ້າກ່ຽວກັບການເຊື່ອຖື ສາດສະຫນາຄຣິດສະຕຽນຂອງພວກເຂົາ ແລະ ເພາະພວກເຂົາຮັບຮູ້ແລະເຂົ້າໃຈກ່ຽວກັບທັດສະນະແບບຕາເວັນຕົກ. ໃນຊ່ວງຕອນທ້າຍປີທີ່ເກັບກຳຂໍ້ມູນລາຍງານນີ້ ຊາຍທັງສອງຍັງຢູ່ໃນຄຸກໂດຍບໍ່ມີຂໍ້ກ່າວຫາໃດໆ.

ໃນວັນທີ 17 ພະຈິກ, ຊົນເຜົ່າຂະມຸທີ່ຖືສາດສະຫນາຄຣິດສະຕຽນ 11 ຄົນໄດ້ຖືກຈັບກຸມທີ່ບ້ານຄອນກັນແຂວງວຽງຈັນພວັມດວັຍຊາວຕ່າງປະເທດ 2 ຄົນ. ຊາວຕ່າງປະເທດໄດ້ຖືກປ່ອຍຕົວຫລັງຈາກຖືກຄຸມຂັງ2 ອາທິດ ແລະມີລາຍງານວ່າໄດ້ຈ່າຍຄ່າປັບໄຫມເປັນເງິນ 9,000 ໂດລາ ສະຫະລັດ. ຍັງມີຊົນເຜົ່າຂະມຸທີ່ຖືສາດສະຫນາຄຣິດສະຕຽນ 2ຄົນອີກທີ່ຢູ່ຫມູ່ບ້ານດຽວກັນຖືກຈັບກຸມໃນເວລາຕໍ່ມາ. ໃນຊວງຕອນທ້າຍປີທີ່ເກັບກຳຂໍ້ມູນລາຍງານນີ້ 13 ຄົນນັ້ນຍັງຖືກກັກຂັງຢູ່ (ເບິ່ງ ພາກ 2.ຄ)

ໃນຊວ່ງປີທີເຮັດລາຍງານ ເຈົ້າຫນ້າທີ່ໄດ້ຈັບກຸມ ໂດຍບໍ່ປະກົດມີຂໍ້ກ່າວຫາໃດໆ ຫລື ບໍ່ສາມາດກ່າວຂໍ້ຫາ, ເຊິ່ງມີຊາວຄຣິດສະຕຽນຖືກຈັບທັງຫມົດ 49 ຄົນເພາະພວກເຂົາພະຍາຍາມປະຕິບັດສາດສະຫນາ, ປະຕິເສດທີ່ຈະປະລະຄວາມເຊື່ອຖືດ້ານສາດສະຫນາຂອງພວກເຂົາ ຫລືສົງໃສວ່າພວກເຂົານິຍົມຊາດຕາເວັນຕົກ ຫລື ຕໍ່ຕ້ານລັດຖະບານ.

ໃນຊວງທ້າຍປີ ມີກຸ່ມຊາວມົ້ງຄຣິດສະຕຽນ 27 ຄົນ ເຊິ່ງ 26 ຄົນຍັງແມ່ນເດັກນອ້ຍຢູ່ ເຊິ່ງສັນນິຖານວ່າຍັງຄົງຖືກຄຸມຂັງຢູ່. ໃນເດືອນ ທັນວາປີ 2005 ລັດຖະບານໄດ້ກັກຕົວພວກເຂົາຫລັງຈາກເຈົ້າຫນ້າທີ່ໄທໄດ້ເນລະເທດພວກເຂົາເຂົ້າແຂວງບໍລິຄຳໄຊຢ່າງບໍ່ເປັນທາງການ (ເບິ່ງ ຂໍ້ 1.ຂ., 2.ຄ., ແລະ 2.ງ)

ໃນຊ່ວງຕົ້ນປີເຈົ້າຫນ້າທີທີ່ເມືອງພີນ, ແຂວງສະຫວັນນະເຂດ ໄດ້ປ່ອຍຕົວຊົນເຜົ່າບຣູ ທີ່ຖືກຈັບເພາະເຂົາປະຕິເສດ ທີຈະຢຸດເຊົາການປະກອບພິທີກຳທາງສາດສະຫນາຂອງພວກເຂົາ, ແຕ່ຖືກຕັດສິນໃນປີ 2005 ໃນຂໍ້ຫາ ຄ້າອາວຸດເຖື່ອນ.

ບໍ່ໄດ້ມີລາຍງານກ່ຽວກັບການທີ່ຕຳຫຼວດບໍ່ໄດ້ປະຕິບັດຕາມຄຳສັ່ງສານ ໂດຍກັກຂັງບຸກຄົນທີ່ສານປະກາດຍົກໂທດໄປແລ້ວ. ໄດ້ມີລາຍງານວ່າຕຳຫຼວດທ້ອງຖິ່ນບາຄັ້ງສືບຕໍ່ກັກຂັງບຸກຄົນທີ່ທາງຂັ້ນສູງກວ່ານັ້ນໄດ້ສັ່ງໃຫ້ປ່ອຍ. ຍັງບໍ່ທັນມີກໍລະນີທີ່ຕຳຫຼວດໄດ້ຖືກຕຳໜິ ຫຼືຖືກທຳໂທດຍ້ອນການກະທຳເຊັ່ນນັ້ນ. ຫ້ອງການອາທິໄອຍະການໄດ້ພະຍາຍາມໃຫ້ມີການປະຕິບັດຕາມກົດໝາຍໃນເລື່ອງຄຸມຂັງຜູ້ຕ້ອງຫາ, ແຕ່ພ້ອມກັນນັ້ນກໍ່ຮັບຮູ້ວ່າຕຳຫຼວດຍັງສືບຕໍ່ບໍ່ປະຕິບັດຕາມຂໍ້ກຳນົດຕ່າງໆເລົ່ານີ້ ໃນລະດັບກ້ວາງຂວາງ.

**ຈ. ການພິຈາລະນາຄະດີແບບເປີດເຜີຍ ແລະຍຸດຕິທຳ**

ກົດໝາຍກຳນົດໃຫ້ລະບົບຕຸລາການ ແລະຫ້ອງການອະທິໄອຍະການມີຄວາມເປັນເອກະລາດ; ແຕ່ສະມາຊິກລັດຖະບານ ແລະເຈົ້າໜ້າທີ່ພັກອາວຸໂສມັກຈະມີອິດທິພົນຕໍ່ການຕັດສິນຂອງສານ ເຖິງແມ່ນວ່າສະພາບດັ່ງກ່າວນີ້ມີໜ້ອຍກວ່າໃນອະດີດ. ສະພາບຜູ່ກະທຳຜິດລອຍນວນບໍ່ຕ້ອງຮັບໂທດ ແລະການສໍ້ລາດບັງຫຼວງຍັງຄົງເປັນບັນຫາ. ໄດ້ມີລາຍງານວ່າຜູ້ພິພາກສາບາງຄົນສາມາດຊື້ຈ້າງໄດ້. ຄະນະປະຈຳຂອງສະພາແຫ່ງຊາດ ຊຶ່ງສະມາຊິກແມ່ນສະພາເປັນຜູ້ເລືອກ ເປັນອົງການທີ່ແຕ່ງຕັ້ງຜູ້ພິພາກສາຕະຫຼອດຊີວິດສະພາແຫ່ງຊາດສາມາດປົດຜູ້ພິພາກສາໄດ້ຍ້ອນເຫດຜົນ "ຍ້ອນການກະທຳທີ່ບໍ່ເໝາະສົມ" . ອີງຕາມແຫຼ່ງຂ່າວລັດຖະບານ, ນັບແຕ່ປີ 1991 ມາມີຜູ້ພິພາກສາລະດັບເມືອງພຽງນຶ່ງຄົນໄດ້ຖືກປົດ ຍ້ອນການປະຕິບັດທີ່ບໍ່ເໝາະສົມ.

ສານປະຊາຊົນມີ 4 ລະດັບ: ສານເມືອງ, ສານເທດສະບານ ແລະແຂວງ, ສານອຸທອນ ແລະສານປະຊາຊົນສູງສຸດ. ໃນປີ 2004 ສານສູງໄດ້ສ້າງຕັ້ງສານການຄ້າ, ສານຄອບຄົວ ແລະສານເດັກ. ການຕັດສິນຂອງສານໃນລະດັບຕ່ຳກວ່ານັ້ນສານສູງສາມາດທົບທວນຄືນໄດ້, ແຕ່ຈະເຮັດຄືກັນກັບການຕັດສິນຂອງສານທະຫານແມ່ນບໍ່ໄດ້. ທັງຝ່າຍຈຳເລີຍ ແລະໄອຍະການໃນສານພົນລະເຮືອນມີສິດອຸທອນ ຖ້າບໍ່ພໍໃຈກັບຄຳຕັດສິນ. ມີກໍລະນີທີ່ພົນລະເຮືອນທີ່ອາດຖືກຕັດສິນໂດຍສານທະຫານແຕ່ກໍລະນີດັ່ງກ່າວນີ້ບໍ່ຄ່ອຍມີ.

**ຂັ້ນຕອນການພິຈາລະນາຄະດີ**

ຜູ້ພິພາກສາໃນສານ, ບໍ່ແມ່ນລູກຂຸນ, ຈະເປັນຜູ້ຕັດສິນວ່າຜິດ ຫຼືບໍລິສຸດຕໍ່ຄຳກ່າວຫາ. ຜູ້ພິພາກສາທຸກຄົນແມ່ນສະມາຊິກພັກຄອມມຸນິດ. ການພິຈາລະນາຄະດີທີ່ພົວພັນເຖິງບາງກົດໝາຍອາດຍາດ ແລະກ່ຽວຂ້ອງກັບຄວາມປອດໄພແຫ່ງຊາດ, ຄວາມລັບຂອງລັດ, ເດັກອາຍຸຕ່ຳກວ່າ 16 ປີ ຫຼືກ່ຽວຂ້ອງກັບບາງປະເພດຂອງກົດໝາຍຄອບຄົວ, ການພິຈາລະນາຄະດີດັ່ງກ່າວນັ້ນແມ່ນປິດບໍ່ໃຫ້ສາທາລະນະຊົນເຂົ້າຟັງໄດ້.

ກົດໝາຍກຳນົດໃຫ້ມີການພິສູດຄະດີແບບເປີດເຜີຍ ແລະອະນຸຍາດໃຫ້ຈຳເລີຍໃນຄະດີແພ່ງມີສິດປ້ອງກັນໂຕເອງ ໂດຍໄດ້ຮັບການຊ່ວຍເຫຼືອຈາກທະນາຍຄວາມ ຫຼືບຸກຄົນອື່ນ. ທະນາຍຄວາມເພື່ອສູ້ຄະດີແມ່ນຈະຖືກຈັດ ໃຫ້ໃນຄ່າໃຊ້ຈ່າຍລາຄາລັດຖະບານສຳລັບກໍລະນີທີ່ກ່ຽວຂອງກັບເດັກ, ກໍລະນີທີ່ເປັນໄປໄດ້ ວ່າຈະຖືກ ຈຳຄຸກກຕະຫລອດຊີວິດ ຫລື ຖືກຕັດສິນປະຫານຊີວິດ ຫລືກໍລະນີທີ່ມີລັກສະນະສັບສົນເຊັ່ນວ່າ ກໍລະນີ ທີ່ກ່ຽວຂອງກັບຊາວຕ່າງປະເທດ. ກົດໝາຍຮຽກຮ້ອງໃຫ້ທາງການແຈ້ງໃຫ້ຄົນໄດ້ຮູ້ເຖິງສິດທິຕົນເອງ, ກົດໝາຍຍັງໄດ້ເວົ້າເຖິງການທີ່ຈຳເລີຍອາດໃຫ້ຜູ້ໃດຜູ້ນຶ່ງຊ່ວຍໃນການກະກຽມການສະເໜີບັນຫາຄະດີເປັນລາຍລັກອັກສອນ ແລະຕິດຕາມເຂົາໄປໃນເວລາມີການພິຈາລະນາໃນສານ; ເຖິງຢ່າງໃດກໍຕາມ ມີພຽງແຕ່ຈຳເລີຍເທົ່ານັ້ນທີ່ອາດອ້າງເຫດຜົນດ້ວຍປາກເປົ່າໃນການພິຈາລະນາຄະດີອາຍາ. ຈຳເລີຍໄດ້ຮັບອະນຸຍາດ ໃຫ້ຖາມພະຍານ, ສະແດງພະຍານ ແລະ ຫລັກຖານດວ້ຍຕົວຂອງເຂົາເອງ.

ຄູ່ຄວາມໃນຄະດີອາດເລືອກສະມາຊິກຂອງສະພາທະນາຍຄວາມເພື່ອສູ້ຄະດີ. ສະພາທະນາຍຄວາມທີ່ມີສະມາຊິກເກືອບ 50 ຄົນ ໂດຍເປັນອົງການເອກະລາດພຽງແຕ່ຊື່ ຍ້ອນວ່າໄດ້ຮັບການແນະນຳຈາກກະຊວງຍຸດຕິທຳ. ຍ້ອນເຫດຜົນຈຳນວນນຶ່ງ ລວມທັງການຂາດເງິນ, ຂາດທະນາຍຄວາມ ແລະຍ້ອນຄວາມເຂົ້າໃຈໂດຍທົ່ວໄປວ່າທະນາຍຄວາມບໍ່ສາມາດມີອິດທິພົນໃນການຕັດສິນຂອງສານໄດ້, ຈຳເລີຍມັກຈະບໍ່ມີທະນາຍຄວາມ ຫຼືຕົວແທນທີ່ໄດ້ຮັບການອົບຮົມເຂົ້າມາຊ່ວຍ. ພາຍໃຕ້ກົດໝາຍໃຫ້ເຂົ້າໃຈວ່າ ຈຳເລີຍນັ້ນເປັນຜູ້ເຂົ້າໃຈວ່າບໍລິສຸດ. ເຖິງຢ່າງໃດກໍດີໃນພາກປະຕິບັດແລ້ວຜູ້ພິພາກສາມັກຈະຕັດສິນໃຈລ່ວງໜ້າວ່າຈຳເລີຍໄດ້ກະທຳຜິດ ຫຼືບໍລິສຸດ, ໂດຍທີ່ການຕັດສິນໃຈນັ້ນແມ່ນອີງໃສ່ຜົນຂອງການລາຍງານກ່ຽວກັບການສືບ

ສວນຂອງຕຳຫຼວດ ຫຼືຫ້ອງການໄອຍະການ. ສ່ວນຫຼາຍແລ້ວການພິຈາລະນາຄະດີໂດຍທົ່ວໄປແມ່ນການກວດຄືນຄະດີເພື່ອຮູບການເທົ່ານັ້ນ, ແຕ່ໄດ້ມີການຕັດສິນໃຈຂອງສານກ່ອນໜ້າແລ້ວ. ສ່ວນຈຳເລີຍແມ່ນມີສິດຂໍອຸທອນ.

ສ່ວນຫຼວງຫຼາຍຂອງຈຳນວນຜູ້ພິພາກສາ 450ຄົນໃນປະເທດແມ່ນໄດ້ຮັບການອົບຮົມໃນດ້ານກົດໝາຍໃນລະດັບພື້ນຖານເທົ່ານັ້ນ, ແລະສານແຂວງ ແລະເມືອງມີເອກະສານຄົ້ນຄ້ວາພຽງແຕ່ເລັກໜ້ອຍ ຫຼືບໍ່ມີຊໍ້າເພື່ອເປັນບ່ອນອີງໃຫ້ຜູ້ພິພາກສາໃຊ້ໃນການເຮັດວຽກຂອງພວກເພິ່ນ. ຄະນະກຳມະການກົດໝາຍຂອງສະພາແຫ່ງຊາດໃນບາງຄັ້ງຄາວກໍໄດ້ຄົ້ນຄ້ວາເບິ່ງຄືນການຕັດສິນຂອງສະພາສູງສຸດ ເພື່ອຊອກຫາຄວາມ (ຖືກຕ້ອງແນ່ນອນ) ແລ້ວກໍສົ່ງຄະດີຄືນຫາສານ ຫຼືຫາຫ້ອງການອະທິໄອຍະການເພື່ອພິຈາລະນາຄືນໃໝ່ ຖ້າຫາກຄະນະກຳມະການເຊື່ອວ່າຄຳຕັດສິນນັ້ນບໍ່ເໝາະສົມ.

ບໍ່ມີຂ່າວຄາວຄືບໜ້າກ່ຽວກັບເຫດການຈັບກຸມ ຄູລີແບກຫາບເຜົ່າມົ້ງໃນປີ 2003 ທີ່ແຂວງຊຽງຂວາງ. 3 ຄົນໄດ້ຖືກຈັບພອ້ມນັກຂ່າວຕ່າງປະເທດ 2 ຄົນ ແລະ ລາ່ມແປພາສາຂອງພວກເຂົາ. ນັກຂ່າວຕ່າງປະເທດພອ້ມດວ້ຍລາມແປພາສາໄດ້ຖືກປອ່ຍໂຕ ແຕ່ຄູລີແບກຫາບເຜົ່າມົ້ງໄດ້ຖືກຂໍ້ຫາສົມຮູ້ຮວ່ມຄິດກັບຊາວບ້ານເຜົ່າມົ້ງ ໃນການຂ້າກອງຫຼອນບ້ານ ແລະກໍ່ຖືກຕັດສິນຈຳຄຸກເປັນເວລາຍາວ. ຄົນນຶ່ງສາມາດລົບໜີອອກມາໄດ້, ແຕ່ໃນຕອນທ້າຍປີສອງຄົນຍັງຖືກຄຸມຕົວຢູ່.

**ນັກໂທດການເມືອງ ແລະ ຜູ້ຖືກກັກຂັງ.**

ໄດ້ມີນັກໂທດການເມືອງສາມຄົນທີ່ຮັບຮູ້ກັນ, ນາຍພັນ ສິງ ຈັນທະກູມມານ ອະດີດພະນັກງານລັດຖະບານໄດ້ຖືກຕັດສິນຈຳຄຸກຕະຫລອດຊີວິດ ພາຍຫຼັງທີ່ໄດ້ພິຈາລະນາຄະດີໃນປີ 1990 ຊຶ່ງການດຳເນີນຄະດີນັ້ນບໍ່ຖືກຕ້ອງຕາມມາດຕະຖານສາກົນ. ໄດ້ມີການລາຍງານວ່າ ທ. ສິງໄດ້ມີການເຈັບປ່ວຍໜັກ ແຕ່ວ່າຝ່າຍລັດຖະບານບໍ່ຍອມຕອບສະໜອງຂໍ້ຮຽກຮ້ອງຫຼາຍຄັ້ງ ເພື່ອປ່ອຍໂຕເຂົາດ້ວຍເຫດຜົນມະນຸດສະທຳ.

ເຂົາເປັນພຽງຄົນດຽວທີ່ຍັງຫລົງເຫລືອຢູ່ຄ້າຍດັດສ້າງສຳມະນາຈາກສະໄໝເກົ່າ. ຢ່າງໜອ້ຍມີນັກໂທດສອງຄົນຄື ທ້າວທອງປະເສີດ ເກື້ອກູນ ແລະ ທ້າວ ແສງອາລູນ ແພງບູນທີ່ຖືກຈັບໃນປີ 1999 ຍ້ອນເຫດຜົນພະຍາຍາມຈັດຕັ້ງການເດີນຂະບວນເພື່ອປະຊາທິປະໄຕ ຢູ່ວຽງຈັນຍັງຄົງສືບຕໍ່ຈຳຄຸກເປັນເວລາ 10 ປີຕາມຄຳຕັດສິນວ່າໄດ້ຕ້ານກິດຈະກຳຂອງລັດຖະບານ.

ອາດມີນັກໂທດການເມືອງຄົນອື່ນໆ ທີ່ໄດ້ຖືກຈັບ, ດຳເນີນຄະດີ ແລະຖືກຕັດສິນໃຕ້ກົດໝາຍທີ່ພົວພັນເຖິງຄວາມປອດໄພແຫ່ງຊາດ, ຍ້ອນແນວນັ້ນຈຶ່ງບໍ່ໄດ້ດຳເນີນຄະດີແບບເປີດເຜີຍ. ເຖິງຢ່າງໃດກໍຕາມ ເລື່ອງຈຳນວນແທ້ຈິງຂອງນັກໂທດປະເພດນີ້ ຍັງບໍ່ມີວິທີການເອກະລາດທີ່ໃຊ້ໄດ້ເພື່ອມາຢັ້ງຢືນ.

ອີງຕາມຂໍ້ມູນຈາກອະດີດນັກໂທດ ວ່າມີຜູ້ຄົນຈຳນວນຫນ້ອຍແຕ່ບໍ່ຮູ້ວ່າເທົ່າໃດ ໂດຍສະເພາະແມ່ນຊາວເຜົ່າມົ້ງທີ່ສົງໃສວ່າມີກິດຈະກຳຕໍ່ຕ້ານລັດຖະບານຖືກຄຸມຂັງຢູ່ໂດຍອ້າງວ່າລະເມີດກົດຫມາຍອາດຍາດ້ານຄວາມຫມັ້ນຄົງຂອງຊາດ.

**ຂັ້ນຕອນຕັດສິນຄະດີແພ່ງ ແລະ ການແກ້ໄຂໃຫ້ຖືກຕ້ອງ.**

ກົດຫມາຍໃຫ້ສິດເສລີພາບໃນການພິພາກສາທັງຄະດີແພ່ງ ແລະ ອາຍາ. ຖ້າຫາກສິດທິຂອງ ສັງຄົມ ແລະ ການເມືອງຖືກລະເມີດແລ້ວ, ມັນອາດຈະຂໍ່ໃຫ້ມີການແກ້ໄຂຄວາມຍຸດຕິທຳຈາກ ສານອາຍາ ຫລື ນຳໄປສູ່ການການແກ້ໄຂການຄຸ້ມຄອງບໍລິຫານໂດຍສະພາແຫງຊາດພາຍໄຕ້ ກົດຫມາຍກ່ຽວກັບການຕໍ່ວາຈາກມະຫາຊົນ. ໃນບັນຫາກ່ຽວກັບສິທິຂອງສັງຄົມ ແລະ ວັດທະນະທຳນັ້ນມັນອາດຂໍໃຫ້ມີການແກ້ໄຂໃນສານຄະດີແພ່ງ. ເຖິງແມ່ນວ່າມີການພັດທະນາຕາມມາກັບ ການກໍ່ສ້າງກົນການບັງຄັບໄຊ້ກົດຫມາຍໃນປີ 2000 ແຕ່ອຳນາດຄຳສັ່ງສານກໍ່ຍັງຄົງມີບັນຫາຢູ່

**ສ. ການເຂົ້າຫຍຸ້ງກ່ຽວແບບຕາມອຳເພີໃຈໃນບັນຫາສ່ວນໂຕ, ຄອບຄົວ, ເຮືອນຊານ, ຫຼືການພົວພັນທາງຈົດໝາຍ.**

ກົດໝາຍໂດຍທົ່ວໄປແມ່ນປົກປ້ອງຄວາມເປັນສ່ວນຕົວ, ລວມທັງສິ່ງທີ່ກ່ຽວຂ້ອງກັບຈົດໝາຍ, ໂທລະສັບ ແລະການຕິດຕໍ່ສື່ສານທາງເອເລັກໂຕນິກ; ແຕ່ປະກົດວ່າລັດຖະບານໄດ້ລະເມີດການປົກປ້ອງບາງກົດໝາຍເລົ່ານີ້ໃນບາງຄັ້ງຄາວ.

ກົດໝາຍຫ້າມການຊອກຄົ້ນ ແລະຢຶດແບບຜິດກົດໝາຍ. ອີງຕາມກົດຫມາຍ ຕຳຫລວດຕໍ່ສະເຫນີຫມາຍຄົ້ນ ຈາກໄອຍະການ ຫລື ຄະນະກຳມະການຜູ້ພິພາກສາ, ແຕ່ໃນຕົວຈິງຕຳຫຼວດບໍ່ໄດ້ຂໍອະນຸຍາດກອນທີ່ຈະກະທຳ ເຊັ່ນນັ້ນ ໂດຍສະເພາະແມ່ນຢູ່ເຂດຊົນນະບົດ. ໃນລັດຖະທຳມະນູນວ່າດ້ວຍການປົກປ້ອງຄວາມເປັນສ່ວນຕົວຂອງປະຊາຊົນ, ສະເພາະຢ່າງຍິ່ງໃນຊົນນະບົດ.

ກົດຫມາຍປອ້ງກັນຄວາມສະຫງົບໄດ້ອະນະຍາດໄຫ້ລັດຖະບານຕິດຕາມການເຄືອ່ນໄຫວຂອງບຸກຄົນ ແລະ ສິ່ງສື່ສານຂອງພວກເຂົາເຊັ່ງລວມທັງໂທລະສັບມືຖືແລະອີເມວ (ເບິ່ງພາກ 2.ກ)

ກະຊວງປ້ອງກັນຄວາມສະຫງົບໄດ້ຕິດຕາມກິດຈະກຳຂອງປະຊາຊົນໂດຍຜ່ານເຄືອຄ່າຍການຕິດຕາມສອດແນມ ທີ່ກວ້າງຂວາງ. ການຈັດຕັ້ງນອກລະບົບເຊັ່ນ ກອງຫຼອນໃນເຂດຕົວເມືອງ ແລະຊົນນະບົດ ຊຶ່ງປະຕິບັດການໃຕ້ການຊີ້ນຳຂອງຝ່າຍທະຫານ ແລະມີຄວາມຮັບຜິດຊອບເພື່ອສືບຕໍ່ໃຫ້ມີລະບຽບໃນສັງຄົມ ແລະລາຍງານ "ປັດໃຈທີ່ບໍ່ພື່ງປາດຖະໜາ" ໃຫ້ແກ່ຕຳຫຼວດ.ກອງຫຼອນປົກກະຕິແລ້ວຈະເຮັດວຽກຕົ້ນຕໍກ່ຽວຂ້ອງກັບອາດຊະຍາກຳຂະໜາດນ້ອຍ ແລະປະກົດການຫຍໍ້ທໍ້ທາງດ້ານສິນລະທຳຫຼາຍກວ່າຈະມາເຮັດວຽກເຄື່ອນໄຫວທາງດ້ານການເມືອງ ເຖິງແມ່ນວ່າໃນເຂດຊົນນະບົດຫ່າງໄກບ່ອນທີ່ພວກກະບົດເຜົ່າມົ້ງເຄື່ອນໄຫວ, ສະມາຊິກອງຫຼອນແມ່ນມີບົດບາດໃນການສະໜອງຄວາມປອດໄພຕ້ານກັບພວກກະບົດ. ອົງການຈັດຕັ້ງມະຫາຊົນຊຶ່ງເປັນສະມາຊິກພັກ ປປລ ລວມທັງສະຫະພັນແມ່ຍິງ, ອົງການຊາວໜຸ່ມ, ແນວລາວສ້າງຊາດການເປັນອົງກອນເຝົ້າລະວັງເບິ່ງການກະທຳຂອງປະຊາຊົນໃນທຸກລະດັບຂອງສັງຄົມ. ກະຊວງປ້ອງກັນຄວາມສະຫງົບຍັງມີຕາໜ່າງຕຳຫຼວດລັບ ຊຶ່ງມີໜ້າທີ່ ຕິດຕາມປະຊາຊົນ ເພື່ອປະກັນການກະທຳທີ່ເປັນອັນຕະລາຍຕໍ່ລັດຖະບານ.

ລັດຖະບານຍັງໄດ້ຕິດຕາມເບິ່ງ ອີເມລຂອງປະຊາຊົນທຳມະດາສາມັນ. ຜູ້ສະໜອງການບໍລິການອິນເຕີເນັດທຸກບໍລິສັດຕ້ອງມີໃບອະນຸຍາດຈາກລັດຖະບານ ແລະບໍລິສັດເລົ່ານີ້ຕ້ອງລາຍງານ ໃນແຕ່ລະ 3 ເດືອນກ່ຽວກັບກິດຈະກຳຂອງເຂົາເຈົ້າໃຫ້ແກ່ສຳນັກງານນາຍົກ( ເບິ່ງພາກ 2. ກ)

ລັດຖະບານໄດ້ສືບຕໍ່ແຜນງານຍົກຍ້າຍຈັດສັນປະຊາຊົນທີ່ຖາງປ່າເຮັດໄຮ່ຕາມເຂດພູສູງ ຊຶ່ງສ່ວນຫຼາຍແມ່ນມາຈາກຊົນເຜົ່າສ່ວນໜ້ອຍ ເພື່ອໃຫ້ລົງມາຢູ່ເຂດທົ່ງພຽງ ທັງນີ້ແມ່ນເພື່ອສອດຄ່ອງກັບແຜນຍຸດຕິ

ການປູກຝິ່ນ ພາຍໃນທ້າຍຂອງປີ 2005 ແລະ ຍຸດຕິການຖາງປ່າເຮັດໄຮ່ໃນປີ 2010. ມີບາງເຂດພະນັກງານເມືອງ ແລະແຂວງໄດ້ຊັກຊວນເພື່ອໃຫ້ຊາວບ້ານຍົກຍ້າຍໄປຕັ້ງຖິ່ນຖານຢູ່ບ່ອນໃໝ່. ມີບາງເຂດທີ່ຊາວບ້ານໄດ້ຍົກຍ້າຍໄປຢູ່ໃກ້ກັບທະໜົນຫົນທາງ, ຕະຫຼາດ ແລະການບໍລິການຂອງຝ່າຍລັດຖະບານດ້ວຍຕົນເອງ ໂດຍບໍ່ມີໃຜຊັກຊວນ, ເຖິງແມ່ນວ່າແຜນຍົກຍ້າຍຈັດສັນຂອງລັດຖະບານເວົ້າເຖິງການຊົດເຊີຍໃຫ້ແກ່ຊາວໄຮ່ນາ ຍ້ອນເສຍດິນ ແລະໃຫ້ການສະໜັບສະໜູນຊ່ວຍເຫຼືອໃນການຍົກຍ້າຍໄປຢູ່ບ່ອນໃໝ່, ການຊ່ວຍເຫຼືອດັ່ງກ່າວນີ້ໃນຫຼາຍໆກໍລະນີ ແມ່ນບໍ່ມີ, ຫຼືຖ້າມີ ກໍບໍ່ພຽງພໍເພື່ອຊ່ວຍຊາວໄຮ່ນາໃຫ້ມີວິທີການແກ້ໄຂຊີວິດໃໝ່ຂອງຕົນເອງ. ນອກເໜືອໄປກວ່ານັ້ນ, ບາງເຂດບ່ອນທຳມາຫາກິນຢູ່ໝູ່ບ້ານໃໝ່ນັ້ນດິນບໍ່ຄ່ອຍດີ ແລະບໍ່ເໝາະສົມກັບການກະເສດ. ຜົນຕິດຕາມມາແມ່ນຊາວໄຮ່ນາດັ່ງກ່າວນັ້ນຕ້ອງພົບພໍ້ກັບຄວາມທຸກຍາກ, ຄວາມອຶດຫິວ, ການຂາດອາຫານ, ການເປັນພະຍາດ ແລະອັດຕາການຕາຍເພີ່ມຂຶ້ນຫຼາຍກວ່າເກົ່າ. ລັດຖະບານໄດ້ເພິ່ງພາອາໃສການຊ່ວຍເຫຼືອຈາກອົງການບໍ່ສັງກັດລັດ, ຜູ້ໃຫ້ທຶນສອງຝ່າຍ ແລະອົງການຈັດຕັ້ງສາກົນເພື່ອຮັບໃຊ້ໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງຜູ້ທີ່ໄດ້ຖືກຍົກຍ້າຍຫວ່າງບໍ່ດົນມານີ້, ແຕ່ການຊ່ວຍເຫຼືອນັ້ນບໍ່ພຽງພໍສຳລັບທຸກໆເຂດ.

ບໍ່ໄດ້ມີລາຍງານວ່າມີການບັງຄັບໃຫ້ຍົກຍ້າຍຖິ່ນຖານຄືກັບໃນປີ 2005.

ພະນັກງານທ້ອງຖິ່ນໄດ້ຍຶດທີ່ດິນ ຂອງຊາວຄຣິດສະຕຽນໃນເຂດນຶ່ງຂອງແຂວງ ອຸດົມໄຊ ໃນເດືອນກຸມພາ ແຕ່ກໍ່ສົ່ງດິນຕອນນັ້ນຄືນອີກສອງ-ສາມເດືອນຕໍ່ມາ (ເບິ່ງພາກ 2.ຄ)

ລັດຖະບານໄດ້ອະນຸຍາດໃຫ້ປະຊາຊົນແຕ່ງງານກັບຕ່າງປະເທດໄດ້ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກທາງການເສຍກ່ອນ. ການຢູ່ກິນກັນກ່ອນແຕ່ງງານແມ່ນຜິດກົດໝາຍ ເຖິງແມ່ນວ່າລັດຖະບານໄດ້ອະນຸຍາດໃຫ້ມີການແຕ່ງງານຢ່າງເປັນປະຈຳຢູ່, ແຕ່ຂັ້ນຕອນຂອງການຮັບອະນຸຍາດນັ້ນ ແມ່ນຍືດເຍື້ອ ແລະຫຍຸ້ງຍາກພ້ອມທັງເປີດໂອກາດໃຫ້ເຈົ້າໜ້າທີ່ສາມາດຮັບສິນບົນ. ການແຕ່ງງານກັບຄົນຕ່າງປະເທດໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານສາມາດລົບລ້າງການເປັນຜົວເມຍກັນໄດ້ ແລະທັງສອງຝ່າຍສາມາດຖືກຈັບ ແລະປັບໃໝໄດ.

## ພາກ 2. ການນັບຖືອິດສະຫຼະພາບພົນລະເຮືອນລວມທັງ:

### ກ. ອິດສະຫຼະພາບໃນການປາກເວົ້າ ແລະສື່ມວນຊົນ.

ກົດໝາຍໄດ້ອະນຸຍາດໃຫ້ມີອິດສະຫຼະພາບໃນການປາກເວົ້າ ແລະໃນວຽກງານສື່ມວນຊົນ; ເຖິງຢ່າງໃດກໍດີໃນພາກປະຕິບັດຝ່າຍລັດຖະບານໄດ້ຈຳກັດອິດສະຫຼະພາບແຫ່ງການປາກເວົ້າ ແລະຂີດຂຽນເລື່ອງການເມືອງຢ່າງເອົາຈິງເອົາຈັງ. ລັດຖະບານຍັງຫ້າມບໍ່ໃຫ້ມີການຕຳນິຕິຊົມທີ່ເຫັນວ່າຈະເຊື່ອມເສຍຊື່ສຽງຂອງຕົນ. ກົດໝາຍໄດ້ຫ້າມບໍ່ໃຫ້ເວົ້າທັບຖົມສ້າງຄວາມເສຍຫາຍໃຫ້ລັດ, ພິກປີ້ນນະໂຍບາຍຂອງພັກ ຫຼືລັດລວມທັງການມີເຈດຕະນາສ້າງຄວາມບໍ່ເປັນລະບຽບ ຫຼືໂຄສະນາຂໍ້ມູນ ຫຼືຄວາມຄິດເພື່ອບັນທອນກຳລັງຂອງລັດ.

ປະຊາຊົນຜູ້ທີ່ຍື່ນຄຳຮ້ອງທຸກທີ່ຖືກຕ້ອງຕາມກົດໝາຍໄປຍັງກົມກອງລັດຖະບານ ໂດຍທົ່ວໄປແລ້ວຈະບໍ່ໄດ້ຖືກໂຕ້ຕອບແກ້ແຄ້ນ, ແຕ່ຫາກວ່າການຕຳນິໃນລັກສະນະທົ່ວໄປ ຫຼືເລັງໃສ່ການນຳຂອງພັກ ສາມາດຖືກສຳຫຼວດ ຫຼືຖືກຈັບ.

ລັດເປັນເຈົ້າຂອງ ແລະຄວບຄຸມສິ່ງພິມ ແລະສື່ເອເລັກໂຕນິກ. ຂ່າວທ້ອງຖິ່ນໃນສື່ທັງໝົດສະທ້ອນໃຫ້ເຫັນເຖິງນະໂຍບາຍຂອງລັດຖະບານ. ລາຍການສົນທະນາທາງໂທລະພາບທີ່ອອກອາກາດ ແລະບົດຄວາມເຫັນສະທ້ອນໃຫ້ເຫັນພຽງແຕ່ຄວາມແຕກຕ່າງລະຫວ່າງວິທີການທາງດ້ານການຄຸ້ມຄອງເທົ່ານັ້ນ. ເຖິງແມ່ນວ່າລາຍການອອກອາກາດທາງໂທລະພາບ ແລະວິທະຍຸພາຍໃນປະເທດແມ່ນຖືກຄວບຄຸມຢ່າງໃກ້ຊິດ, ທາງລັດຖະບານກໍບໍ່ໄດ້ພະຍາຍາມແຕ່ຢ່າງໃດ ເພື່ອຄວບຄຸມຫຍຸ້ງກ່ຽວກັບລາຍການໂທລະພາບ ແລະວິທະຍຸອອກອາກາດມາແຕ່ຕ່າງປະເທດແຕ່ຢ່າງໃດ. ໃນຕົວຈິງປະຊາຊົນຫຼາຍຄົນເບິ່ງໂທລະພາບໄທ ຫຼືຟັງວິທະຍຸໄທລວມທັງລາຍການຂ່າວຢ່າງເປັນປະຈຳ. ປະຊາຊົນສາມາດເບິ່ງລາຍການ CNN ແລະ BBC ລວມທັງສະຖານີສາກົນອື່ນໆ ຕະຫຼອດ 24 ຊົ່ວໂມງໂດຍຜ່ານລະບົບດາວທຽມ ຫຼືໂທລະພາບເຄເບີນ. ລັດຖະບານຮຽກຮ້ອງໃຫ້ມີການລົງທະບຽນຈານດາວທຽມຮັບລາຍການ ແລະໃຫ້ເສຍຄ່ານຳໃຊ້ພຽງຄັ້ງດຽວ ເພື່ອເປັນການສ້າງລາຍຮັບແຕ່ຫາກວ່າບໍ່ໄດ້ພະຍາຍາມຫ້າມການນຳໃຊ້ແຕ່ຢ່າງໃດ. ນອກຈາກນັ້ນແລ້ວບໍລິສັດທີ່ຈີນເປັນເຈົ້າຂອງໄດ້ບໍລິການເຄເບີນທີວີໃຫ້ແກ່ຜູ້ຊື້ຈອງໃນວຽງຈັນ. ການບໍລິການ ເຄເບີ້ນທີ່ໄດ້ລົງທະບຽນກັບລັດຖະບານນີ້ສະໜອງລາຍການຂ່າວໄທ ແລະສາກົນພ້ອມທັງລາຍການມ່ວນຊື່ນຫັນສາ ໂດຍທີ່ທາງການບໍ່ໄດ້ຈຳກັດ.

ລັດຖະບານໄດ້ອະນຸຍາດໃຫ້ມີການພິມວາລະສານທີ່ເອກະຊົນເປັນເຈົ້າຂອງທີ່ບໍ່ມີລັກສະນະການເມືອງລວມທັງວາລະສານລົງເລິກທາງດ້ານທຸລະກິດ, ສັງຄົມ ແລະການຄ້າ. ໃນຂະນະທີ່ລັດທະບານບໍ່ໄດ້ກວດເບິ່ງສິ່ງພິມເຫລົ່ານີ້ຫລວງຫນ້າ, ພວກເຂົາກວດກາເບິ່ງຫລັງຈາກພິມຈຳນາຍ ແລະ ລົງໂທດສິ່ງພິມທີ່ມີຫົວຂໍ້ທີ່ບໍ່ຕົງກັບເລື້ອງລາວທີ່ລັດທະບານອະນຸຍາດໄດ້ຮັບອະນຸຍາດ. ຍັງມີໜັງສືພິມ ແລະວາລະສານເອເຊຍ ແລະຕາເວັນຕົກຈຳນວນນ້ອຍນຶ່ງຢູ່ຕາມຮ້ານເອກະຊົນ ຊຶ່ງລັດຖະບານອະນຸຍາດໃຫ້ຂາຍ.

ນັກຂ່າວຕ່າງປະເທດຕ້ອງຂໍວີຊາພິເສດ ແລະການເຄື່ອນໄຫວຂອງເຂົາເຈົ້າໄດ້ຖືກຈຳກັດ. ທາງການບໍ່ໄດ້ອະນຸຍາດໃຫ້ນັກຂ່າວສາມາດເຂົ້າເຖິງແຫຼ່ງຂໍ້ມູນ, ແຕ່ວ່ານັກຂ່າວມັກຈະໄດ້ຮັບອະນຸຍາດໃຫ້ເດີນທາງໄປມາດ້ວຍຕົນເອງ ປາດສະຈາກການຕິດຕາມຂອງທາງການ. ເມື່ອໃດຫາກມີຜູ້ຕິດຕາມນັກຂ່າວຕ້ອງຈ່າຍຄ່າບໍລິການໃນແຕ່ລະວັນ.
ທາງການຫ້າມເຜີຍແຜວັດສະດຸຕ່າງໆ ທີ່ເຫັນວ່າເຊື່ອມເສຍບ່ອນທຳລາຍວັດທະນາທຳແຫ່ງຊາດ ຫຼືເປັນສິ່ງລະອຽດອ່ອນທາງດ້ານການເມືອງ. ໃຜກໍຕາມຫາກເຫັນວ່າກະທຳຄວາມຜິດໃນການນຳເຂົ້າສິ່ງພິມທີ່ເຫັນເປັນໜ້າລັງກຽດໃນແງ່ "ວັດທະນາທຳຂອງຊາດ" ຈະຖືກປັບໃໝ ຫຼືຈຳຄຸກບໍ່ກາຍນຶ່ງປີ. ດຳລັດເລກທີ 92 ກ່ຽວກັບການປະຕິບັດພິທີກຳທາງສາດສະໜາອະນຸຍາດໃຫ້ຈັດພິມວັດສະດຸສາດສະໜາ ໂດຍໄດ້ຮັບອະນຸຍາດຈາກແນວລາວສ້າງຊາດ. ເຖິງວ່າຫຼາຍກຸ່ມສາດສະໜາໄດ້ຂໍອະນຸຍາດຈັດພິມ, ແຕ່ຕົກມາເຖິງທ້າຍປີ ກຸ່ມສາດສະໜາ ຄຣິສຕຽນ ຫຼື ບາຮາຍຍັງບໍ່ໄດ້ຮັບອະນຸຍາດພິມເອກສານທາງສາດສະໜາ (ເບິ່ງພາກ 2 ຄ.)

**ເສລີພາບທາງ ອິນເທີເນດ**

ລັດຖະບານໄດ້ຄວບຄຸມຜູ້ສະໜອງອິນເຕີເນັດພາຍໃນປະເທດທັງໝົດ ແລະບາງຄັ້ງຄາວກໍໄດ້ປິດບັງ *ໄຊທ໌ອິນເຕີເນັດ* ທີ່ເຫັນວ່າເປັນສື່ລາມົກ ຫຼືຕຳນິສະຖາບັນລັດຖະບານ ແລະນະໂຍບາຍຂອງລັດຖະບານ. ພ້ອມກັນນັ້ນແຕ່ລະໄລຍະລັດຖະບານໄດ້ຕິດຕາມອີເມລ. ການມີລະບຽບຄວບຄຸມໃນລະດັບສູງກ່ຽວກັບການໃຊ້ອິນເຕີເນັດໂດຍປະຊາຊົນຖືວ່າເປັນການຈຳກັດອິດສະຫຼະພາບໃນການສະແດງຄວາມຄິດເຫັນ "ການລົບກວນສັນຕິພາບ ແລະຄວາມສຸກຂອງຊຸມຊົນ" ແລະ "ລາຍງານຂ່າວບິດເບືອນຄວາມຈິງ" ແມ່ນອາດສະຍາກຳ. ສຳນັກງານນາຍົກຮຽກຮ້ອງໃຫ້ຜູ້ສະໜອງການບໍລິການອິນເຕີເນັດຕ້ອງຍື່ນລາຍງານທຸກໆສາມເດືອນ

ແລະເຊື່ອມຕໍ່ "*ເກດເວ*" ຂອງຕົນເພື່ອຄວາມສະດວກໃນການຕິດຕາມ, ແຕ່ຫາກວ່າຄວາມສາມາດຂອງລັດຖະບານເພື່ອບັງຄັບໃຫ້ມີການປະຕິບັດລະບຽບການນີ້ແມ່ນຈຳກັດ. ຍ້ອນຢ້ານທາງການຈະຕິດຕາມ, ມີປະຊາຊົນຫຼາຍຄົນໄດ້ຊົມໃຊ້ການບໍລິການ ອິນເຕີເນັດ ທີ່ *ອິນເຕີເນັດ ຄາເຟ* ແທນທີ່ຈະໃຊ້ຄອມພິວເຕີສ່ວນຕົວ.

**ເສລີພາບດ້ານການສຶກສາ ແລະ ງານວັດທະນາທຳ ແລະ ປະເພນີ**

ກົດໝາຍອະນຸຍາດໃຫ້ມີອິດສະຫຼະພາບການສຶກສາຮ່ຳຮຽນ, ແຕ່ໃນຕົວຈິງລັດຖະບານໄດ້ກຳນົດການຈຳກັດນີ້. ຫຼັກສູດໃຊ້ທີ່ໂຮງຮຽນ, ລວມທັງໃນໂຮງຮຽນ ແລະວິທະຍາໄລເອກະຊົນແມ່ນຖືກຄວບຄຸມຢ່າງໃກ້ຊິດ ໂດຍກະຊວງສຶກສາ ເພື່ອຮັບປະກັນວ່າບໍ່ມີວິຊາທີ່ສອນອັນໃດທີ່ຕັ້ງຂໍ້ສົງໃສຕໍ່ລະບົບການເມືອງ. ປະຊາຊົນ ແລະນັກຮຽນຮູ້ທີ່ບໍ່ແມ່ນປະຊາຊົນລາວທີ່ທຳການຄົ້ນຄ້ວາພາຍໃນປະເທດອາດບໍ່ສາມາດເດີນທາງ, ສາມາດເຂົ້າເຖິງຂໍ້ມູນ ແລະເອກະສານພິມເຜີຍແຜ່ໄດ້ຕາມໃຈຊອບ. ລັດຖະບານໄດ້ຄວບຄຸມຢາງລະມັດລະວັງກ່ຽວກັບການເດີນທາງໄປສຶກສາຄົ້ນຄ້ວາ ຫຼືຂໍທຶນສຶກສາຂອງຄູອາຈານພາກລັດໂດຍການໃຫ້ຂໍ້ອະນຸຍາດເດີນທາງອອກນອກປະເທດ ແລະກົນໄກຕ່າງໆ, ແຕ່ພ້ອມກັນນັ້ນລັດຖະບານກໍ່ ສະແຫວງຫາທຸກໂອກາດເພື່ອສົ່ງຄົນຕົນເອງໄປສຶກສາຢູ່ທຸກໆປະເທດ ແລະກໍໄດ້ອະນຸຍາດເກືອບວ່າທຸກຄັ້ງທີ່ມີຄົນຂໍໄປສຶກສາຢູ່ຕ່າງປະເທດ.

ການຜະລິດ ຮູບເງົາ ແລະ ເພງຕ່າງໆຢູ່ຫອ້ງອັດຂອງລັດທະບານຈຳເປັນຕ້ອງໄດ້ສົ່ງໄປໃຫ້ພະນັກງານເພື່ອກວດກາ, ຢ່າງໃດກໍ່ຕາມ ຮູບເງົາ ແລະ ເພງຈາກຕ່າງປະເທດທີ່ບໍ່ໄດ້ຜ່ານການກວດກາແມ່ນຫາງາຍໃນຮູບແບບວີດີໂອ ແລະ ແຜ່ນ ຊີດີ. ກະຊວງຖະແຫລງຂາ່ວ ແລະ ວັດທະນາທຳ ໄດ້ ເນັ້ນຢ້ຳຄວາມພະຍາ ຍາມໃນການກຳນົດຂໍ້ຈຳກັດ ເພື່ອຈຸດປະສົງໃນການຈຳກັດອິດທິພົນຂອງວັດທະນາທຳໄທ ໃນບົດເພງ ແລະ ວົງການບັນເທີງລາວ, ແຕ່ການຈຳກັດນີ້ກໍ່ຖືກເມີນເສີຍກັນຢ່າງກວ້າງຂວາງ ແລະ ກໍ່ປາກົດວ່າບໍ່ມີຜົນກະທົບປານໃດ.

ລັດທະບານບໍ່ໄດ້ເຂົ້າແຊກແຊງ ງານວັດທະນາທຳ ປະເພນີຕ່າງໆນອກຈາກງານນັ້ນເປັນການຕໍ່ຕ້ານລັດທະບານ. ໃນໄລຍະເກັບກຳລາຍງານປີ ບໍ່ມີລາຍງານວ່າລັດທະບານບັງຄັບໃຫ້ຍົກເລີກງານວັດທະນາທຳ ປະເພນີໃດໆ.

## ຂ. ອິດສະຫຼະພາບໃນການໂຮມຊຸມນຸມແບບສັນຕິ ແລະຈັດຕັ້ງສະມາຄົມ.

**ອິດສະຫຼະພາບໃນການໂຮມຊຸມນຸມ.**

ກົດໝາຍອະນຸຍາດໃຫ້ມີອິດສະຫຼະພາບໃນການໂຮມຊຸມນຸມ, ແຕ່ໃນຕົວຈິງ ລັດຖະບານໄດ້ຈຳກັດສິດທິນີ້. ກົດໝາຍຫ້າມການເຂົ້າຮ່ວມຈັດຕັ້ງໃດນຶ່ງ ເພື່ອຈຸດປະສົງທຳການປະທ້ວງ, ຍ່າງເດີນຂະບວນຕໍ່ຕ້ານ ຫຼືການກະທຳອື່ນໆ ທີ່ກໍ່ໃຫ້ເກີດ "ຄວາມວຸ້ນວາຍ ຫຼືຂາດສະຖຽນລະພາບທາງສັງຄົມ". ການກະທຳດັ່ງກ່າວນັ້ນຈະຖືກລົງໂທດດ້ວຍການຈຳຄຸກລະຫວ່າງ 1 ຫາ 5 ປີ. ຈຳເລີຍທີ່ຖືກດຳເນີນຄະດີຍ້ອນອາດສະຍາກຳຕ້ານລັດອາດຈະໄດ້ຮັບການຕັດສິນຈຳຄຸກຮອດ 20 ປີ ຫຼືອາດຖືກປະຫານຊີວິດ.

**ອິດສະຫຼະພາບໃນການຈັດຕັ້ງສະມາຄົມ.**

ກົດໝາຍອະນຸຍາດໃຫ້ປະຊາຊົນມີສິດຈັດຕັ້ງ ແລະເຂົ້າຮ່ວມສະມາຄົມ; ແຕ່ໃນພາກປະຕິບັດ ລັດຖະບານຊໍ້າພັດຈຳກັດສິດນີ້. ລັດຖະບານລົງທະບຽນ ແລະຄວບຄຸມສະມາຄົມທັງໝົດ ແລະຫ້າມສະມາຄົມທີ່ຕຳນິລັດຖະບານ. ກຸ່ມການເມືອງນອກຈາກກຸ່ມແນວໂຮມແນະຫາຊົນທີ່ເຫັນດີເຫັນພ້ອມໂດຍພັກ ພປປລ ແມ່ນຖືກຫ້າມ. ເຖິງແມ່ນວ່າລັດຖະບານຈະໄດ້ຈຳກັດຫຼາຍໆປະເພດສະມາຄົມວິຊາຊີບ ແລະສັງຄົມກໍຕາມ ກຸ່ມບໍ່ແມ່ນການເມືອງທີ່ບໍ່ເປັນທາງການສາມາດພົບປະກັນຢ່າງບໍ່ມີບັນຫາກີດຂວາງ. ລັດຖະບານໄດ້ອະນຸຍາດການສ້າງບາງສະມາຄົມທີ່ມີລັກສະນະທຸລະກິດເຊັ່ນ ໄດ້ອະນຸຍາດໃຫ້ເຈົ້າຂອງໂຮງແຮມ ແລະຜູ້ຈັດສົ່ງສິ່ງຂອງສ້າງສະມາຄົມທຸລະກິດຂອງເຂົາໄດ້. ລັດຖະບານໄດ້ເລີ່ມຕົ້ນອະນຸຍາດການສ້າງຕັ້ງອົງການບໍ່ຫວັງຜົນກຳໄລ ຊຶ່ງມີຈຸດປະສົງສົ່ງເສີມວິທະຍາສາດ ແລະກະສິກຳ. ສຳນັກງານນາຍົກເປັນຜູ້ເບິ່ງແຍງດູແລກຸ່ມສະມາຄົມຂະໜາດນ້ອຍແຕ່ຫາກນັບມື້ນັບເຕີບໂຕ, ຊຶ່ງອົງການຈັດຕັ້ງເລົ່ານີ້ ໄດ້ລົງທະບຽນເພື່ອດຳເນີນກິດຈະກຳໃນຂົງເຂດວຽກງານຂອງຕົນ.

## ຄ. ອິດສະຫຼະພາບໃນການເຊື່ອຖືສາດສະໜາ

ກົດໝາຍອະນຸຍາດໃຫ້ມີ ອິດສະຫຼະພາບໃນການເຊື່ອຖືສາດສະໜາ; ເຖິງຢ່າງໃດກໍຕາມທາງການໂດຍສະເພາະລະດັບທ້ອງຖິ່ນ ໄດ້ເຂົ້າແຊກແຊງໃນສິດທີ່ດັ່ງກ່າວ.

ເຖິງແມ່ນລັດຈະມີທັດສະນະທາງໂລກ, ພປປລ ແລະ ລັດທະບານໄດ້ສົ່ງເສີມ ສາດສະໜາ ພຸດນິກາຍເຖລະວາດ ເຊິ່ງມີຜູ້ເລື້ອມໃສ ສັດທາຫລາຍກວ່າ 40 ສ່ວນຮອ້ຍຂອງພົນລະເມືອງທັງຫມົດ ແລະກໍແມ່ນຄວາມສັດທາຂອງຊົນເຜົ່າເກືອບທັງຫມົດຂອງພົນລະເມືອງ. ເຖິງວ່າກົດຫມາຍຈະບໍ່ຮັບຮູ້ກົດຫມາຍປະຈຳຊາດ, ແຕ່ລັດທະບານກໍ່ໄດ້ສະຫນັບສະຫນູນ, ເບິ່ງແຍງ ວັດວາອາຮາມ ແລະ ຄວາມສະດວກອື່ນໆ, ແລະສົ່ງເສີມການປະຕິບັດສາດສະຫນາພຸດ ຍົກສູງຖານະໃຫ້ສາດສະຫນາພຸດເຫນືອກວ່າສາດສະຫນາອື່ນໆໃນປະເທດ.

ໃນໄລຍະປີເກັບກຳລາຍງານ ເຈົ້າຫນ້າທີ່ໄດ້ຈັບກຸມ ຫລື ຄຸມຂັງຊາວຄຣິດສະຕຽນປະມານ 49 ຄົນ ຢູ່ຫລວງນ້ຳທາ, ສະຫວັນນະເຂດ, ສາລະວັນ, ອຸດົມໄຊ, ບໍລິຄຳໄຊ ແລະ ແຂວງວຽງຈັນ. ເຈົ້າຫນ້າທີ ກັກຂັງຊາວເຜົ່າ ມົ້ງ 27 ຄົນ ໃນນັ້ນມີເດັກ 26 ຄົນ ທີ່ຖືກເນລະເທດຈາກປະເທດໄທ ໃນຊ່ວງເດືອນທັນວາ ປີ 2005 (ເບິ່ງ ພາກ 1.ຂ., 1.ງ., ແລະ 2. ງ) ໃນເດືອນເມສາ ຊາຍຊາວຄຣິດສະຕຽນ ຢູ່ແຂວງ ສາລະວັນ ຖືກຈັບກຸມ ແລະ ເລີ່ມຕົ້ນດວ້ຍການມັດຄໍ່ແຂນ ແລະຂາໄວ້ ຫລັງຈາກທີ່ເຂົາໄດ້ປະຕິເສດຄຳສັ່ງຂອງນາຍບ້ານເພື່ອໃຫ້ເຂົາ ປະລະຄວາມເຊື່ອຖືດ້ານສາດສະຫນາຂອງລາວ. ຫລັງຈາກທີ່ຖືກຜູກມັດໄວ້ເປັນເວລາ 10 ວັນ ກໍ່ຖືກແກ້ມັດ ແຕ່ຍັງຖືກຄຸມຂັງພາຍໃນບ້ານຈົນເຖິງເດືອນຕຸລາ (ເບິ່ງພາກ 1.ຄ)

ໃນວັນທີ 17 ພະຈິກ ມີຊົນເຜົ່າຂະມຸຖືສາດສະຫນາຄຣິດສະຕຽນ 11 ຄົນຖືກຈັບກຸມຢູ່ບ້ານ ຄອນກີນ ແຂວງ ວຽງຈັນ ພອ້ມດວ້ຍຊາວຕ່າງຊາດ ສອງຄົນ.ມີລາຍງານເຜົ່າຂະມຸ ສາດສະຫນາ ຄຣິດສະຕຽນ ໄດ້ສວມຮູ້ຮວ່ມ ຄິດກັບຊາວຕ່າງຊາດທີ່ໄດ້ເທດສະຫນາໃນພິທີກຳຂອງຊາວຄຣິດ ແລະໃດ້ບັນທຶກການສຳພາດລົງໃນວີດີໂອ ໃຫ້ສະມາຊິກໂບດ. ຊາວຕ່າງຊາດໄດ້ຖືກປອ່ຍໂຕ ຫລັງຈາກຖືກຄຸມຂັງໄດ້ 3 ອາທິດ ແລະມີລາຍງານວ່າໄດ້ ຈ່າຍເງິນຄ່າປັບໃຫມຈຳນວນ 9,000 ໂດລາ ສະຫະລັດ. ສວ່ນຊາວຂະມຸຄຣິດສະຕຽນສອງຄົນນັ້ນຍັງຄົງ ຖືກຈັບກຸມຢູ່. ໃນຈຳນວນທັງຫມົດ 13 ຄົນທີ່ຖືກຈັບນັ້ນ, ນັກບວດ 3 ຄົນແມ່ນຖືກຂັງຢູ່ຄຸກທົ່ງຮາບ ແລະ ອີກທົ່ວຫນ້າໂບດ 10 ຄົນຍັງຄົງຖືກຄຸມຂັງຢູ່ຫີນເຫີບ ແຂວງວຽງຈັນ ໃນຊ່ວງທ້າຍປີ (ເບິ່ງພາກ 1.ງ)

ໃນວັນທີ 20 ເດືອນທັນວາ ມີ ເຜົ່າຢ້າວຖືສາດສະໜາ ຄຣິດສະຕຽນຫ້າຄົນໄດ້ຖືກຈັບໃນຂໍ້ຫາກໍ່ສ້າງ ໂບດ ໂດຍບໍ່ໄດ້ຮັບອະນຸຍາດ. ໃນວັນທີ 26 ທັນວາ ເຈົ້າໜ້າທີ່ໄດ້ຈັບກຸມສະມາຊິກກຸ່ມຕື່ມອີກ. ຫົວໜ້າໂບດ ຫົກຄົນໄດ້ຮັບອະນຸຍາດຈາກນາຍບ້ານໃຫ້ສ້າງໂບດ, ມີລາຍງານວ່າ ເມື່ອເຈົ້າໜ້າທີ່ເມືອງສັ່ງໃຫ້ ຍົກເລີກ ການກໍ່ສ້າງ ແຕ່ພວກເຂົາຍັງສືບຕໍ່ກໍ່ສ້າງໂດຍບໍ່ໄດ້ຮັບອະນຸຍາດຈາກຂັ້ນເມືອງ.

ຊາວຄຣິດສະຕຽນທີ່ເປັນຊົນເຜົ່ານັ້ນບາງຄັ້ງກໍ່ຖືກຈັບພາຍໃຕ້ຂໍ້ອ້າງທີ່ຜິດຍ້ອນຄວາມເຊື່ອຖືຂອງພວກເຂົາ. ມີລາຍງານວ່າໃນກາງປີ ມີຊາວຄຣິດສະຕຽນຢູ່ບ້ານນ້ຳແຮ້ງ, ແຂວງອຸດົມໄຊ ຖືກຈັບໃນຂໍ້ຫາວ່າມີກະສູນ ປືນໄວ້ຄອບຄອງໃນເຮືອນຂອງເຂົາ. ເຂົາໄດ້ຖືກຈັບກຸມເປັນເວລາ 2 ເດືອນ ແລະ ຖືກປ່ອຍຕົວໃນຊວງ ຕໍ່ມາ ຫລັງຈາກລາວຈ່າຍຄ່າປັບໄຫມເປັນເງິນ 200 ໂດລາ ສະຫະລັດ (ສອງລ້ານກີບ). ຫົວໜ້າໂບດໄດ້ ບອກ ໃຫ້ຮູ້ວ່າຊາຍດັ່ງກ່າວຫາກໍ່ກັບມາຈາກໜ້າທີ່ທະຫານພັນທະສາມປີ ແລະກໍ່ອ້າງວ່າ ນາຍບ້ານທີ່ ຮູ້ກັນວ່າເປັນ ປໍລະປັກກັບຊາວຄຣິດສະຕຽນນັ້ນໄດ້ໃຊ້ຂໍ້ອ້າງວ່າມີກະສູນປືນໄວ້ຄອບຄອງເພື່ອຈັບກຸມລາວ. ໃນວັນທີ 11 ສິງຫາ ຊາວຄຣິດສະຕຽນ ສອງຄົນຢູ່ເມືອງເຊໂປນ ແຂວງສະຫວັນນະເຂດ ຖືກຂັງຄຸກ ໃນຂໍ້ຫາທີ່ໄດ້ເວົ້າ ກ່ຽວກັບການເຊື່ອຖືຂອງພວກເຂົາເຊິ່ງ ນາຍບ້ານເຫັນວ່າເປັນທັດສະນະແບບຕາເວັນ ຕົກ. ລັດຖະບານໄດ້ ລາຍງານວ່າ ຊາຍທັງສອງຖືກຕັດສິນຈຳຄຸກ 6 ເດືອນໃນຂໍ້ຫາ “ແບ່ງແຍກສັງຄົມ ແລະທຳລາຍຄວາມເປັນ ນື່ງດຽວ” ແລະ ຕາມດວ້ຍການຝາກໂທດເພື່ອເບິ່ງພຶດຕິກຳນື່ງປີ. ໃນຕອນທ້າຍ ປີເຂົາຍັງຄົງຖືກຂັງຄຸກຢູ່.

ໃນຊວງຕົ້ນປີ ລັດທະບານໄດ້ປອ່ຍຕົວຊາຍເຜົ່າ ບຣູຖືສາດສະໜາ ຄຣິດສະຕຽນ 2 ຄົນໃນຂໍ້ຫາຄ້າອາວຸດ ຢູ່ແຂວງສະຫວັນນະເຂດໃນຊວງປີ 2005. ຢ່າງໄດກໍດີ ບາງຄົນທີ່ຢູ່ໃນຊຸມຊົນສາດສະໜາຄຣິດໄດ້ເວົ້າວ່າ ຊາຍສອງຄົນບໍ່ໄດ້ຖືກຕັ້ງຂໍ້ຫາ ແຕ່ຖືກຄຸມໂຕຢູ່ ສະຖານີຕຳຫລວດຈົນກວ່າຄອບຄົວຂອງເຂົາມາຈ່າຍຄ່າ ປັບໄຫມໃຫ້ຕຳຫລວດ. ສະມາຊິກ ຊຸມຊົນມກຸ່ມສາດສະໜາເຊື່ອວ່າການຈັບກຸມແມ່ນຍອັນຄວາມເຊື່ອຖື ສາດສະໜາຂອງພວກເຂົາ ແລະກໍ່ກ່າວວ່າ ມີຫລາຍຄົນທີ່ບໍ່ແມ່ນຊາວຄຣິດສະຕຽນໃນຊຸມຊົນກໍ່ຄ້າກະສູນ ປືນ ແຕ່ກໍ່ບໍ່ເຄີຍຖືກຈັບກຸມ. ຊະມະຊິກຊຸມຊົນຍັງເຊື່ອວ່າການຈັບກຸມແລະ ຄຸມຂັງຊາຍສອງຄົນນັ້ນແມ່ນ ເຈົ້າໜ້າທີ່ມີເຈດຕະນາບັງຄັບໃຫ້ເຂົາປະລະຄວາມເຊື່ອຖືຂອງພວກເຂົາ.

ໃນເດືອນ ສິງຫາສະມະຊິກໂບດ ອີແວັນເຈີລີເກີລລາວ ຊື່ທ້າວຍອດເຊິ່ງໄດ້ຖືກຕັດສິນຈຳຄຸກ 12 ປີ ໃນຂໍ້ຫາ ວ່າເປັນທໍລະຍົດ ແລະ ເປັນພວກຕໍ່ຕ້ານລັດຖະບານໃນປີ 1999 ນັ້ນໄດ້ເສຍຊີວິດຍອັນເຂົາເຈັບເປັນໃນ ເວລາຕໍ່ມາ. ສະມາຊິກໂບດອີກຄົນນື່ງ ໄດ້ຖືກຕັດສິນ ຈຳຄຸກ 15 ປີໃນເວລາດຽວກັນນັ້ນ ຍັງຄົງຢູ່ໃນກົງຂັງ ຢູ່. ມີບາງຄົນເຊື່ອວ່າແມ່ນຍອັນ ພວກເຂົາເຜີຍແຜ່ສາດສະໜາ.

ລັດທະທຳມະນູນ ຫ້າມບໍ່ໃຫ້ມີ “ທຸກການະທຳ ທີ່ເປັນການສ້າງຄວາມແບ່ງແຍກ ສາດສະໜາ ຫລື ແບ່ງ ແຍກປະຊາຊົນ” ພັກ ປປລ ແລະລັດຖະບານໄດ້ໃຊ້ຂໍ້ຄວາມນີ້ເພື່ອເປັນເຫດຜົນຈຳກັດການປະຕິບັດສາດ ສະໜາອື່ນໆ ລວມທັງການປະຕິບັດສາດສະໜາພຸດ ຊຶ່ງເປັນສາດສະໜາຂອງຄົນສ່ວນໃຫຍ່ ແລະສາດສະ ໜາຜີ. ເຖິງແມ່ນວ່າມີຄຳເຫັນຂອງທາງການທີ່ຮັບຮູ້ຜົນດີຂອງສາດສະໜາ, ແຕ່ກໍຍັງມີຈຸດເນັ້ນທີ່ສາດສະ ໜາມີຄວາມອາດສາມາດແບ່ງແຍກ, ກວນໃຈ ຫຼືບໍ່ໃຫ້ມີສະຖຽນລະພາບ. ລັດຖະທຳມະນູນໄດ້ຂຽນໄວ້ວ່າ ລັດ “ລະດົມ ແລະສົ່ງເສີມ” ພະ ແລະຈົວໃນສາດສະໜາພຸດກໍຄືນັກບວດສາດສະໜາອື່ນໄປເຂົ້າຮ່ວມໃນ ກິດຈະກຳ “ທີ່ເປັນປະໂຫຍດສຳລັບປະເທດຊາດ ແລະປະຊາຊົນ”.

ທາງການສືບຕໍ່ຕັ້ງຂໍ້ສົງໃສກັບຊຸມຊົນທີ່ບໍ່ຖືສາດສະໜາພຸດ, ລວມທັງບາງກຸ່ມ ຄຣິສຕຽນ. ທາງການທ້ອງຖິ່ນປະກົດວ່າໃນບາງກໍລະນີຍ້ອນໄດ້ຮັບການສົ່ງເສີມຈາກລັດຖະບານ ຫຼືເຈົ້າໜ້າທີ່ຂອງພັກ ມັກຈະເລືອກທຳຮ້າຍທາລູນກຸ່ມຊາວ ຄຣິສຕຽນນິກາຍໂປຣແຕສຕັງ ທີ່ທັງຮັບຮູ່ຢ່າງເປັນທາງການຈາກ ສູນກາງແນວລາວສ້າງຊາດ ແລະ ບໍ່ຮັບຮູ້ກໍ່ຕາມ.

ດຳລັດເລກທີ 92 ໄດ້ອະນຸຍາດໃຫ້ກຸ່ມຜູ້ເຊື່ອຖືສາດສະໜາສ່ວນນ້ອຍສາມາດປະກອບກິດຈະກຳທາງສາດສະໜາຂອງຕົນຈຳນວນນຶ່ງ ຊຶ່ງໃນເມື່ອກ່ອນຖືວ່າຜິດກົດໝາຍເຊັ່ນ ການຂົນຂວາຍໃຫ້ຄົນປ່ຽນສາດສະໜາ ແລະການພິມປຶ້ມສາດສະໜາ; ເຖິງຢ່າງໃດກໍຕາມມັນໄດ້ຮຽກຮ້ອງໃຫ້ກຸ່ມສາດສະໜາ ຫລື ບຸກຄົນຈະຕ້ອງໄດ້ຂໍ້ອະນຸຍາດລ່ວງໜ້າເພື່ອດຳເນີນກິດຈະກຳດັ່ງກ່າວ ໂດຍສ່ວນຫຼາຍຈາກແນວລາວສ້າງຊາດ. ເຖິງແມ່ນວ່າຈຸດປະສົງຂອງດຳລັດນັ້ນແມ່ນເພື່ອໃຫ້ຄວາມກະຈ່າງແຈ້ງສິດ ແລະຄວາມຮັບຜິດຊອບຂອງກຸ່ມສາດສະໜາ, ຜູ້ນຳຫຼາຍຄົນໃນກຸ່ມສາດສະໜານ້ອຍໄດ້ຈົ່ມວ່າໃນຕົວຈິງມັນໄດ້ຈຳກັດການເຄື່ອນໄຫວຂອງຕົນ. ຂໍ້ຮຽກຮ້ອງໃຫ້ກຸ່ມສາດ

ສະໜາຕ້ອງໄດ້ຮັບອະນຸຍາດ ຊຶ່ງບາງກໍລະນີຕ້ອງຜ່ານຫຼາຍຫ້ອງການບໍ່ວ່າຈະກ່ຽວຂ້ອງກັບກິດຈະກຳຫຍັງກໍຕາມ ມັນໄດ້ຈຳກັດອິດສະຫຼະພາບຂອງກຸ່ມສາດສະໜາຢ່າງຫຼວງຫຼາຍ.

ສູນກາງການແນວລາວສ້າງຊາດໄດ້ຮັບຮູ້ 2 ກຸ່ມສາດສະໜາ ໂປຣເຕສຕັງ ຄືໂບດ ອີແວັນເຈີລີເກີລ ລາວ (LEC) ຊຶ່ງເປັນໂບດໂປຣແຕສຕັງ ໃຫຍ່ ແລະໂບດ ເຊວັນເດ ອັດເວັນຕິສ. ສູນກາງການແນວລາວສ້າງຊາດໄດ້ປະຕິເສດບໍ່ຮັບຮູ້ການຕັ້ງໂບດເຊັ່ນກຸ່ມເມໂທດິສທ ທີ່ໄດ້ດຳເນີນກິດຈະກຳຢ່າງເສລີ.

ຄວາມອົດທົນຂອງລັດຖະບານຕໍ່ບັນຫາສາດສະໜາແມ່ນຂຶ້ນກັບຂົງເຂດຕ່າງໆ ຊຶ່ງແຕກຕ່າງກັນໄປ. ເກືອບທົ່ວທຸກພາກຂອງປະເທດ ສະມາຊິກຂອງກຸ່ມສາດສະໜາທີ່ມີມາດົນແລ້ວນັ້ນ ຈະບໍ່ຄ່ອຍມີບັນຫາໃນການປະກອບພິທີກຳສາດສະໜາຂອງຕົນ, ເຖິງແມ່ນວ່າແມ່ນແຕ່ກຸ່ມທີ່ມີຢູ່ດົນແລ້ວໃນບາງເຂດຂອງແຂວງສະຫວັນນະເຂດ ແລະຫຼວງພະບາງຍັງຄົງປະເຊີນໜ້າກັບຂໍ້ຈຳກັດຕ່າງໆ ຈາກທາງການທ້ອງຖິ່ນ. ມີບາງຄັ້ງທາງການແນະນຳໃຫ້ກຸ່ມສາດສະໜາໃໝ່ນັ້ນລວມຕົວເຂົ້າກຸ່ມ ໂບດ ອີແວັນເຈີລີເກີລ ລາວ ເຖິງແມ່ນວ່າທາງດ້ານຄວາມເຊື່ອຖືກຸ່ມເລົ່ານັ້ນແຕກຕ່າງກັນຢ່າງຊັດເຈນ. ໃນບາງເຂດເຊັ່ນຢູ່ຫຼວງພະບາງ ແລະຊຽງຂວາງ ກຸ່ມສາດສະໜາເອກະລາດໄດ້ຖືກສັ່ງໃຫ້ເຂົ້າຮ່ວມກັບໂບດ ອີແວັນເຈີລີເກີລ ລາວ ຫຼືບໍ່ກໍຈະຖືກລົງໂທດ, ລວມທັງການຈັບກຸມຜູ້ເປັນຫົວໜ້າ. ໃນບາງເຂດທາງການໄດ້ອະນຸຍາດໃຫ້ກຸ່ມຕ່າງໆ ທີ່ບໍ່ກ່ຽວຂ້ອງກັບ LEC ຫຼື ເຊວັນເດ ອັດເວັນຕິສ ໃຫ້ສາມາດສືບຕໍ່ພິທີກຳທາງສາດສະໜາຂອງເຂົາເຈົ້າໄດ້.

ແນວລາວສ້າງຊາດມັກຈະເຂົ້າໄປຫຍຸ້ງກ່ຽວເພື່ອແກ້ໄຂບັນຫາຢູ່ທ້ອງຖິ່ນ ເມື່ອມີຂໍ້ຂັດແຍ່ງກັບສາດສະໜາສ່ວນໜ້ອຍ ສະເພາະແມ່ນສາດສະໜາ ຄຣິສຕຽນ ທີ່ຖືກ ຄຸກຄາມຕະຫລອດມາ; ເຖິງຢ່າງໃດກໍຕາມຍັງຄົງມີເຫດການບໍ່ມີການໃຊ້ຄວາມອົດທົນຂອງການນຳທ້ອງຖິ່ນໃນບັນຫາສາດສະໜາຢູ່ບາງຂົງເຂດ. ເຖິງແມ່ນວ່າທາງການໃນບາງເຂດຕົວເມືອງໃຫຍ່ ເຊັ່ນ ນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະປາກເຊ ໂດຍທົ່ວໄປມີຄວາມອົດທົນຕໍ່ພິທີກຳສາດສະໜາ ຄຣິສຕຽນ, ທາງການລັດຖະບານໃນບາງບ່ອນຍັງຈຳກັດການປະຕິບັດທາງສາດສະໜາທີ່ໄດ້ມີການລົງທະບຽນຄັກແນ່. ທາງການຂອງເມືອງພິນໃນແຂວງສະຫວັນນະເຂດໄດ້ຈັບກຸມ ແລະຄຸມຂັງຜູ້ເຊື່ອຖືສາດສະໜາອື່ນໂດຍບໍ່ໄດ້ຕັ້ງຂໍ້ກ່າວຫາໃດໆ ຊຶ່ງປະກົດວ່ານັ້ນແມ່ນຄວາມພະຍາຍາມ ເພື່ອໃຫ້ເຂົາເຈົ້າປ່ຽນສາດສະໜາ (ເບິ່ງພາກ 1.ງ). ທາງການໃນບາງເຂດໄດ້ໃຊ້ການຂູ່ເຂັນຈະຈັບກຸມເປັນວິທີການອັນນຶ່ງ ເພື່ອຂູ່ເຂັນກຸ່ມສາດສະໜາທ້ອງຖິ່ນ. ໃນບາງຂົງເຂດທາງການທ້ອງຖິ່ນ

ກໍໄດ້ໃຊ້ການຂູ່ທີ່ຈະຖອນບັດປະຈຳຕົວປະຊາຊົນ ແລະສຳມະໂນຄອບຄົວ ພ້ອມທັງປະຕິເສດບໍ່ໄດ້ຮັບການສຶກສາສຳລັບຜູ້ທີ່ບໍ່ຍອມປະລະຄວາມເຊື່ອຂອງຕົນ.

ເຈົ້າໜ້າທີ່ໄດ້ຍຶດທີ່ດິນຂອງຊາວຄຣິດສະຕຽນໃນເຂດນຶ່ງທີ່ແຂວງອຸດົມໄຊໃນຊ່ວງເດືອນກຸມພາ ແຕ່ກໍ່ມີລາຍງານວ່າໄດ້ສົ່ງຄືນໃນອີກສອງ-ສາມເດືອນຕໍ່ມາ.

ໂບດ ໂຣມັງກາໂຕລິກຢູ່ທາງພາກເໜືອກ ບໍ່ສາມາດເຄື່ອນໄຫວຢ່າງມີປະສິດທິຜົນໄດ້ ແລະສະມາຊິກໂບດກໍ່ຕິດຕໍ່ກັບພະສັງຄະລາດຂອງແຂວງຫຼວງພະບາງ ແຕ່ຢູ່ວຽງຈັນໄດ້ເປັນໄລຍະໆເທົ່ານັ້ນ. ຊຸມຊົນກະໂຕລິກ ສ່ວນໜ້ອຍທີ່ຢູ່ຫຼວງພະບາງ, ໄຊຍະບູລີ ແລະບໍ່ແກ້ວສາມາດຈັດພິທີກຳສາດສະໜາເປັນໄລຍະໆຢູ່ເຮືອນສະມາຊິກ ແຕ່ຫາກວ່າໃນເຂດນີ້ບໍ່ມີຄຸນພໍ່ ແລະການຢັ້ງຢາມຂອງຄຸນພໍ່ທີ່ມາຈາກວຽງຈັນ ກໍບໍ່ສະໝ່ຳສະເໝີ.

ໃນ ວັນທີ 18 ເດືອນມິຖຸນາລັດທະບານໄດ້ອະນຸຍາດໃຫ້ມີພິທີອຸປະສົມບົດໃຫ້ແກ່ພຣະ ຄັ້ງທຳອິດໃນ30 ປີຫລັງຈາກໄດ້ບັງຄັບໃຫ້ຍົກເລີກພິທີດັ່ງກ່າວໃນປີ 2005. ລັດທະບານໄດ້ອະນຸຍາດໃຫ້ມີພິທີອຸປະສົມບົດໃຫ້ແກ່ພຣະອີກສອງອົງ ໃນວັນທີ 9 ເດືອນທັນວາ ແລະວັນທີ 30 ທັນວາ.

ສົມທຽບໃສ່ປີ 2005 ແລ້ວເຫັນວ່າບໍ່ມີລາຍງານວ່າເຈົ້າໜ້າທີ່ໄດ້ຈັບກຸມ ຫລື ຄຸມຂັງຜູ້ຄົນທີ່ນຳຕຳລາໄບເບີລ ເຂົ້າປະເທດ.

ຜູ້ເຊື່ອຖືສາດສະໜາ ບາຮາຍ ຢູ່ນະຄອນຫຼວງວຽງຈັນສາມາດທຳພິທີກຳທາງສາດສະໜາຂອງຕົນໄດ້ ໂດຍບໍ່ມີສິ່ງກີດຂວາງຢູ່ທີ່ ວຽງຈັນ, ສະຫວັນນະເຂດ ແລະຄຳມ່ວນ. ຜ່ານມາກຸ່ມສາດສະໜາ ບາຮາຍ ທີ່ມີຈຳນວນບໍ່ຫຼາຍ ໄດ້ຖືກຈຳກັດໃນການເຄື່ອນໄຫວໂດຍການຈັດຕັ້ງທ້ອງຖິ່ນ. ກຸ່ມສາດສະໜາ ມຸດສະລິມສ່ວນໜ້ອຍຢູ່ວຽງຈັນ ນັ້ນສາມາດປະຕິບັດພິທີທາງສາດສະໜາຂອງພວກເຂົາໂດຍບໍ່ມີຂໍ້ຫຍຸ້ງຍາກໃດໆ.

ຜູ້ເຊື່ອຖືສາດສະໜາຜີ ປົກກະຕິແລ້ວບໍ່ມີບັນຫາໃດໆຈາກລັດຖະບານໃນການປະຕິບັດພິທີກຳທາງສາດສະໜາຜີ ຊຶ່ງກໍມີອັນແຕກຕ່າງກັນໃນກຸ່ມຊົນຊາດຊົນເຜົ່າທີ່ມີນຳກັນປະມານ 70 ກຸ່ມໃນປະເທດ. ເຖິງຢ່າງໃດກໍຕາມຝ່າຍລັດຖະບານບໍ່ໄດ້ສົ່ງເສີມການເຊື່ອຖືຜີ ຊຶ່ງລັດເຂົ້າໃຈວ່າເປັນເລື່ອງຫຼ້າສະໃໝ, ບໍ່ສະອາດ ຫຼືຜິດກົດໝາຍເຊັ່ນການປະພຶດຂອງບາງຊົນເຜົ່າທີ່ມີການຂ້າເດັກນ້ອຍ ຖ້າເດັກເກີດມາພິການ ຫຼືການຮັກສາສົບຄົນຕາຍໄວ້ເຮືອນຊານ.

ທາງການສະຫວັນນະເຂດຍັງຄົງປະຕິເສດຄຳຮ້ອງຂອງກຸ່ມສາດສະໜາ ຄຣິສຕຽນ ທີ່ບ້ານຄຳສານໃຫ້ສົ່ງຄືນໂບດຂອງເຂົາເຈົ້າ ທີ່ທາງການໄດ້ຍຶດຫຼາຍປີຜ່ານມາແລ້ວ. ໃນຫລາຍເຂດເຈົ້າໜ້າທີ່ຍັງສືບຕໍ່ປະຕິເສດບໍ່ໃຫ້ກຸ່ມສາດສະໜາສ້າງໂບດແບບຖາວອນ, ແຕ່ຢູ່ບ່ອນອື່ນຊໍ້າອະນຸຍາດໃຫ້ສ້າງ ແລະປົວແປງໂບດໄດ້. ເຈົ້າໜ້າທີ່ບາງບ່ອນໃນປະເທດໄດ້ໃຊ້ການຂົ່ມຂູ່ ເພື່ອເຮັດໃຫ້ຊາວ ຄຣິສຕຽນ ເຊົາເຊື່ອຖືສາດສະໜາຂອງເຂົາເຈົ້າ ໂດຍສະເພາະຢູ່ແຂວງສະຫວັນນະເຂດ, ສາລະວັນ ແລະອຸດົມໄຊ (ເບິ່ງພາກ 1. ສ).

ເຈົ້າໜ້າທີ່ໃນບາງເຂດມີຄວາມສົງໃສຕໍ່ບຸກຄົນທີ່ໄດ້ປ່ຽນສາດສະໜາໄປຖືສາດສະໜາ ຄຣິສຕຽນ. ໃນວັນທີ 11 ສິງຫາ ຊາຍຊາວຄຣິດສະຕຽນສອງຄົນຖືກຈັບຢູ່ແຂວງສະຫວັນນະເຂດໂດຍກ່າວວ່າມີສ່ວນກ່ຽວຂ້ອງກັບການປ່ຽນສາດສະຫນາ ແລະຢູ່ໃນກຸ່ມຊາວຄຣິດສະຕຽນທີ່ສະແດງຄວາມຮຽກຮ້ອງຫລາຍທີ່ສຸດໃນຊຸມຊົນ (ເບິ່ງພາກ 1.ງ)

ລັດຖະບານໄດ້ຫ້າມຢ່າງເດັດຂາດບໍ່ໃຫ້ຄົນຕ່າງປະເທດເຄື່ອນໄຫວ ເພື່ອຈຸດປະສົງຊັກຊວນໃຫ້ມີການປ່ຽນສາດສະໜາ, ເຖິງວ່າຈະອະນຸຍາດໃຫ້ອົງການບໍ່ສັງກັດລັດຕ່າງປະເທດທີ່ຂຶ້ນກັບສາດສະໜາໃດນຶ່ງເຂົ້າມາເຮັດວຽກໃນປະເທດໄດ້. ຄົນຕ່າງປະເທດທີ່ຢາຍວັດຖຸກ່ຽວກັບສາດສະໜາສາມາດຖືກຈັບ ຫຼືໄລ່ອອກຈາກປະເທດໄດ້. ເຖິງແມ່ນວ່າບັນຍັດເລກທີ 92 ອະນຸຍາດໃຫ້ສາມາດເຄື່ອນໄຫວເພື່ອຊັກຊວນໃຫ້ປ່ຽນສາດສະໜາ ແລະໃນເມື່ອການເຄື່ອນໄຫວສາດສະໜາເລົ່ານັ້ນໄດ້ຮັບອະນຸຍາດຈາກແນວລາວສ້າງຊາດ, ແຕ່ແນວລາວສ້າງຊາດກໍ່ບໍ່ອະນຸຍາດໃຫ້ ແລະ ບຸກຄົນໃດຫາກພົບວ່າມີການເຜີຍແຜ່ສາດສະໜາກໍສາມາດຖືກຂູ່ເຂັນ ຫຼືຈັບກຸມ. ໃນເດືອນ ພຶດສະພາ ເຈົ້າໜ້າທີ່ໄດ້ຈັບກຸມ ຊາວຕ່າງຊາດສອງຄົນຢູ່ແຂວງບໍ່ແກ້ວໃນຂໍ້ຫາ ເຄື່ອນໄຫວເພື່ອຊັກຊວນໃຫ້ປ່ຽນສາດສະໜາແລະກໍ່ຖືກເນລະເທດ ຫລັງຈາກກັກໂຕໄວ້ສອງວັນ. ລັດຖະບານອະນຸຍາດໃຫ້ພິມ, ນຳເຂົ້າ ແລະແຈກຢາຍເອກະສານສາດສະໜາພຸດໄດ້, ແຕ່ບໍ່ອະນຸຍາດການພິມ ຫຼືນຳເຂົ້າວັດສະດຸສາດສະໜາ ແລະປຶ້ມທີ່ບໍ່ກ່ຽວຂ້ອງກັບສາດສະໜາພຸດ. ບັນຍັດ 92 ອະນຸຍາດໃຫ້ສາມາດພິມວັດສະດຸສາດສະໜາໄດ້ ເມື່ອໃດຫາກໄດ້ຮັບອະນຸຍາດຈາກແນວລາວສ້າງຊາດບັນຫາມີຢູ່ວ່າແນວລາວສ້າງຊາດບໍ່ໄດ້ອະນຸຍາດໃຫ້ກຸ່ມ ຄຣິສຕຽນ ເຮັດແບບດຽວກັນໄດ້. ລັດຖະບານຮຽກຮ້ອງ ແລະປົກກະຕິອະນຸມັດໃຫ້ຕອງມີສາຍພົວພັນທາງການກັບກຸ່ມສາດສະໜາອື່ນໆ ໃນຕ່າງປະເທດ; ເຖິງຢ່າງໃດກໍຕາມໃນພາກຕົວຈິງແລ້ວຄວາມແຕກຕ່າງກັນລະຫວ່າງສາຍພົວພັນທາງການ ແລະບໍ່ແມ່ນທາງການນັ້ນແມ່ນບໍ່ຈະແຈ້ງ ແລະສາຍພົວພັນກັບກຸ່ມສາດສະໜາດຽວກັນໃນຕ່າງປະເທດນັ້ນປົກກະຕິແລ້ວແມ່ນບໍ່ຍາກເລີຍ.

**ການກະທຳທາລຸນ ແລະແບ່ງແຍກໃນສັງຄົມ.**

ໂດຍທົ່ວໄປແລ້ວກຸ່ມສາດສະໜາຕ່າງໆ ໃນສັງຄົມສາມາດຢູ່ຮ່ວມກັນໄດ້ດີຖານມິດ. ຢູ່ໃນປະເທດປະກົດວ່າບໍ່ມີຊຸມຊົນຢິວ ແລະ ກໍບໍ່ປະກົດວ່າມີການກະທຳຕ້ານຊາວ ຢິວ.

ສຳລັບໃຊ້ໃນການປຶກສາຫາລືເພີ່ມກ່ຽວກັບບັນຫາ, ກະລຸນາເບິ່ງ ບົດລາຍງານກ່ຽວກັບອິດສະຫຼະພາບທາງດ້ານສາດສະໜາໃນສາກົນ 2006

## ງ. ອິດສະຫຼະພາບໃນການເຄື່ອນໄຫວໄປມາໃນປະເທດ, ການເດີນທາງຂອງຄົນຕ່າງປະເທດ, ອົບພະຍົບ ແລະການກັບຄືນປະເທດ.

ກົດໝາຍອະນຸຍາດໃຫ້ມີສິດຕ່າງໆເລົ່ານີ້, ແຕ່ໃນຕົວຈິງລັດຖະບານໄດ້ຈຳກັດບາງສິດຂ້າງເທິງ. ປະຊາຊົນຜູ້ເດີນທາງຜ່ານເຂດຊາຍແດນແຂວງບໍ່ຈຳເປັນລາຍງານທາງການ; ເຖິງຢ່າງໃດກໍຕາມໃນບັນດາເຂດທີ່ກຳນົດເປັນເຂດຄວາມປອດໄພ, ຈະເຫັນວ່າໃນບາງຄັ້ງຄາວມີຈຸດທີ່ເພີ່ມອັດທາງ ເພື່ອກວດກາເບິ່ງບັດປະຈຳຕົວຂອງຜູ້ເດີນທາງ. ປະຊາຊົນທີ່ຕ້ອງການເດີນທາງໄປເຂດໃກ້ຄຽງໃນປະເທດເພື່ອນບ້ານກໍສາມາດເຮັດໄດ້ ໂດຍບັດເດີນທາງຜ່ານແດນ ຊຶ່ງປົກກະຕິແລ້ວສາມາດຂໍໄດ້ຢ່າງງ່າຍດາຍຍທີ່ສຳນັກເມືອງ. ຜູ້ທີ່ຕ້ອງການຢາກເດີນທາງໄປໄກກວ່ານັ້ນໃນຕ່າງປະເທດຈະຕ້ອງມີໃບໜັງສືເດີນທາງ ແລະວີຊາອອກປະເທດ. ໃນຂະນະທີ່ ລັດຖະບານຈະອອກໃບໜັງສືດັ່ງກ່າວຈະຮຽກຮ້ອງຄ່າທຳນຽມນັ້ນເຈົ້າໜ້າທີ່ທ້ອງຖິ່ນສາມາດປະຕິເສດບໍ່ອະນຸຍາດໃຫ້ບາງບຸກຄົນທີ່ຕ້ອງການເຮັດໜັງສືເດີນທາງ ແລະ ວີຊາຂາອອກນອກປະເທດ. ທາງການຫ້າມບໍ່ໃຫ້ຄົນຕ່າງປະເທດເຂົ້າເຖິງບາງເຂດໃນປະເທດເຊັ່ນ ອະດີດເຂດພິເສດໄຊສົມບູນ ຊຶ່ງເປັນເຂດປົກຄອງດ້ວຍກຳລັງທະຫານ ຫຼືເມືອງຫ່າງໄກໃນແຂວງຊຽງຂວາງ ແລະບໍລິຄຳໄຊບ່ອນທີ່ກຸ່ມກະບົດຕ້ານລັດຖະບານຍັງຄົງເຄື່ອນໄຫວຢູ່.

ລັດຖະບານບໍ່ໄດ້ໃຊ້ວິທີການບັງຄັບອອກປະເທດ; ເຖິງຢ່າງໃດກໍຕາມຍັງມີກຸ່ມຄົນຈຳນວນໜ້ອຍໜຶ່ງທີ່ໄດ້ໂຕນອອກຈາກປະເທດໃນໄລຍະ 1975 ເວລາມີການປ່ຽນແປງລັດຖະບານ ແລະບຸກຄົນດັ່ງກ່າວນີ້ໄດ້ຖືກຕັດສິນລັບຫຼັງວ່າໄດ້ດຳເນີນກິດຈະກຳຕ້ານລັດຖະບານ ຈຶ່ງບໍ່ມີສິດກັບຄືນປະເທດ.

**ການປົກປ້ອງຜູ້ອົບພະຍົບ.**

ກົດໝາຍກຳນົດໃຫ້ບຸກຄົນທີ່ບໍ່ມີລັດເຂົ້າມາລີ້ໄພ ແລະຈະຖືກປົກປ້ອງ, ແຕ່ວ່າປະເທດນີ້ບໍ່ໄດ້ເປັນຄູ່ສັນຍາຂອງສົນທິສັນຍາ ສປຊ 1951 ທີ່ກ່ຽວກັບສະຖານະພາບຂອງອົບພະຍົບ ຫຼືສົນທິສັນຍາ 1967 ຂອງສົນທິສັນຍາສະບັບນີ້. ໃນຕົວຈິງລັດຖະບານບໍ່ໄດ້ໃຫ້ການປົກປ້ອງຕໍ່ການສົ່ງຄືນປະເທດບຸກຄົນທີ່ໄດ້ຫຼົບໜີມາຍ້ອນຢ້ານກົວ ທີ່ຈະຖືກການກະທຳທາລຸນ ແລະກໍບໍ່ໄດ້ໃຫ້ສິດຕໍ່ຜູ້ອົບພະຍົບທີ່ຫຼົບໄພເຂົ້າມາຢູ່ປະເທດ. ເຖິງຢ່າງໃດກໍຕາມລັດຖະບານໄດ້ສະແດງຄວາມສາມາດໃນການແກ້ໄຂແບບພອ່ນສັ້ນພອ່ນຍາວຕໍ່ກໍລະນີການຂໍລີ້ໄພຂອງບຸກຄົນ.

ໃນຊຸມປີພາຍຫຼັງການກັບຄືນປະເທດ, ອະດີດຜູ້ລີ້ໄພມັກຈະເປັນເປົ້າໝາຍຂອງການຕິດຕາມໂດຍເຈົ້າໜ້າທີ່ຫຼາຍກວ່າປະຊາຊົນຄົນອື່ນໆ. ເຖິງຢ່າງໃດກໍຕາມຜູ້ກັບຄືນປະເທດເລົ່ານີ້ສ່ວນໃຫຍ່ແມ່ນສາມາດເຊື່ອມໂຕເຂົ້າກັບສັງຄົມ ແລະກໍບໍ່ເປັນເປົ້າໝາຍຂອງຄວາມເອົາໃຈໃສ່ສະເພາະຈາກເຈົ້າໜ້າທີ່ອີກຕໍ່ໄປ. ຫຼາຍຄົນທີ່ໄດ້ໂຕນພາຍຫຼັງການປ່ຽນແປງລັດຖະບານໃນປີ 1975 ໄດ້ກັບຄືນມາຢາມພີ່ນ້ອງ ແລະມີບາງຄົນກໍຢູ່ເລີຍໃນນາມເປັນຊາວຕ່າງປະເທດ ອາໃສຢູ່ລາວ ແລະຍັງມີບາງຄົນອີກສາມາດຂໍສັນຊາດຄືນຢ່າງໄດ້ຜົນ.
ລັກຖະບານຍັງຄົງປະຕິເສດຄຳຮອ້ງຂໍຈາກຫ້ອງການຂ້າຫຼວງໃຫຍ່ ເພື່ອຊາວອົບພະຍົບ ເພື່ອໃຫ້ເປີດຫ້ອງການຄືນໃໝ່ໃນປະເທດ ເພື່ອຕິດຕາມການປັບໂຕເຂົ້າສູ່ສັງຄົມຂອງອະດີດຜູ້ອົບພະຍົບຜູ້ໄດ້ກັບຄືນປະເທດພາຍໃຕ້ແຜນງານກັບຄືນປະເທດຂອງຫ້ອງການຂ້າຫຼວງໃຫຍ່. ລັດທະບານໃຫ້ທະແຫລງການວ່າອຳນາດທີ່ມອບໃຫ້ຫ້ອງການຂ້າຫຼວງໃຫຍ່ໄດ້ສິ້ນສຸດໃນປີ 2001 ແລະອະດີດຊາວອົບພະຍົບທີ່ກັບຄືນມາໄດ້ປັບໂຕເຂົ້າສູ່ສັງຄົມໄດ້ດີ.

ຢ່າງໄດ້ກໍ່ຕາມຄາດວ່າ ຕັ້ງແຕ່ປີ 2005 ມີຊາວເຜົ່າມົ້ງຫລາຍກວ່າ 2000 ຄົນເຂົ້າມອບຕົວສວ່ນໄຫຍ່ແລ້ວແມ່ນຢູ່ແຂວງຊຽງຂວາງ, ບໍລິຄຳໄຊ ແລະ ແຂວງວຽງຈັນ (ເຂດທີ່ຈັດໃຫ້ເປັນເຂດທີ່ເຄີຍປົກຄອງດວ້ຍທະຫານເຂດພິເສດໄຊສົມບູນ).

ໃນໄລຍະປີເກັບກຳຂໍ້ມູນລາຍງານ ລັດທະບານຍັງຄົງສືບຕໍ່ປະຕິເສດວ່າບໍ່ໄດ້ກັກໂຕເດັກເຜົ່າມົ້ງຈຳນວນ 26 ຄົນ ແຕ່ຫລາຍແຫລ່ງຂໍ້ມູນລະບຸວ່າເດັກເຫລົ່ານັ້ນໄດ້ຖືກກັກໂຕຢູ່ຕາມສະຖານກັກຂັງຂອງລັດທະບານຢູ່ແຫ່ງຕ່າງໆນັບຕັ້ງແຕ່ເດືອນທັນວາ ປີ 2005. ໃນເດືອນ ພະຈິກ ເຈົ້າຫນ້າທີໄທໄດ້ຈັບກຸມກຸ່ມຊາວເຜົ່າມົ້ງຢູ່ແຂວງເພັດສະບູນ ເຊິ່ງເກືອບທັງຫມົດແມ່ນຜູ້ຍິງທີ່ໂຕນເຂົ້າປະເທດໄທ ແລະກໍ່ໄດ້ອາໄສຢູ່ສູນທີ່ແຂວງເພັດສະບູນ. ລັດທະບານໄທໄດ້ຢັ້ງຢືນພາຍຫລັງວ່າໄດ້ເນລະເທດຊາວເຜົ່າມົ້ງຈຳນວນ 27 ຄົນເຊິ່ງໃນນັ້ນ 26 ຄົນແມ່ນເດັກນອ້ຍເຂົ້າມາລາວໃນຊ່ວງຕົ້ນເດືອນ ທັນວາ ປີ 2005. ໃນເບື້ອງຕົ້ນເຈົ້າຫນ້າທີລາວໄດ້ປະຕິເສດບໍ່ຮັບຮູ້ ແຕ່ຕໍ່ມາກໍ່ຍອມຮັບໂດຍສວ່ນຕົວວ່າໄດ້ກັກກຸ່ມນີ້ໄວ້, ຢ່າງໄດກໍ່ຕາມພາຍຫລັງມາກໍ່ປະຕິເສດວ່າໄດ້ເຄີຍກັກໂຕຫລືກໍ່ບໍ່ຮູ້ວ່າກຸ່ມນີ້ຢູ່ໃສ. ໃນຊ່ວງທ້າຍປີກໍລະນີດັ່ງກ່າວກໍ່ຍັງບໍ່ຖືກແກ້ໄຂ.

## ພາກ3. ການນັບຖືສິດທິການເມືອງ: ສິດທິຂອງປະຊາຊົນເພື່ອປ່ຽນແປງລັດຖະບານຂອງຕົນ

ປະຊາຊົນບໍ່ມີສິດເພື່ອຈະປ່ຽນແປງລັດຖະບານຂອງເຂົາເຈົ້າ. ເຖິງແມ່ນວ່າລັດຖະທຳມະນູນໄດ້ເວົ້າເຖິງລະບົບທີ່ປະກອບດ້ວຍຂະແໜງບໍລິຫານ, ນິຕິບັນຍັດ ແລະຕຸລາການ, ພັກ ປປລ ໄດ້ຄວບຄຸມການປົກຄອງ ແລະການນຳທຸກໆລະດັບໂດຍການມອບໝາຍຈາກລັດຖະທຳມະນູນວ່າພັກມີ "ນິບົດບາດນຳພາ".

**ການເລືອກຕັ້ງ ແລະການເຂົ້າຮ່ວມທາງການເມືອງ**

ກົດໝາຍໄດ້ເວົ້າເຖິງການມີສະພາແຫ່ງຊາດທີ່ເປັນຕົວແທນ, ໄດ້ຖືກເລືອກຕັ້ງຢ່າງເປີດເຜີຍໃນແຕ່ລະ 5 ປີ, ໂດຍມີຜູ້ຮັບສະໝັກຈຳນວນຫຼວງຫຼາຍ ແລະເປັນການເລືອກຕັ້ງແບບຍຸດຕິທຳ ໂດຍທີ່ມີການປ່ອນບັດແບບປິດລັບ ແລະຜູ້ໃຫຍ່ທຸກຄົນສາມາດສິ່ງຄະແນນສຽງໄດ້. ເຖິງຢ່າງໃດກໍຕາມມີແຕ່ພັກດຽວຄື ພັກ ປປລ ເປັນພັກທີ່ຖືກຕ້ອງຕາມກົດໝາຍ, ດັ່ງນັ້ນພັກການເມືອງອື່ນໆ ແມ່ນບໍ່ຖືກຕ້ອງຕາມກົດໝາຍ. ຄະນະກຳມະການເລືອກຕັ້ງຕ່າງໆທີ່ຖືກແຕ່ງຕັ້ງໂດຍສະພາແຫ່ງຊາດ ຈະຕ້ອງຮັບຮອງເອົາຜູ້ຈະລົງສະໝັກທຸກຄົນບໍ່ວ່າຈະແມ່ນລະດັບທ້ອງຖິ່ນ ຫຼືລະດັບຊາດ. ຜູ້ລົງສະໝັກບໍ່ຈຳເປັນຈະແມ່ນສະມາຊິກພັກ ປປລ ແຕ່ຕົວຈິງແລ້ວເກືອບທຸກຄົນເປັນ.

ສະພາແຫ່ງຊາດແຕ່ງຕັ້ງຄະນະປະຈຳໜຶ່ງຄະນະ ຊຶ່ງປົກກະຕິແລ້ວແມ່ນອີງຕາມຄຳແນະນຳຂອງຄະນະປະຈຳ ຊຸດກ່ອນໜ້ານັ້ນ. ໂດຍອີງຕາມຂໍ້ແນະນຳຂອງຄະນະປະຈຳສະພາແຫ່ງຊາດຈະເລືອກຕັ້ງ ຫຼືປົດປະທານ ແລະຮອງປະທານ. ຄະນະກຳມະການນີ້ເບິ່ງແຍງດູແລການຈັດຕັ້ງດ້ານປົກຄອງ ແລະຕຸລາການພ້ອມທັງມີອຳນາດແຕ່ຝ່າຍດຽວໃນການແນະນຳກ່ຽວກັບລັດຖະດຳລັດຂອງປະທານປະເທດ. ຄະນະດັ່ງກ່າວຍັງແຕ່ງຕັ້ງຄະນະກຳມະການເລືອກຕັ້ງແຫ່ງຊາດ ຊຶ່ງມີສິດກ່ຽວກັບການເລືອກຕັ້ງທັງຫຼາຍ ລວມທັງການຮັບຮອງເອົາຜູ້ລົງຮັບສະໝັກຜູ້ແທນ. ກິດຈະກຳຂອງຄະນະປະຈຳບໍ່ໂປ່ງໃສຢ່າງຄົບຖ້ວນ.

ສະພາແຫ່ງຊາດ, ໂດຍປະຕິບັດຕາມຂໍ້ແນະນຳຂອງປະທານ, ເລືອກຕັ້ງນາຍົກ ແລະລັດຖະມົນຕີຄົນອື່ນໆຂອງລັດຖະບານ. ສະພາແຫ່ງຊາດປະກອບດ້ວຍສະມາຊິກ 115 ຄົນ ຊຶ່ງໄດ້ເລືອກຕັ້ງຂຶ້ນໃນເດືອນເມສາໃຕ້ລະບອບທີ່ ຜູ້ໃຫຍ່ທຸກຄົນມີສິດປ່ອນບັດ ໄດ້ເຫັນພ້ອມກັບການຄັດເລືອກຂອງພັກ ປປລ ກ່ຽວກັບການເປັນປະທານໃນເວລາເປີດກອງປະຊຸມຄັ້ງປະຖົມມະເລີກ ໃນເດືອນມິຖຸນາ ແລະໃນສະໃໝດຽວກັນນັ້ນກໍໄດ້ຮັບຮອງເອົາການຄັດເລືອກຂອງປະທານກ່ຽວກັບນາຍົກລັດຖະມົນຕີຄົນໃໝ່ ແລະລັດຖະບານ. ສະພາແຫ່ງຊາດອາດພິຈາລະນາ ແລະດັດແກ້ກົດໝາຍ, ແຕ່ມີພຽງແຕ່ອະນຸກຳມະການປະຈຳຂອງສະພາສາມາດສະເໜີກົດໝາຍໃໝ່. ກົດໝາຍໃຫ້ສິດໃນການຍື່ນສະເໜີຮ່າງກົດໝາຍໃຫ້ແກ່ຄະນະປະຈຳ ແລະໂຄງການຈັດຕັ້ງບໍລິຫານ.

ໃນຈຳນວນສະມາຊິກສະພາແຫ່ງຊາດ 115 ຄົນ, 29 ຄົນເປັນເພດຍິງ ແລະ ມີຍິງສີ່ຄົນໃນໃນຈຳນວນ 55 ສະມາຊິກສູນກາງພັກ, ໜຶ່ງໃນນັ້ນແມ່ນສະມາຊິກຂອງຄະນະກຳມະການປະຈຳຂອງສະພາແຫ່ງຊາດ ຊຶ່ງມີນຳກັນ 7 ຄົນ. ຍັງມີເພດຍິງ1 ຄັນ ໃນຄະນະກຳມະການກົມການເມືອງ ແລະ ຢູ່ສຳນັກງານນາຍຍົກ ເຊິ່ງຍັງເປັນລັດທະມົນຕີ ບໍລິການສັງຄົມ ແລະ ຄຸ້ມຄອງປວງຊົນ. ລັດຖະມົນຕີແຮງງານ ແລະ ສະຫວັດດີການສັງຄົມແມ່ນຜູ້ຍິງ.

ໃນສະພາແຫ່ງຊາດມີລາວສູງ7 ຄົນ (ສະມາຊິກ ຊົນເຜົ່າທີອາໃສຢູ່ຕາມພູສູງ) ແລະລາວເທິງ 19 ຄົນ (ຈາກທີ່ຢູ່ອາໃສທີຢູ່ກາງເນີນພູ). ສ່ວນຫຼວງຫຼາຍຂອງສະມາຊິກສະພາແມ່ນຊົນຊາດຊົນເຜົ່າລາວລຸ່ມ ຊຶ່ງແມ່ນຊົນເຜົ່າທີ່ປະກອບເຂົ້າໃນການນຳຂອງພັກ ແລະລັດຖະບານ. ລັດຖະມົນຕີໃນຄະນະລັດຖະບານໃນຈຳນວນ 28 ຄົນ, 3 ຄົນມາຈາກຊົນເຜົ່າສ່ວນໜ້ອຍ.

**ການສໍ້ລາດບັງຫຼວງ ແລະຄວາມໂປ່ງໃສຂອງລັດຖະບານ**

ມີຄວາມເຂົ້າໃຈຢ່າງກ້ວາງຂວາງໃນໝູ່ມະຫາຊົນວ່າເຈົ້າໜ້າທີ່ໃນຂະແໜງບໍລິຫານ ແລະຕຸລາການແມ່ນສໍ້ລາດບັງຫຼວງ. ຄ່າແຮງງານຂອງເຈົ້າໜ້າທີ່ລັດຖະບານແມ່ນຕໍ່າຫຼາຍ, ແລະເຈົ້າໜ້າທີ່ຫຼາຍໆຄົນເຊັ່ນ ຕໍາຫຼວດມີອໍານາດຢ່າງກ້ວາງຂວາງ ຊຶ່ງເຮັດໃຫ້ເຂົາເຈົ້າສາມາດໝູນໃຊ້ມັນແນວບໍ່ຖືກຕ້ອງໄດ້ຢ່າງງ່າຍດາຍ. ໃນຊວງຕົ້ນປີ ໄດ້ມີລາຍງານວ່າມີການປະຕິບັດ ຕ້ານການສໍ້ລາດບັງຫລວງຕໍ່ພະນັກງານພາສີອາກອນ. ມາດຕະການຂອງ ພປປລ ທີ່ຄວບຄຸມຂໍ້ມູນຂ່າວສານທັງໝົດ ເພື່ອຄໍ້າປະກັນບໍ່ໃຫ້ປະຊາຊົນເຫັນວ່າພັກມີຈຸດອ່ອນ ຈຶ່ງບໍ່ມີເຫດການປະກາດລົງໂທດເຈົ້າໜ້າທີ່ກະທໍາຜິດ ຜູ້ທີ່ເປັນສະມາຊິກພັກໃຫ້ມວນຊົນຮູ້ນໍາ. ບໍ່ມີກົດໝາຍທີ່ອະນຸຍາດໃຫ້ມະຫາຊົນເຂົ້າເຖິງຂໍ້ມູນຂ່າວສານຂອງລັດຖະບານ, ແລະໂດຍທົ່ວໄປລັດຖະບານຍັງຮັກສາຄວາມລັບ ບໍ່ຄ່ອຍແຈ້ງຂໍ້ມູນຂ່າວສານກ່ຽວກັບກິດຈະກໍາພາຍໃນຂອງຕົນ, ໂດຍຖືວ່າຄວາມລັບນັ້ນມີຄວາມຈໍາເປັນສໍາລັບ "ສະຖຽນລະພາບແຫ່ງຊາດ".

**ພາກ 4. ທັດສະນະຂອງລັດຖະບານກ່ຽວກັບການສືບສວນຂອງສາກົນ ແລະອົງການບໍ່ຂຶ້ນກັບລັດຖະບານທີ່ກ່ຽວຂ້ອງກັບການລະເມີດສິດທິມະນຸດ.**

ໃນປະເທດບໍ່ມີການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ແລະກໍບໍ່ມີຂັ້ນຕອນເປັນທາງການ ເພື່ອລົງທະບຽນ. ການຈັດຕັ້ງໃດກໍຕາມທີ່ຢາກສືບສວນ ແລະຕໍານິນະໂຍບາຍດ້ານສິດທິມະນຸດຂອງລັດຖະບານໃຫ້ມວນຊົນຮູ້ນໍາ ຈະຕ້ອງພົບປະບັນຫາຢ່າງໃຫຍ່, ຖ້າຫາກເພິ່ນໄດ້ອະນຸຍາດໃຫ້ມີອົງການນັ້ນສາມາດເຄື່ອນໄຫວ.

ລັດຖະບານພຽງແຕ່ຕອບເປັນຄັ້ງຄາວເປັນລາຍລັກອັກສອນ ເມື່ອມີການສອບຖາມກ່ຽວກັບສະພາບສິດທິມະນຸດໂດຍອົງການສິດທິມະນຸດສາກົນ; ເຖິງຢ່າງໃດກໍຕາມລັດຖະບານສືບຕໍ່ສົນທະນາໃນຫົວຂໍ້ສິດທິມະນຸດກັບສອງລັດຖະບານຕ່າງປະເທດ ແລະສືບຕໍ່ຮັບເອົາການອົບຮົມໃນບັນຫາສົນທິສັນຍາ ສປຊ ກ່ຽວກັບສິດທິມະນຸດທີ່ ຈາກອົງການສາກົນຕ່າງໆທີ່ໄດ້ໃຫ້ທຶນຊ່ວຍເຫຼືອ.

ລັດຖະບານສືບຕໍ່ພົວພັນກັບຄະນະກໍາມະການກາແດງສາກົນ ແລະເຈົ້າໜ້າທີ່ລັດຖະບານ. ລັດຖະບານສືບຕໍ່ແປກົດໝາຍສາກົນດ້ານສິດທິມະນຸດ ໂດຍໄດ້ຮັບການສະໜັບສະໜູນຈາກຄະນະກໍາມະການກາແດງສາກົນ. ນັບແຕ່ໄດ້ປິດຫ້ອງການຂ້າຫຼວງໃຫຍ່ ເພື່ອອົບພະຍົບໃນປີ 2001, ລັດຖະບານບໍ່ໄດ້ອະນຸຍາດໃຫ້ເຈົ້າໜ້າທີ່ຂອງອົງການດັ່ງກ່າວ ເຂົ້າມາຕິດຕາມສະພາບໃນປະເທດອີກ.

ໜ່ວຍງານສິດທິມະນຸດຂອງກົມສົນທິສັນຍາ ແລະກົດໝາຍສາກົນ ກະຊວງການຕ່າງປະເທດ ທີ່ສ້າງຕັ້ງຂຶ້ນໃນປີ 2005 ມີຄວາມຮັບຜິດຊອບສືບສວນ ເມື່ອມີການກ່າວຫາວ່າມີການລະເມີດສິດທິນີ້. ຢ່າງໃດກໍ່ຕາມໃນພາກປະຕິບັດແລ້ວ ໄດ້ສັງເກດເຫັນວ່າຫນວ່ຍງານດັ່ງກ່າວເປັນຫນ່ວຍງານທີ່ຕອບຮັບ ໂດຍມີຫນ້າທີ່ຕອບຈົດຫມາຍຊີ້ແຈງມີຂໍ້ກ່າວຫາວ່າມີການລະເມີດສິດທິມະນຸດ ແລະກໍ່ໄດ້ສະແດງໃຫ້ເຫັນວ່າບໍ່ມີອໍານາດໃນການປະຕິບັດງານ ຫລືຮຽກຮ້ອງໃຫ້ສືບສວນ. ມີບາງຄັ້ງກະຊວງຕ່າງປະເທດ ກໍ່ໄດ້ຕອບຂໍ້ຊັກຖາມຂອງ ສປຊ ກ່ຽວກັບສະພາບສິດທິມະນຸດ.

ລັດຖະບານໄດ້ອະນຸຍາດໃຫ້ອົງການສາກົນ ແລະອົງການບໍ່ສັງກັດລັດໃຫ້ເຂົ້າເຖິງວຽກແຈກຢາຍອາຫານໃຫ້ແກ່ອະດີດກະບົດ ຜູ້ທີ່ໄດ້ຮັບເອົາຂໍ້ສະເໜີຂອງລັດຖະບານໃຫ້ໄປຕັ້ງຖິ່ນຖານໃໝ່.

**ພາກ 5. ການຈໍາແນກ, ການກະທໍາທາລຸນດ້ານສັງຄົມ ແລະການຄ້າມະນຸດ.**

ລັດຖະທຳມະນູນອະນຸຍາດໃຫ້ບຸກຄົນມີສິດເທົ່າທຽມກັນຕໍ່ໜ້າກົດໝາຍ, ໂດຍບໍ່ຈຳແນກເພດ, ຖານະສັງຄົມ, ການສຶກສາ, ຄວາມເຊື່ອຖື, ຫຼືຊົນເຜົ່າ. ໃນປີ 1990 ກົດໝາຍຄອບຄົວໄດ້ລວມເງື່ອນໄຂການປະຕິບັດທີ່ເທົ່າທຽມກັນໂດຍປະສະຈາກສະຖານະທາງສັງຄົມ. ລັດຖະບານຈະຕອບໂຕ້ເມື່ອເຈົ້າໜ້າທີ່ລະດັບສູງຮູ້ເລື່ອງລາວວ່າມີການຈຳແນກຢ່າງແນ່ນອນ ພ້ອມທັງມີຂໍ້ມູນຢ່າງແໜ້ນໜາ, ແຕ່ໃນປະເທດຍັງບໍ່ມີກົນໄກດ້ານກົດໝາຍທີ່ປະຊາຊົນສາມາດຮ້ອງຟ້ອງປະກົດການຈຳແນກບຸກຄົນ ຫຼືການຈັດຕັ້ງຍັງບໍ່ທັນໄດ້ພັດທະນາ ຫຼືປະຊາຊົນທົ່ວໄປຮູ້ດີ.

## ຜູ້ຍິງ

ໄດ້ມີລາຍງານວ່າມີການໃຊ້ຄວາມຮຸນແຮງຕໍ່ເພດຍິງໃນຄອບຄົວ, ແຕ່ບໍ່ປະກົດວ່າເປັນບັນຫາແພ່ລາມ. ບໍ່ມີຫລັກຖານວ່າມີການປະຕິບັດໃນກໍລະນີທີ່ເປັນການທຳຮ້າຍພາຍໃນຄອບຄົວ ຂອງຕຳຫລວດ ຫລືການດຳເນີນຄະດີ. ກະທຳທາລຸນລະຫວ່າງຄູ່ຜົວເມຍແມ່ນຜິດກົດໝາຍ. ຕາມລາຍງານການຂົ່ມຂືນແມ່ນບໍ່ຄ່ອຍມີ. ໃນກໍລະນີທີ່ມີການຂົ່ມຂືນຊຳເລົາ, ຄະດີຈະຖືກນຳຂຶ້ນສານ ແລະປົກກະຕິຈຳເລີຍຈະໄດ້ຖືກຕັດສິນວ່າຜິດ ແລະຖືກຈຳຄຸກເຖິງສາມປີຈົນຮອດປະຫານຊີວິດ. ການຂົ່ມຂືນຄູ່ແຕ່ງງານຕົນເອງແມ່ນບໍ່ຜິດກົດໝາຍ. ການລົງໂທດໃນການກະທຳຮ້າຍພາຍໃນຄອບຄົວອາດຈະຖືກທັງປັບໄໝ ແລະ ຈຳຄຸກ.

ການຄ້າປະເວນີແມ່ນຜິດກົດໝາຍ, ສາມາດຖືກຕັດສິນຈຳຄຸກແຕ່ສາມເດືອນເຖິງໜຶ່ງປີ. ແຕ່ໃນພາກປະຕິບັດແລ້ວກົດໝາຍຕ້ານການຄ້າປະເວນີແມ່ນບໍ່ຖືກບັງຄັບໃຊ້ ແລະມີລາຍງານວ່າມີບາງກໍລະນີພະນັກງານລັດທະການກໍ່ມີສ່ວນຮ່ວມໃນການຄ້າປະເພດນີ້. ການຄ້າແມ່ຍິງ ແລະເດັກຍິງເພື່ອເປັນໂສເພນີ ໄປທັງປະເທດໄທ –ແລະ ຕ່າງປະເທດອື່ນໆແມ່ນບັນຫາໜຶ່ງ (ເບິ່ງພາກ 5- ການຄ້າມະນຸດ). ການມີເພດສຳພັນກັບຕ່າງຊາດແມ່ນຖືກຫ້າມ ໂດຍພາຍໄຕ້ສິ່ງທີ່ລັດທະບານເອີ້ນວ່າ “ກົດໝາຍພິເສດ“ ແລະບາງຄັ້ງຄາວ ເຈົ້າໜ້າທີ່ຕຳຫລວດກໍ່ຈັບກຸມທັງພົນລະເມືອງ ແລະຊາວຕ່າງຊາດທີ່ມີເພດສຳພັນໂດຍບໍ່ໄດ້ແຕ່ງງານ.

ໜ້ອຍໜັກໜ້ອຍໜາຈຶ່ງມີການລາຍງານເລື່ອງການລວນລາມທາງເພດ, ດັ່ງນັ້ນບັນຫາດັ່ງກ່າວຮ້າຍແຮງເທົ່າໃດຈຶ່ງເປັນການຍາກຈະຮູ້ໄດ້; ເຖິງແມ່ນວ່າ ການລວນລາມທາງເພດນີ້ບໍ່ແມ່ນເລື່ອງຜິດກົດໝາຍ, “ການກະທຳທາງເພດທີ່ບໍ່ສົມຄວນ” ຕໍ່ຄົນອື່ນແມ່ນຜິດກົດໝາຍ ແລະສາມາດຖືກຈຳຄຸກລະຫວ່າງຫົກເດືອນຫາສາມປີ.

ກົດໝາຍຮັບຮູ້ສິດສະເໝີພາບຂອງຜູ້ຍິງ ແລະສະຫະພັນແມ່ຍິງລາວເຄື່ອນໄຫວທົ່ວປະເທດ ເພື່ອສົ່ງເສີມຖານະຂອງແມ່ຍິງໃນສັງຄົມ. ກົດໝາຍຄອບຄົວຫ້າມບໍ່ໃຫ້ມີການຈຳແນກທາງກົດໝາຍໃນເລື່ອງແຕ່ງງານ ແລະການຮັບມູນມໍລະດົກ. ການຈຳແນກເພດຍິງບໍ່ເປັນບັນຫາກວມລວມທົ່ວໄປໃນສັງຄົມ, ແຕ່ເປັນສິ່ງທີ່ແຕກຕ່າງກັນໄປແລ້ວແຕ່ປະເພນີ, ວັດທະນາທຳ ຊຶ່ງຍັງຄົງສືບຕໍ່, ໂດຍສະເພາະບ່ອນທີ່ເຫັນວ່າໜັກໜ່ວງກວ່າແມ່ນຢູ່ໃນຊຸມຊົນພູດອຍບາງກຸ່ມ. ແມ່ຍິງຫຼາຍຄົນມີຕຳແໜ່ງສຳຄັນໃນວຽກງານລັດຖະການ ແລະທຸລະກິດເອກະຊົນ, ແລະໃນເຂດຕົວເມືອງໃຫຍ່, ລາຍຮັບຂອງເພດຍິງມັກຈະຫຼາຍກວ່າຂອງຜູ້ຊາຍ.

ໃນປີທີເກັບຂໍ້ມູນເຮັດລາຍງານ ລັດທະມົນຕີໄດ້ອອກກົດໝາຍ 2004 ສຳລັບແມ່ຍິງປົກປ້ອງຜູ້ຍິງຢ່າງເຕັມສວນ. ກົດໝາຍໃດ້ສ້າງບົດລົງໂທດການກໍ່ອາສະຍາກຳຕໍ່ເພດຍິງ ຊຶ່ງໜັກໜ່ວງກວ່າຂໍ້ຄວາມຊຽນລົງໃນກົດໝາຍອາຍາ. ກົດໝາຍໄດ້ກຳນົດວ່າການຄ້າມະນຸດ ແລະຄວາມຮຸນແຮງໃຊ້ກັບແມ່ຍິງ ແລະເດັກນ້ອຍນັ້ນແມ່ນອາດສະຍາກຳ ແລະໃຫ້ການປົກປ້ອງຜູ້ຮັບເຄາະກຳໂດຍອີງກອນພາຍໃນປະເທດ ແລະສາກົນ.

**ເດັກນ້ອຍ**

ເຖິງແມ່ນວ່າລັດຖະບານໄດ້ຖືວ່າວຽກການສຶກສາ ແລະເບິ່ງແຍງສຸຂະພາບເດັກເປັນບູລິມະສິດໃນການວາງແຜນເສດຖະກິດກໍຕາມ, ການປະກອບທຶນເພື່ອຕອບສະໜອງຄວາມຕ້ອງການດ້ານສາທາລະນະສຸກພື້ນຖານ ແລະການສຶກສານັ້ນແມ່ນຍັງຂາດເຂີນ, ແລະປະເທດຍັງມີອັດຕາການຕາຍຂອງເດັກແດງ ແລະເດັກນ້ອຍສູງຫຼາຍ. ການສຶກສາຈົນຮອດ ປ 5 ແມ່ນບໍ່ຕ້ອງເສຍຄ່າ ແລະເປັນພາກບັງຄັບ. ເຖິງຢ່າງໃດກໍຕາມຍ້ອນຄ່າປຶ້ມ ແລະວັດສະດຸການຮຽນແພງ ແລະໂດຍທົ່ວໄປມີການຂາດເຂີນຄູອາຈານໃນເຂດຊົນນະບົດເລີຍບໍ່ເຮັດໃຫ້ເດັກນ້ອຍສາມາດໄປໂຮງຮຽນ. ອີງຕາມສະຖິຕິຂອງລັດຖະບານ, 67 ສ່ວນຮອ້ຍຂອງເດັກເກນອາຍຸເຂົ້າໂຮງຮຽນປະຖົມ, 81 ສ່ວນຮອ້ຍຂອງເດັກອາຍຸເຂົ້າຮຽນໂຮງຮຽນມັດທະຍົມຕົ້ນ, ແລະປະມານ 41 ສ່ວນຮອ້ຍ ຂອງເດັກເກນອາຍຸເຂົ້າອຸດົມສຶກສາໄດ້ຈົດຊື່ເຂົ້າຮຽນ; ແຕ່ອີງຕາມ UNDP ສະເລ່ຍປະມານ 40 ສ່ວນຮ້ອຍຂອງຈໍານວນເດັກນ້ອຍແມ່ນບໍ່ເຄີຍໄດ້ເຂົ້າໂຮງຮຽນເລີຍ ແລະມີພຽງແຕ່ 10 ສ່ວນຮອ້ຍ ທີ່ໄດ້ເຂົ້າມັດທະຍົມສຶກສາ.

ໂອກາດທາງການສຶກສາລະຫວ່າງເດັກຊາຍ ແລະຍິງ ແມ່ນແຕກຕ່າງກັນຫຼາຍ. ໃນຂະນະທີ່ຈໍານວນທີ່ບໍ່ແນ່ນອນ, ແຕ່ໂດຍທົ່ວໄປ ການຮູ້ໜັງສືໃນໝູ່ເດັກຍິງແມ່ນຕໍ່າກວ່າເດັກຊາຍ 10 ສ່ວນຮອ້ຍ. ຢ່າງໃດກໍ່ດີ ອີງຕາມນະໂຍບາຍຂອງລັດທະບານຕົວເລກໃນການຮັບເຂົ້າຮຽນໃນມະຫາວິທະຍາໄລແຫ່ງຊາດແມ່ນມີຈໍານວນເທົ່າກັນ.

ກົດໝາຍຫ້າມໃຊ້ຄວາມຮຸນແຮງກັບເດັກນ້ອຍ ແລະການລະເມີດໃນເລື່ອງນີ້ ຈະຖືກທໍາໂທດຢ່າງໜັກ. ມີລາຍງານວ່າການກະທໍາທາລຸນຕໍ່ເດັກນ້ອຍດ້ານຮ່າງກາຍແມ່ນບໍ່ຄ່ອຍມີ.

ການຄ້າເດັກຍິງເພື່ອການຄ້າປະເວນີ ແລະເພື່ອເປັນແຮງງານແບບບັງຄັບແມ່ນບັນຫາອັນໜຶ່ງ (ເບິ່ງພາກ 5. ກ່ຽວກັບການຄ້າມະນຸດ). ຮູບແບບອື່ນໆຂອງການໃຊ້ແຮງງານແມ່ນການເຮັດວຽກໃນໄຮ່ນາຂອງຄອບຄົວເດັກເອງ ແລະໃນໂຮງງານ (ໃຫ້ເບິ່ງພາກ 6. ງ).

**ການຄ້າມະນຸດ**

ກົດໝາຍຫ້າມການລັກພາຕົວ ແລະການຄ້າມະນຸດກໍຄືການກັກຄົນໃດໜຶ່ງໄວ້ເປັນເວລາຍາວນານ ໂດຍທີ່ເຂົາບໍ່ຕ້ອງການ, ການລໍ້ລວງຄົນເພື່ອຈຸດປະສົງການຄ້າປະເວນີ ແລະເປັນໂສເພນີ; ເຖິງຢ່າງໃດກໍຕາມການຄ້າມະນຸດ, ສະເພາະຢ່າງຍິ່ງແມ່ຍິງ ແລະເດັກນ້ອຍແມ່ນບັນຫາ. ກົດຫມາຍ ປີ 2004ກ່ຽວກັບແມ່ຍິງ ຊຶ່ງມີຂໍ້ຄວາມປ້ອງກັນແມ່ຍິງ ແລະເດັກບໍ່ໃຫ້ເປັນເຍື່ອການຄ້າມະນຸດ ແລະຄວາມຮຸນແຮງໃນຄອບຄົວ, ພ້ອມທັງໄດ້ກໍານົດໂທດຢ່າງໜັກສໍາລັບພວກຄ້າມະນຸດ (ເບິ່ງພາກ 5, ແມ່ຍິງ).

ປະເທດລາວແມ່ນອໍາດັບຕົ້ນຂອງປະເທດທີ່ເປັນຕົ້ນກໍາເນີດຂອງການຄ້າມະນຸດ, ເຊິ່ງລວມມີການການຄ້າຜູ້ຍິງຕັ້ງແຕ່ອາຍຸ 13-16ປີ  ແລະ ເປັນປະເທດທີ່ເປັນທາງຜ່ານທີ່ບໍ່ກວ້າງຂວາງປານໃດ. ປະເທດປາຍທາງແມ່ນປະເທດໄທ ເກືອບວ່າບໍ່ມີການຄວບຄຸມຊາຍແດນແບບມີປະສິດຕິຜົນ ແລະກໍບໍ່ມີສະຖິຕິຕົວເລກທີ່ເຊື່ອຖືໄດ້ກ່ຽວກັບຂອ່ງວາງ ແລະຄວາມຮ້າຍແຮງຂອງບັນຫາຈົນກວ່າຫວ່າງໝໍ່ໆນີ້ ຊຶ່ງການສຶກສາໃນລະຫວ່າງປີ 2004 ຈົນເຖິງຊວງທາຍປີຂອງການເກັບກໍາລາຍງານນີ້ໄດ້ຊີ້ໃຫ້ເຫັນເຖິງຈໍານວນຄົນຫຼັ່ງໄຫຼອອກຈາກປະເທດ ເປັນຕົ້ນຄົນໜຸ່ມຈໍານວນຫຼາຍອາຍຸລະຫວ່າງ 15-30 ປີ ໄດ້ຫຼັ່ງໄຫຼອອກໄປເຮັດວຽກ, ຫຼາຍກວ່າຈໍານວນທີ່ເຄີຍຄາດຄະເນໄວ້ກ່ອນ. ປະມານ 7 ສ່ວນຮອ້ຍຂອງພົນລະເມືອງທັງໝົດໃນ 3 ແຂວງ

ພາກໃຕ້ໄດ້ເຄື່ອນ ຍ້າຍໄປເຮັດວຽກເປັນລະດູການ ຫຼືຕະຫຼອດໄປ, ໃນນັ້ນປະມານ 55 ສ່ວນຮ້ອຍແມ່ນເພດຍິງ. ເຈົ້າໜ້າທີ່ໄທໄດ້ຄາດຄະເນວ່າຢ່າງໜ້ອຍກຳມະກອນລາວທີ່ເຮັດວຽກຢູ່ປະເທດໄທມີເຖິງ 180,000ຄົນ, ມີຄົນຈຳນວນໜຶ່ງທີ່ຕົວເລກແນ່ນອນບໍ່ຮູ້ໄດ້ໃນການເປັນເຫຍື່ອການຄ້າມະນຸດໃນຮູບການໃດຮູບການໜຶ່ງ. ຕາມການສຶກສາເຫັນໄດ້ວ່າມັນບໍ່ແມ່ນຜູ້ທີ່ທຸກຍາກທີ່ສຸດ ທີ່ເດີນທາງອອກໄປຫາເຮັດວຽກ, ແຕ່ກົງກັນຂ້າມມັນແມ່ນຊາວໄຮ່ນາທີ່ມີການສຶກສາດີກວ່າ ແລະກໍຮູ້ວິຖີຊີວິດໃນປະເທດໄທຊ່ຳໃດຊ່ຳໜຶ່ງ. ອີງຕາມການສຶກສາໜຶ່ງ, ມີແມ່ຍິງຈຳນວນໜ້ອຍໜຶ່ງ ທີ່ໄດ້ຖືກນຳໄປຂາຍທີ່ປະເທດຈີນເພື່ອເອົາໄປເປັນເມຍ.

ສ່ວນຫຼວງຫຼາຍຂອງເຫຍື່ອການຄ້າມະນຸດແມ່ນລາວລຸ່ມ, ເຖິງແມ່ນວ່າຈຳນວນໜ້ອຍໜຶ່ງແມ່ນແມ່ຍິງຊົນເຜົ່າຈາກພູດອຍໄດ້ຕົກເປັນເຫຍື່ອຂອງຜູ້ຄ້າ ແຕ່ຕົວເລກຂອງຜູ້ຕົກເປັນເຫຍື່ອທີ່ເປັນກຸ່ມຊົນເຜົ່າສ່ວນໜ້ອຍມີ ເພີ່ມຂຶ້ນ . ກຸ່ມຊົນເຜົ່າສ່ວນໜ້ອຍແມ່ນຕົກຢູ່ໃນຄວາມສ່ຽງພິເສດ ຍ້ອນວ່າເຂົາເຈົ້າບໍ່ຮູ້ວັດທະນາທຳ ຫຼືພາສາໄທ ຊຶ່ງໃກ້ຄຽງກັບພາສາທີ່ກຳມະກອນລາວສາມາດນຳໃຊ້ ເພື່ອປົກປ້ອງຕົນເອງຈາກສະພາບຂູດຮີດຕ່າງໆ. ມີເຫຍື່ອການຄ້າມະນຸດຈຳນວນໜ້ອຍໜຶ່ງທີ່ເປັນຊາວຕ່າງຊາດ ໂດຍສະເພາະແມ່ນຄົນພະມ້າ ແລະຫວຽດ.

ຜູ້ທີ່ມາຂົນຂວາຍແຮງງານໃນປະເທດຫຼາຍຄົນແມ່ນຄົນທ້ອງຖິ່ນເອງ ທີ່ມີປະສົບການຂ້າມໄປມາລະຫວ່າງຊາຍແດນ ແລະກໍເປັນຄົນທີ່ເຫຍື່ອຮູ້ຈັກ. ສ່ວນຫຼວງຫຼາຍພວກເຂົາເລົ່ານີ້ບໍ່ມີສ່ວນພົວພັນກັບກຸ່ມອາດສະຍາກຳຂ້າມຊາດ, ການຄ້າຂາຍຂູດຮີດທາງເພດ ຫຼືການເອົາໄປເປັນຂ້າທາດໄປຮັບໃຊ້ແບບຂ້າທາດ, ແຕ່ການຮັບໃຊ້ຂອງພວກເຂົາເຈົ້າປົກກະຕິກໍຈະຢຸດຕິລົງ ໃນເມື່ອມີການຮ້ອງຟ້ອງໄປຮອດປະເທດໄທ, ບ່ອນທີ່ການຈັດຕັ້ງການຄ້າມະນຸດດຳເນີນໄປແບບມີການຈັດຕັ້ງດີກວ່ານັ້ນ.

ມີລາຍງານພຽງເລັກນ້ອຍທີ່ເວົ້າເຖິງການພົວພັນຂອງເຈົ້າໜ້າທີ່ໃນການຄ້າມະນຸດ, ຕາມການບອກເລົ່າຊີ້ໃຫ້ເຫັນວ່າທາງການທ້ອງຖິ່ນຮູ້ກ່ຽວກັບກິດຈະກຳການຄ້າມະນຸດ, ແລະບາງຄົນກໍອາດໄດ້ຮັບຜົນປະໂຫຍດນຳ.

ກ່ອນທີ່ຈະມີມາດຕາຕ້ານການຄ້າມະນຸມໃນກົດໝາຍເພື່ອປົກປອ້ງເພດຍິງ ໃນປີ 2004 ອອກມາມີຜົນນຳໃຊ້, ລັດຖະບານໄດ້ຕັດສິນລົງໂທດພຽງແຕ່ລຸກນ້ຂອງພວກຄ້າມະນຸດໂດຍອີງຕາມຂໍ້ມູນທີ່ມີຢູ່. ພວກເຂົາທັງຫມົດໄດ້ຖືກ ຕັດສິນພາຍໄຕ້ກໍລະນີອາສະຍາກຳອື່ນໆ. ກົດຫມາຍເພື່ອປົກປອ້ງເພດຍິງໄດ້ຖືກບັງຄັບໃຊ້ ໃນເດືອນ ກຸມພາ ເມື່ອນາຍົກລັດທະມົນຕີ ໄດ້ອອກກົດລະບຽບໃຫ້ລົງມືປະຕິບັດ. ອີງຕາມລາຍງານຂອງຫນ່ວຍງານຕ້ານ ການ ຄ້າມະນຸດລາວ ເຊິ່ງເປັນຫນ່ວຍງານລິເລີ່ມໃນການປະຕິບັດກົດຫມາຍທີ່ຮັບຜິດຊອບ ການສືບສວນກໍລະນີການ ຄ້າມະນຸດ ລາຍງານວ່າ ລັດຖະບານໄດ້ຕັດສິນນັກໂທດ ຫ້າຄົນໃນຂໍ້ຫາຄ້າມະນຸດ ແລະ ກ່ຽວຂ້ອງ, ແລະ ແປດກໍລະນີ ກໍລະນີ ຍັງລໍຖ້າສານຕັດສິນ. ສະເລຍໂທດ ທີ່ຫ້າຄົນໄດ້ຮັບແມ່ນ ຫົກປີເຄິ່ງ ພອ້ມທັງປັບໄຫມເປັນເງີນຢູ່ລະຫວ່າງ 500 ໂດລາ ສະຫະລັດ (5 ລ້ານກີບ) ເຖິງ 3500 ໂດລາ ສະຫະລັດ (35 ລ້ານກີບ) ມີພຽງຫນຶ່ງຄົນທີ່ຖືກຈັບໃນ ຊວງເດືອນພະຈິກ ແລະ ຖືກຕັ້ງຂໍ້ຫາພາຍໄຕ້ກົດຫມາຍ ທີ່ກຽວກັບການຄ້າມະນຸດ. ເຈົ້າຫນ້າທີຈາກ ຫນ່ວຍງານ ຕ້ານການຄ້າມະນຸດລາວໄດ້ຮ່ວມສືບສວນກັບ ເພື່ອນຮວ່ມງານທີ່ເປັນເຈົ້າຫນ້າທີໄທຈາກ ພາກເຫນືອຂອງ ປະເທດໄທ. ລັດຖະບານໄດ້ເພີ່ມທະວີໃນການຕ້ານຮູບການຊົ່ວຊ້າທີ່ສຸດຂອງການຄ້າ ແລະການຂູດຮີດບຸກຄົນທີ່ຍັງບໍ່ເຖິງກະສຽນຕົ້ນຕໍ ໂດຍຜ່ານການຮ່ວມມືກັບອົງການບໍ່ສັງກັດລັດສາກົນ ທີ່ເຮັດວຽກກ່ຽວກັບການຄ້າມະນຸດ. ໃນຊວງເດືອນສິງຫາ, ລັດຖະບານ ໄດ້ຮັບເປັນເຈົ້າພາບກອງປະຊຸມ ການຮ່ວມມືລັດທະມົນຕີ ໃນລ່ອງ

ແມ່ນ້ຳຂອງເພື່ອຕ້ານການຄ້າມະນຸດ ແລະກໍ່ຍັງຈັດກອງປະຊຸມສົນທະນາບັນຫາການຄ້າມະນຸດລະດັບຊາດ.

ກະຊວງແຮງງານ ແລະສະຫວັດດີການສັງຄົມມີໜ່ວຍງານທີ່ສຸມໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການສະເພາະສຳລັບເດັກນ້ອຍ, ລວມທັງປົກປ້ອງ ແລະປ້ອງກັນຜູ້ຕົກເປັນເຫຍື່ອການຄ້າມະນຸດ. ກະຊວງດັ່ງກ່າວຄຸ້ມຄອງດູແລສູນຂະໜາດນ້ອຍ ເພື່ອຊ່ວຍເຫຼືອເຫຍື່ອການຄ້າມະນຸດທີ່ກັບຄືນປະເທດ, ແຕ່ປະສິດທິຜົນຂອງໜ່ວຍງານນີ້ເຫັນວ່າຈຳກັດ ຍ້ອນມີງົບປະມານໜ້ອຍ ແລະການຊ່ວຍເຫຼືອສາກົນບໍ່ພຽງພໍພ້ອມທັງຂາດພະນັກງານທີ່ໄດ້ຮັບການອົບຮົມ.

ສູນດັ່ງກ່າວຍັງຮັບເບິ່ງແຍງຜູ້ປະສົບເຄາະຮ້າຍຈາກບັນຫາຄວາມຮູນແຮງຄອບຄົວ. ກະຊວງແຮງງານ ແລະສະຫວັດດີການສັງຄົມສົມທົບກັບສະຫະພັນແມ່ຍິງລາວ ໄດ້ດຳເນີນການສຶກສາແບບທົດລອງກ່ຽວກັບການໃຫ້ຂໍ້ມູນຂ່າວສານຕ້ານກັບການຄ້າມະນຸດ ແລະໄດ້ເລີ່ມປະຕິບັດກິດຈະກຳຮ່ວມກັນກັບອົງການບໍ່ສັງກັດລັດ ໃນການດຳເນີນກິດຈະກຳຢ່າງຕັ້ງໜ້າ. ການຂາດທຶນຮອນໄດ້ຈຳກັດການປະກອບສ່ວນຂອງລັດຖະບານ, ແຕ່ກະຊວງກໍໄດ້ສະໜອງພະນັກງານ ແລະສະຖານທີ່ໃຫ້ແກ່ອົງການບໍ່ສັງກັດລັດເພື່ອດຳເນີນການຕ້ານການຄ້າມະນຸດ.

ໃນຊວງເດືອນຕຸລາ ອົງການບໍ່ສັງກັດລັດຖະບານທີ່ໃຫ້ການຊວ່ຍເຫລືອ ຜູ້ຍິງທີ່ຕົກຢູ່ໃນພາວະອັນຕະລາຍ ແລະ ເຈັບປວດ ໄດ້ສ້າງສູນສຳລັບຜູ້ປະສົບໄພ ຢູ່ກຳແພງນະຄອນ ເພື່ອຈຸດປະສົງໃຫ້ການຊວຍເຫລືອຜູ້ປະສົບເຄາະ ຮ້າຍຈາກການຄ້າມະນຸດ ແລະ ຫາຜົນປະໂຫຍດທາງການຄ້າທາງເພດ ໂດຍສະເພາະແມ່ນຜູ່ທີ່ຕອ້ງການຄຳ ເປີກສາໃນໄລຍະຍາວ.

ສະຫະພັນແມ່ຍິງລາວ ແລະອົງການຊາວໜຸ່ມໄດ້ມີແຜນງານສຶກສາທີ່ໄດ້ອອກແບບມາ ເພື່ອສຶກສາແມ່ຍິງ, ເດັກຍິງ ແລະຍິງໜຸ່ມ ກ່ຽວກັບແຜນຍົວະເອົາຄົນໄປເຮັດວຽກຢູ່ໂຮງໂສເພນີ ແລະບ່ອນເຮັດວຽກແບບກັກຂັງໃນບັນດາປະເທດເພື່ອນບ້ານຂອງລາວ ແລະແຫ່ງອື່ນໆ. ອົງການທັງສອງນີ້ສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບທີ່ສຸດໃນການສະໜອງຂໍ້ມູນຂ່າວສານໃຫ້ແກ່ພື້ນຖານຊຸມຊົນ.

ໃນອະດີດເຫຍື່ອການຄ້າມະນຸດເຄີຍຖືກລົງໂທດ ຍ້ອນບໍ່ມີເອກະສານອັນຖືກຕ້ອງ ຫຼືຍ້ອນໄດ້ຂ້າມຟາກໂດຍຜິດກົດໝາຍ. ໃນເດືອນກໍລະກົດ ລັດຖະບານໄດ້ອອກຄຳສັ່ງ ສະບັບ 2004 ເພື່ອໃຫ້ຍຸດຕິການປັບໄໝຜູ້ທີ່ກັບຄືນມາ ແລ້ວຍັງຈັດການບຳລຸງໃຫ້ເຈົ້າໜ້າທີ່ກວດຄົນເຂົ້າເມືອງລະດັບທອ້ງຖິ່ນໃນບາງຂົງເຂດ.  ໂດຍໄດ້ຮັບການສະໜັບສະໜູນຈາກອົງການ UNICEF, ຄະນະກຳມາທິການແຫ່ງຊາດເພື່ອແມ່ ແລະເດັກໄດ້ສືບຕໍ່ດຳເນີນແຜນງານໃຫ້ການສະໜັບສະໜູນ ແກ່ຜູ້ຕົກເປັນເຫຍື່ອການຄ້າມະນຸດຢ່າງຫ້າວຫັນ.

**ຄົນພິການ**

ລັດຖະທຳມະນູນໄດ້ເວົ້າເຖິງການປົກປ້ອງພົນລະເຮືອນຕ້ານການຈຳແນກ, ແຕ່ໃນນັ້ນບໍ່ໄດ້ເວົ້າຢ່າງສະເພາະເຈາະຈົງກ່ຽວກັບການປົກປ້ອງບຸກຄົນທີ່ມີສະພາບພິການ. ລະບຽບການຊຶ່ງໄດ້ຮັບຮອງເອົາໂດຍກະຊວງແຮງງານ ແລະສະຫວັດດີການສັງຄົມ ແລະກຳມາທິການແຫ່ງຊາດລາວ ເພື່ອຄົນພິການໃຫ້ການປົກປ້ອງຄົນປະເພດນີ້ບໍ່ໃຫ້ມີການຈຳແນກ; ເຖິງຢ່າງໃດກໍຕາມລະບຽບການຕ່າງໆນັ້ນຍັງຂາດຄວາມສັກສິດທາງດ້ານກົດໝາຍ. ກົດໝາຍບໍ່ໄດ້ກຳນົດການເຂົ້າເຖິງສະຖານທີ່ ຫຼືບ່ອນບໍລິການຂອງລັດຖະບານສຳລັບ

ຄົນທີ່ມີຄວາມພິການ, ແຕ່ກະຊວງແຮງງານ ແລະສະຫວັດດີການສັງຄົມໄດ້ອອກລະບຽບກ່ຽວກັບການເຂົ້າເຖິງຕຶກ ແລະສະຖານທີ່ສາທາລະນະ ແລະທາງຂຶ້ນບ່ອນຍ່າງຕາມທາງຍ່າງຂ້າງຖະໜົນໃນວຽງຈັນ.

**ບັນຫາສັນຊາດ/ຜິວພັນຊົນເຜົ່າສ່ວນໜ້ອຍ:**

ກົດໝາຍໃຫ້ສິດສະເໝີພາບຕໍ່ປະຊາຊົນຂອງຊົນເຜົ່າສ່ວນໜ້ອຍ, ແຕ່ກໍບໍ່ມີການຈຳແນກທາງດ້ານກົດໝາຍຕໍ່ເຂົາເຈົ້າ; ເຖິງຢ່າງໃດກໍຕາມຍັງຄົງມີການຈຳແນກໃນສັງຄົມຫຼົງເຫຼືອຢູ່. ນອກຈາກນັ້ນແລ້ວຍັງມີຜູ້ວິພາກວິຈານແຜນງານຈັດຕັ້ງຖິ່ນຖານໃໝ່ຂອງລັດຖະບານ ເພື່ອແນໃສ່ຢຸດຕິການຖາງປ່າເຮັດໄຮ່ ແລະການປູກຝິ່ນໂດຍໄດ້ເວົ້າວ່າມັນມີຜົນກະທົບໃນທາງລົບຕໍ່ຫຼາຍກຸ່ມຊົນເຜົ່າສ່ວນໜ້ອຍ, ສະເພາະຢ່າງຍິ່ງໃນພາກເໜືອ. ແຜນງານນີ້ຮຽກຮ້ອງໃຫ້ຜູ້ຖືກຍົກຍ້າຍຕ້ອງເຮັດນາປູກເຂົ້າ ແລະອາໃສຢູ່ຊຸມຊົນໃຫຍ່, ໂດຍບໍ່ໄດ້ຄຳນຶງເຖິງການດຳລົງຊີວິດແບບປະເພນີ ແລະໂຄງປະກອບຊຸມຊົນຂອງເຂົາເຈົ້າ. ແຜນງານນີ້ໄດ້ເຮັດໃຫ້ເປັນຈຸດອະພິປາຍກັນຢ່າງໜັກໃນຊຸມຜູ້ສັງເກດການສາກົນ ທີ່ໄດ້ຍົກບັນຫາຂຶ້ນມາວ່າ ຜົນປະໂຫຍດຂອງການຈັດສັນບ່ອນຢູ່ອາໃສ ໂດຍລັດຖະບານເພື່ອໃຫ້ສາມາດເຂົ້າເຖິງຕະຫຼາດ, ໂຮງຮຽນ ແລະສະຖານທີ່ປິ່ນປົວສຳລັບຜູ້ຖືກຍົກຍ້າຍວ່າ ທັງໝົດນັ້ນຄຸ້ມຄ່າກັບຜົນກະທົບທາງລົບຕໍ່ຮີດຄອງປະເພນີຂອງເຂົາເຈົ້າຫຼືບໍ່ (ເບິ່ງພາກ 1. ສ)

ລັດຖະບານສົ່ງເສີມໃຫ້ມີການຮັກສາຮີດຄອງປະເພນີຂອງຊົນເຜົ່າສ່ວນໜ້ອຍ; ເຖິງຢ່າງໃດກໍຕາມ ພ້ອມສະພາບຄວາມຫ່າງໄກ ແລະການໄປມາຫາສູ່ຍາກຊຸມຊົນເຜົ່າສ່ວນໜ້ອຍບໍ່ຄ່ອຍມີປາກສຽງປານໃດ ໃນການຕັດສິນໃຈຂອງລັດຖະບານທີ່ກະທົບກະເທືອນດິນດອນຕອນຫຍ້າ ແລະຊັບພະຍາກອນທຳມະຊາດຂອງເຂົາເຈົ້າ.

ຊາວມົ້ງແມ່ນໜຶ່ງໃນຊົນເຜົ່າສ່ວນໜ້ອຍທີ່ມີຈຳນວນຫຼາຍ ແລະສຳຄັນທີ່ສຸດທີ່ອາໃສຢູ່ພູດອຍ. ຢູ່ໃນຄະນະລັດຖະບານ ແລະພັກ ປປລ ຍັງມີເຈົ້າໜ້າທີ່ອາວຸໂສສຳຄັນຈາກເຜົ່າມົ້ງຈຳນວນໜຶ່ງ, ລວມໃນນັ້ນຢ່າງໜ້ອຍມີ 5 ຄົນເປັນສະມາຊິກສູນກາງພັກ ປປລ. ເຖິງຢ່າງໃດກໍຕາມໃນສັງຄົມກໍຍັງມີການຈຳແນກຕໍ່ຊົນເຜົ່າມົ້ງ (ກໍຄືຊົນເຜົ່າສ່ວນໜ້ອຍອື່ນໆ), ມີມົ້ງບາງຄົນເຊື່ອວ່າກຸ່ມຊົນເຜົ່າຂອງຕົນເອງ ບໍ່ສາມາດຢູ່ຮ່ວມກັນກັບປະຊາຊົນເຜົ່າລາວລຸ່ມໄດ້. ຄວາມເຊື່ອຖືນີ້ໄດ້ເຮັດໃຫ້ມີແນວຄວາມຄິດຢາກແບ່ງແຍກ ແລະຮຽກຮ້ອງເອົາດິນແດນຄືນໃນລະຫວ່າງຊົນເຜົ່າມົ້ງບາງກຸ່ມ. ໃນປີມໍ່ໆມານີ້ລັດຖະບານໄດ້ສຸມບາງໂຄງການຊ່ວຍເຫຼືອແບບຈຳກັດໃຫ້ແກ່ເຂດມົ້ງໂດຍສະເພາະເພື່ອແກ້ໄຂຄວາມແຕກໂຕນກັນໃນລາຍຮັບເກີດຂຶ້ນລະຫວ່າງຊົນເຜົ່າ ແລະຊົງເຂດຕ່າງໆໃນປະເທດ. ລັດຖະບານຍັງຈັດລາຍການວິທະຍຸເປັນພາສາມົ້ງ ແລະຂະມຸ ແລະກໍມີລາຍງານວ່າ ໄດ້ປະຕິເສດຂໍ້ສະເຫນີຂອງເຜົ່າ ຂະມຸທີ່ຕ້ອງການໃຊ້ອັກສອນລາວເປັນພາສາທາງການຂອງເຂົາເຈົ້າ, ເພາະພາສາຂະມຸບໍ່ມີລະບົບການຂຽນຂອງ ໂຕເອງ.

ບໍ່ມີລາຍງານທີ່ມີຫລັງຖານວ່າໄດ້ມີການໂຈມຕີຂອງພວກກະບົດເຜົ່າມົ້ງໃນຊ່ວງປີເກັບກຳຂໍ້ມູນເຮັດລາຍງານ. ເຖິງປານນັ້ນການນຳລັດຖະບານກໍ່ຍັງຄົງສົງໃສຕໍ່ຊາວມົ້ງ ທີ່ປາດທະຫນາຢາກຢູ່ຢ່າງສັນຕິ ເຊິ່ງເປັນເຫດໃຫ້ມີການ ເພີ່ມທະວີກອງກຳລັງຮັກສາຄວາມສະຫງົບເພື່ອລົບກຸ່ມກະບົດທີ່ຢູ່ກະແຈກກະຈາຍເປັນໝວດນ້ອຍໆ ໃນເຂດປ່າດົງເລິກຫ່າງໄກສອກຫຼີກກູ່ມກະບົດນ້ອຍໆ ແລະ ຄອບຄົວຂອງເຂົາກະແຈກກະຈາຍ (ເບິ່ງ ພາກ 1. ກ)

ໄດ້ມີລາຍງານວ່າໃນເດືອນ ຕຸລາທີ່ແຂວງວຽງຈັນ ໄດ້ມີພວກກຸ່ມເຜົ່າມົ້ງທີ່ກະແຈກກະຈາຍ ເຊິ່ງເຊື່ອມໂຍງກັບພວກກະບົດ ແລະມັກຈະປະກອບມີ 1 - 2 ຄອບຄົວ ຫາກແຕ່ມີ 350 ຄົນໃນກຸມອອກມາຍອມ ຈຳນົນ. ໃນວັນທີ 13 ຕຸລາ ຍັງມີເຜົ່າມົ້ງອີກກຸ່ມໜຶ່ງເຊິ່ງມີຫລາຍກວ່າ 400 ຄົນ ອອກມາຍອມຈຳນົນ ຕໍ່ເຈົ້າ

ຫນ້າທີ່ຢູ່ແຂວງຊຽງຂວາງ. ໃນຂະນະທີ່ບໍ່ໄດ້ມີລາຍງານວ່າໄດ້ມີການກະທຳຮູນແຮງຕໍ່ເຜົ່າມົ້ງດັ່ງ ກາວ, ລັດທະ ບານບໍ່ໄດ້ເອົາໃຈໄສ່ຕໍ່ພວກທີ່ເຂົ້າມອບຕົວ ແລະ ປະຕິເສດທີ່ຈະໃຫ້ຊາວຕ່າງປະເທດເຂົ້າ ຕິດຕາມ ເບິ່ງບັນຫາ. ໃນຕອນທ້າຍປີກໍ່ຍັງບໍ່ຮູ້ສະຖານະກາຳຂອງເຜົ່າມົ້ງກຸ່ມນີ້.

ຫຼາຍປີຜ່ານມາແລ້ວ ທີ່ລັດຖະບານໄດ້ກຳນົດນະໂຍບາຍທີ່ບໍ່ຄ່ອຍແນ່ນອນໃນການຊ່ວຍພວກກະບົດທີ່ເຂົ້າ ສະຫວາມີພັກຕໍ່ທາງການໃຫ້ສາມາດຕັ້ງຖິ່ນຖານໃໝ່ໄດ້. ອາດເວົ້າໄດ້ວ່າຢ່າງໜ້ອຍສຸດນະໂຍບາຍດັ່ງກ່າວ ແມ່ນເພື່ອທັນປຸ່ງນຄວາມເຂົ້າໃຈທີ່ວ່າ ລັດຖະບານໄດ້ພະຍາຍາມຂ້າພວກກະບົດທຸກຄົນ, ລັດຖະບານໄດ້ ໃຊ້ສະມາຊິກໃນຄອບຄົວຂອງພວກຕໍ່ຕ້ານ ຊຶ່ງຍັງອາໃສຢູ່ໃນປ່າ ແລະອະດີດຜູ້ຕໍ່ຕ້ານໃຫ້ເຂົ້າເຖິງກຸ່ມກະ ບົດ ເພື່ອຊັກຊວນໃຫ້ເຂົາເຈົ້າສະຫວາມີພັກ. ນັບແຕ່ທ້າຍຊຸມປີ 1990 ຫາຕົ້ນຊຸມປີ 2000 ກຸ່ມນ້ອຍທີ່ຮັບ ເອົາຂໍ້ສະເໜີຂອງລັດຖະບານໄດ້ຮັບການຊ່ວຍເຫຼືອເລັກນ້ອຍຈາກລັດຖະບານ ເພື່ອຕັ້ງຖິ່ນຖານໃໝ່ໂດຍ ສະເພາະພວກທີ່ຢູ່ແຂວງວຽງຈັນ, ບໍລິຄຳໄຊ, ຊຽງຂວາງ ແລະເຂດພິເສດໄຊສົມບູນ. ໃນບາງເຂດເຊັ່ນຢູ່ບໍລິ ຄຳໄຊແມ່ນງານນິລະໂທດກຳນີ້ຍັງລວມມີການຝຶກອົບຮົມວິຊາຊີບການໃຫ້ດິນ ແລະອຸປະກອນເພື່ອປູກຝັງ. ເຖິງຢ່າງໃດກໍຕາມ ມີບາງບ່ອນທີ່ການຊ່ວຍເຫຼືອນີ້ມີບໍ່ເຖິງເຄິ່ງໜຶ່ງຂອງຄຳໝັ້ນສັນຍາທີ່ໃຫ້ໄວ້.

ຍິ່ງກ່ວານັ້ນ ຍ້ອນການກະທຳຂອງພວກເຂົາເຈົ້າໃນເມື່ອກອນ, ພວກກະບົດທີ່ໄດ້ຮັບນິລະໂທດກຳຍັງຄົງ ເປັນຈຸດຂອງຄວາມສົງໃສ ແລະການກວດກາຂອງລັດຖະບານ.

ປົກກະຕິລັດຖະບານແມ່ນປະຕິເສດການສະເໜີຂອງຊຸມຊົນສາກົນທີ່ຈະຊ່ວຍພວກກະບົດທີ່ເຂົ້າມອບຕົວນີ້ ໂດຍກົງ, ແຕ່ກໍ່ອະນຸຍາດໃຫ້ອົງການ ສປຊ ແລະອົງການສາກົນອື່ນໆ ໄດ້ຊ່ວຍເຂົາເຈົ້າໃຕ້ແຜນງານ ໃຫຍ່ກວ່າ. (ໃຫ້ເບິ່ງພາກ 2. ງ.)

ລັດຖະບານຍັງຄົງສືບຕໍ່ປະຕິເສດບໍ່ອະນຸຍາດໃຫ້ຜູ້ຕິດຕາມເຫດການສາກົນເຂົາຢ້ຽມ ພວກກະບົດ 170 ທີ່ເຂົ້າມອບຕົວໃນຊວງເດືອນ ມິຖຸນາ 2005 ຫລືໃຫ້ການຊວ່ຍເຫລືອດ້ານອາຫານທີ່ເຄີຍສັນຍາໄວ້. ລັດຖະ ທຳມະນູນໄດ້ຂຽນວ່າຕ່າງປະເທດ ແລະບຸກຄົນທີ່ບໍ່ມີລັດຈະໄດ້ຖືກປົກປ້ອງໂດຍ “ຂໍ້ກຳນົດກົດໝາຍ” ແຕ່ ໃນພາກປະຕິບັດເຂົາເຈົ້າເລົ່ານີ້ບໍ່ໄດ້ຮັບການປົກປ້ອງໂດຍລັດຖະທຳມະນູນ.

**ການກະທຳທາລຸນ ແລະການແບ່ງແຍກໃນສັງຄົມ:**

ໃນສັງຄົມລາວລຸ່ມໄດ້ມີການຍອມຮັບຢ່າງກ້ວາງຂວາງ ແລະເພີ່ມທະວີຄວາມຮັກລະຫວ່າງຄົນເພດດຽວ ກັນ ເຖິງຢ່າງໃດກໍດີຍັງມີການແບ່ງແຍກທາງສັງຄົມ. ບໍ່ມີການຈຳແນກເປັນທາງການຕໍ່ຄົນທີ່ຕິດ ແລະເປັນ ພະຍາດເອດສ໌, ແຕ່ຍັງມີການຈຳແນກຈາກສັງຄົມຢູ່ ລັດຖະບານໄດ້ຕັ້ງໜ້າໃຫ້ສັງຄົມຍອມຮັບ ແລະເຂົ້າ ໃຈຜູ້ມີບັນຫາໃນພະຍາດນີ້ ແລະຕະຫຼອດປີໄດ້ທຳການລະດົມປຸກຈິດສຳນຶກເພື່ອສຶກສາອົບຮົມປະຊາຊົນ ແລະສົ່ງເສີມຄວາມເຂົ້າໃຈຕໍ່ຄົນທີ່ເປັນພະຍາດນີ້.

## ພາກ 6. ສິດທິຂອງກຳມະກອນ.

### ກ. ສິດທິໃນການຈັດຕັ້ງສະມາຄົມ.

ໃຕ້ກົດໝາຍແຮງງານ, ກຳມະບານສາມາດສ້າງຕັ້ງຂື້ນໄດ້ໃນບໍລິສັດເອກະຊົນ ຕາບໃດທີ່ການຈັດຕັ້ງນັ້ນ ດຳເນີນການພາຍໃຕ້ກອບສະຫະພັນກຳມະບານລາວ “ສກລ” ຊຶ່ງອົງການຮັບຮູ້ເປັນທາງການ ຊຶ່ງຢູ່ໃຕ້ການ

ຄວບຄຸມຂອງພັກປປລ. ເຖິງຢ່າງໃດກໍຕາມສະມາຊິກ ສກລ ຊຶ່ງມີທັງໝົດປະມານ 99,000 ແມ່ນເຮັດວຽກໃຫ້ພາກລັດ.

ລັດຖະບານເປັນຜູ້ວ່າຈ້າງສ່ວນຫຼວງຫຼາຍຂອງກໍາມະກອນທີ່ໄດ້ຮັບເງິນເດືອນ, ເຖິງແມ່ນສະພາບການນີ້ໄດ້ມີອັນປ່ຽນແປງພາຍຫຼັງທີ່ລັດຖະບານໄດ້ໂອນກໍາມະສິດບໍລິສັດລັດໃຫ້ແກ່ເອກະຊົນ ຫຼືບໍ່ກໍໄດ້ຫຼຸດຜ່ອນຈໍານວນຂອງຜູ້ອອກແຮງງານພາກລັດ. ຊາວໄຮ່ນາທີ່ຜະລິດເພື່ອກຸ້ມຕົນເອງກວມເອົາປະມານ 85% ຂອງກໍາລັງແຮງງານ.

## ຂ. ສິດທິໃນການຈັດຕັ້ງ ແລະຕໍ່ລອງລວມໝູ່

ຍັງບໍ່ມີສິດໃນການຈັດຕັ້ງ ແລະຕໍ່ລອງລວມໝູ່. ກົດໝາຍແຮງງານໄດ້ກໍານົດໄວ້ວ່າຂໍ້ຂັດແຍ່ງຈະຖືກແກ້ໄຂໂດຍຜ່ານຄະນະກໍາມະການຢູ່ບ່ອນເຮັດວຽກ ອັນປະກອບດ້ວຍຜູ້ໃຊ້ແຮງງານ, ຕາງໜ້າຂອງສະຫະພັນແຮງງານທ້ອງຖິ່ນ ແລະຕາງໜ້າຂອງ ສກລ ແລະຜູ້ຕັດສິນບັນຫາທີ່ຢູ່ກະຊວງແຮງງານ ແລະສະຫວັດດີການສັງຄົມ.

ອີງຕາມອີງການບໍ່ສັງກັດລັດ ແລະສະຖານທູດທີ່ຕັ້ງຢູ່ວຽງຈັນ, ກົດໝາຍດັ່ງກ່າວໂດຍທົ່ວໄປແລ້ວ ບໍ່ໄດ້ຖືກບັງຄັບໃຊ້ໂດຍກະຊວງແຮງງານ ໂດຍສະເພາະໃນສ່ວນທີ່ກ່ຽວຂ້ອງກັບທຸລະກິດຮ່ວມມືໃນຂະແໜງເອກະຊົນ.

ການນັດການຢຸດງານປະຫວັງບໍ່ໄດ້ຖືກຫ້າມໃນກົດໝາຍ, ແຕ່ລັດຖະບານຫ້າມການເຄື່ອນໄຫວບ່ອນທໍາລາຍລະບອບປົກຄອງ ຫຼືການປະທ້ວງເພື່ອສ້າງສະພາບຂາດສະຖຽນລະພາບ (ໃຫ້ເບິ່ງພາກ 2. ຂ). ຊຶ່ງເວົ້າແລ້ວບໍ່ສາມາດຈັດຕັ້ງການນັດຢຸດງານໄດ້, ແລະຕະຫຼອດປີກໍບໍ່ມີລາຍງານກ່ຽວກັບເລື່ອງນີ້.

ກົດໝາຍແຮງານໄດ້ກໍານົດວ່າຜູ້ໃຊ້ແຮງງານບໍ່ອາດໄລ່ຜູ້ອອກແຮງງານໄດ້ ຍ້ອນເຂົ້າເຄື່ອນໄຫວກິດຈະກໍາກໍາມະບານ, ຫຼືເມື່ອເຂົ້າຂໍຄວາມເປັນທໍາຕໍ່ນາຍຈ້າງ ກ່ຽວກັບການຂໍໃຫ້ມີການປະຕິບັດກົດໝາຍແຮງງານ, ຫຼືຂໍຄວາມຮ່ວມມືກັບທາງການກ່ຽວກັບການປະຕິບັດກົດໝາຍແຮງງານ ແລະການຂັດແຍ່ງແຮງງານ, ແລະກໍບໍ່ມີລາຍງານກ່ຽວກັບບັນຫາເລົ່ານີ້. ຄະນະກໍາມະການຕັ້ງຢູ່ບ່ອນເຮັດວຽກແມ່ນກົນໄກອັນໜຶ່ງ ທີ່ນໍາໃຊ້ເພື່ອແກ້ໄຂຄວາມຂັດຂ້ອງຂອງກໍາມະກອນ, ແຕ່ວ່າຍັງບໍ່ມີຂໍ້ມູນໃຫ້ຮູ້ວ່າຄະນະກໍາມະການດັ່ງກ່າວນີ້ໃນຕົວຈິງມີປະສິດທິຜົນຊໍ່າໃດ.

ມີເຂດປຸງແຕ່ງເພື່ອສົ່ງອອກຢູ່ເຂດນຶ່ງທີຍັງກໍາລັງປັບປຸງຢູ່. ມັນແມ່ນສວ່ນນຶ່ງຂອງເຂດເສດຖະກິດ ສະຫວັນເຊໂນ ຢູ່ແຂວງສະຫວັນນະເຂດ. ມີສາມບໍລິສັດທີ່ເຊັນສັນຍາວ່າຈະເຊົ່າທີ່ດິນເຂດນັ້ນ, ແຕ່ໃນຊວ່ງທ້າຍປີຍັງບໍ່ທັນມີການເຄື່ອນໄຫວໃນເຂດນີ້. ກົດຫມາຍແຮງງານຍັງຖືກໄຊ້ໃນເຂດນີ້.

## ຄ. ການຫ້າມແຮງງານແບບບັງຄັບ ແລະແຮງງານເກນ.

ກົດໝາຍແຮງງານຫ້າມແຮງງານແບບບັງຄັບ ຍົກເວັ້ນໃນເວລາສົງຄາມ ຫຼືເວລາມີໄພພິບັດແຫ່ງຊາດ ຊຶ່ງໃນໄລຍະດັ່ງກ່າວລັດອາດເກນແຮງງານ. ກົດໝາຍນີ້ຍັງຫ້າມແຮງງານບັງຄັບ ຫຼືເກນເອົາເດັກເຮັດວຽກ, ເຖິງຢ່າງໃດກໍຕາມມີລາຍງານວ່າຍັງມີແຮງງານປະເພດນີ້ຢູ່ (ເບິ່ງພາກ 5 ແລະ 6. ງ).

## ງ. ຫ້າມໃຊ້ແຮງງານເດັກ ແລະອາຍຸຕໍ່າສຸດສໍາລັບເຮັດວຽກ.

ໃຕ້ກົດໝາຍແຮງງານເດັກອາຍຸຕ່ຳກວ່າ 15 ປີ ບໍ່ສາມາດເຂົ້າເຮັດວຽກໄດ້, ເວັ້ນເສຍວ່າຈະເຮັດວຽກໃຫ້ຄອບຄົວ ແລະວຽກນັ້ນບໍ່ເປັນໄພອັນຕະລາຍ ຫຼືຍາກ. ເດັກຫຼາຍຄົນຊ່ວຍຄອບຄົວເຂົາ ເຈົ້າຕາມທົ່ງໄຮ່ທົ່ງນາ ຫຼືຫ້າງຮ້ານ, ແຕ່ແຮງງານເດັກບໍ່ອິຫຼືບໍ່ພົບເຫັນໃນໂຮງງານອຸດສາຫະກຳ. ມີລາຍງານວ່າໂຮງງານຕັດຫຍິບບາງບ່ອນໄດ້ນຳໃຊ້ເດັກຍິງອາຍຸຕ່ຳກວ່າເກນເຮັດວຽກ, ແຕ່ຈຳນວນກໍບໍ່ຫຼາຍ. ກະຊວງປ້ອງກັນຄວາມສະຫງົບ ແລະຍຸດຕິທຳມີຄວາມຮັບຜິດຊອບບັງຄັບໃຊ້ເງື່ອນໄຂຂອງກົດໝາຍນີ້, ແຕ່ວ່າການບັງຄັບໃຊ້ກົດໝາຍແມ່ນຂາດປະສິດທິຜົນຍ້ອນວ່າຂາດຜູ້ກວດກາແຮງງານ ແລະຊັບພະຍາກອນອື່ນໆ.

ກະຊວງປ້ອງກັນຄວາມສະຫງົບ ແລະຍຸດຕິທຳມີຄວາມຮັບຜິດຊອບບັງຄັບໃຊ້ເງື່ອນໄຂຂອງກົດໝາຍນີ້, ແຕ່ວ່າການບັງຄັບໃຊ້ກົດໝາຍແມ່ນຂາດປະສິດທິຜົນຍ້ອນວ່າຂາດຜູ້ກວດກາແຮງງານ ແລະຊັບພະຍາກອນອື່ນໆ.

## ຈ. ເງື່ອນໄຂເຮັດວຽກທີ່ຮັບໄດ້.

ຄ່າແຮງງານຕ່ຳສຸດຕໍ່ວັນແມ່ນປະມານ 2.90 ໂດລາສະຫະລັດ (29.000 ກີບ) ເຊິ່ງບໍ່ພຽງພໍເພື່ອໃຊ້ກັບກຳມະກອນເອງ ແລະຄອບຄົວ.  ພະນັກງານລັດສ່ວນຫຼວງຫຼາຍມີເງິນເດືອນບໍ່ພຽງພໍ. ລູກຈ້າງລາຍວັນທີ່ເຮັດເປັນບາງໜ້າວຽກ ເຊິ່ງສ່ວນຫຼາຍແມ່ນຢູ່ບ່ອນກໍ່ສ້າງແມ່ນໄດ້ຮັບເງິນແຮງງານຕ່ຳກວ່າອັດຕາຕ່ຳສຸດ.

ກົດໝາຍກຳນົດອາທິດເຮັດວຽກບໍ່ໃຫ້ກາຍ 48 ຊົ່ວໂມງ (36 ຊົ່ວໂມງ ສຳລັບວຽກທີ່ອັນຕະລາຍ) ແລະຕ້ອງໃຫ້ມີວັນພັກຢ່າງໜ້ອຍ 1 ວັນຕໍ່ໜຶ່ງອາທິດ.

ກົດໝາຍໄດ້ກຳນົດເງື່ອນໄຂເຮັດວຽກແບບປອດໄພ ແລະໃຫ້ຄ່າແຮງງານສູງກວ່າປົກກະຕິ ໃນກໍລະນີເຮັດວຽກທີ່ອັນຕະລາຍ. ນາຍຈ້າງແມ່ນຮັບຜິດຊອບຕໍ່ການຊົດເຊີຍກຳມະກອນໃນກໍລະນີທີ່ມີການບາດເຈັບ ຫຼືຕາຍໃນເວລາເຮັດວຽກ, ຊຶ່ງເປັນຂໍ້ຮຽກຮ້ອງທີ່ປົກກະຕິແລ້ວຜູ້ໃຊ້ແຮງງານຈະປະຕິບັດໃນພາກສ່ວນເສດຖະກິດໃນລະບົບ. ກົດໝາຍຍັງກຳນົດຄວາມຮັບຜິດຊອບຂອງນາຍຈ້າງຢ່າງກວ້າງຂວາງໃນເມື່ອມີການເສຍອົງຄະໃນເວລາທຳງານ, ແລະບັນຫາດັ່ງກ່າວໄດ້ຖືກປະຕິບັດຢ່າງພຽງພໍ. ເຖິງແມ່ນວ່າໃນໄລຍະ 2-3 ປີທີ່ຜ່ານມານີ້ມີການເພີ່ມທະວີການກວດກາສະຖານທີ່ບ່ອນເຮັດວຽກ, ກະຊວງແຮງງານ ແລະສະຫວັດດີການສັງຄົມທີ່ຍັງຂາດພະນັກງານ ແລະຊັບພະຍາກອນງົບປະມານ ເພື່ອບັງຄັບໃຊ້ກົດໝາຍແຮງງານຢ່າງມີປະສິທິຜົນ. ກົດໝາຍແຮງງານບໍ່ໄດ້ບັນຍັດເງື່ອນໄຂສະເພາະທີ່ຈະອະນຸຍາດໃຫ້ກຳມະກອນອອກຈາກສະພາບອັນຕະລາຍໂດຍທີ່ຈະບໍ່ຖືກໄລ່ ອອກການ.

ໃນປະເທດ ຍັງມີຜູ້ເຂົ້າເມືອງຜິດກົດໝາຍຈຳນວນໜຶ່ງ, ສະເພາະຢ່າງຍິ່ງພວກມາຈາກຫວຽດນາມ ແລະຈີນ ຊຶ່ງເຂົາເຈົ້າເຫລົ່ານີ້ໄດ້ຕົກໃນຄວາມສ່ຽງ ໃນການຖືກເອົາລັດເອົາປຽບຈາກນາຍຈ້າງ. ບໍ່ຄືດັ່ງປີ 2005 ບໍ່ມີລາຍງານວ່າເດັກນ້ອຍຫວຽດທີ່ເຂົ້າເມືອງໂດຍຜິດກົດໝາຍ ໄດ້ມາຂາຍເຄື່ອງຂອງຕາມຖະໜົນທີ່ວຽງຈັນ.